رئاسة الشؤون الدينية
بالمسجد الحرام والمسجد النبوي

ลาว | لاو | رِسَالَةٌ فِي الدِّمَاءِ الطَّبِيعِيَّةِ لِلنِّسَاءِ

ບົດຄວາມອ່ານດ້ວຍເລື່ອງ ເລືອດປະຈຳເດືອນຂອງ ແມ່ຍິງ

ປະພັນໂດຍ: ເຊັຄ ອັລວາມະຮ໌
ມຸຮຳມັດ ບິນ ຊໍແລະຫ໌ ອັລອຸໄຊມິນ

رِسَالَةٌ فِي الدِّمَاءِ الطَّبِيعِيَّةِ لِلنِّسَاءِ

ບົດຄວາມວ່າດ້ວຍເລື່ອງ ເລືອດປະຈຳເດືອນຂອງແມ່ຍິງ

بِقَلَمِ فَضِيلَةِ الشَّيْخِ العَلَّامَةِ
مُحَمَّدِ بْنِ صَالِحٍ العُثَيْمِينِ
غَفَرَ اللَّهُ لَهُ وَلِوَالِدَيْهِ وَلِلمُسْلِمِينَ

ປະພັນໂດຍ: ເຊັຄ ອັລລາມະຮ໌
ມູຮຳມັດ ບິນ ຈໍແລະຫ໌ ອັລອຸໄຊມີນ
ຂໍອັລລໍຫ໌ຊົ່ງອະໄພໂທດ ໃຫ້ພໍ່ແມ່ຂອງທ່ານ ແລະ ມຸດສະລິ
ດທຸກໆ ທ່ານ

بِسْمِ اللهِ الرَّحْمَنِ الرَّحِيمِ

ບົດຄວາມອ່ານດ້ວຍເລື່ອງ ເລືອດປະຈຳເດືອນຂອງແມ່ຍິງ

ດ້ວຍພຣະນາມຂອງອັລລ໋ອ ຜູ້ຊົງກະລຸນາປຣາຫນີ ຜູ້ຊົງເມດຕາສະເຫມີ

ມວນການສັນລະເສີນເປັນສິດແດ່ອັລລ໋ອ ພວກເຮົາສັນລະເຊີນຕໍ່ພຣະອົງ ແລະ ຂໍຄວາມຄຸ້ມຄອງຊ່ອຍເຫລືອຈາກພຣະອົງ ພວກເຮົາສະແວງຫາການອະໄພຍະໂທດຈາກພຣະອົງ ແລະ ພວກເຮົາຈະກັບເນື້ອກັບໂຕໄປຫາພຣະອົງ, ພວກເຮົາຂໍຄວາມຄຸ້ມຄອງຈາກພຣະອົງຈາກຄວາມຊົ່ວຂອງພວກເຮົາ ແລະ ການກະທຳທີ່ບໍ່ດີຂອງພວກເຮົາ, ຜູ້ໃດກ່ຕາມທີ່ອັລລ໋ອໄດ້ນຳທາງໃຫ້ແກ່ເຂົາ ກ່ບໍ່ມີໃຜທີ່ຈະເຮັດໃຫ້ເຂົາຫຼົງທາງໄດ້, ແລະ ໃຜກ່ຕາມທີ່ພຣະອົງເຮັດໃຫ້ເຂົາຫຼົງທາງ ກ່ບໍ່ມີໃຜໃຫ້ທາງນຳກັບເຂົາໄດ້. ແລະ ຂ້ອຍຂໍປະຕິຍານວ່າບໍ່ມີພຣະເຈົ້າອື່ນໃດທີ່ຄວນແກ່ການເຄົາລົບພັກດີ ນອກຈາກອັລລ໋ອພຣະອົງດຽວ ໂດຍບໍ່ມີພາຄີໃດໆ ກັບພຣະອົງ ແລະ ຂ້ອຍຂໍປະຕິຍານວ່າ ມຸຮຳມັດເປັນບ່າວຂອງພຣະອົງ ແລະ ເປັນສາສະນະທູດຂອງພຣະອົງ, ຂໍການສະດຸດີແຫ່ງອັລລ໋ອ ແລະ ຄວາມສັນຕິສຸກປອດໄພຈົ່ງມີແດ່ທ່ານ ແລະ ບັນດາຍາດຕິພີ່ນ້ອງຂອງທ່ານ ຕະຫຼອດຈົນຊ່ຣາບ໋ະຫ໌ມິດສະຫາຍຂອງທ່ານທຸກຄົນ ລວມເຖິງຜູ້ຈະເວີນຮອຍຕາມພວກເຂົາດ້ວຍກັບຄວາມດີງາມ ຕາບຈົນຮອດວັນແຫ່ງການຕັດສິນ.

ຕໍ່ໄປນີ້: ແທ້ຈິງແລ້ວ, ບັນດາເລືອດທີ່ເກີດຂຶ້ນກັບແມ່ຍິງ ອັນໄດ້ແກ່ ເລືອດປະຈຳເດືອນ, ເລືອດທີ່ຜິດປົກກະຕິ (ອິສຕິຮາດາະ), ແລະ ເລືອດຫລັງການເກີດລູກ, ລ້ວນແຕ່ເປັນເລື່ອງທີ່ສຳຄັນທີ່ຈຳເປັນຕ້ອງໄດ້ຮັບການຊີ້ແຈງ ແລະ ເຮັດຄວາມເຂົ້າໃຈກ່ຽວກັບຂໍ້ກຳຫນົດຂອງມັນ, ພ້ອມທັງຈຳແນກລະຫວ່າງຄວາມຄິດເຫັນທີ່ຜິດພາດ ແລະ ຄວາມຖືກຕ້ອງຂອງບັນດານັກວິຊາການໃນເລື່ອງດັ່ງກ່າວ. ແລະ ຖືເປັນຫຼັກໃນການຕັດສິນວ່າສິ່ງໃດມີນ້ຳຫນັກ ຫຼື ອ່ອນນ້ັນ ຕ້ອງອີງຕາມສິ່ງທີ່ໄດ້ກ່າວໄວ້ໃນອັລກຸຣອານ ແລະ ຊຸນນະຫ໌.

1- ເພາະວ່າທັ້ງສອງນ້ັນ ເປັນແຫຼ່ງທີ່ມາທີ່ເປັນພື້ນຖານຂອງຂໍ້ກຳຫນົດຕ່າງໆ ຂອງອັລລໍຫ໌ ຊຸບຮານະຮຸ ອະຕະອາລາ, ທີ່ພຣະອົງໄດ້ບັນຊາໃຫ້ປວງບ່າວຂອງພຣະອົງເຄົາລົບພັກດີ ແລະ ໄດ້ກຳນົດເປັນໜ້າທີ່ໃຫ້ແກ່ພວກເຂົາ.

2- ແລະ ເພາະວ່າການຍຶດໝ້ັນໃນອັລກິຕາບ ແລະ ອັລຊຸນນະຫ໌ ເປັນທີ່ມາຂອງຄວາມສະງົບແຫ່ງຈິດໃຈ, ຄວາມເປີດກວ້າງຂອງຫົວໃຈ, ຄວາມສະບາຍໃຈ ແລະ ການປົດເປື້ອງພັນທະ.

3- ແລະ ຍ້ອນວ່າສິ່ງອື່ນນອກເໜືອຈາກທັ້ງສອງນ້ັນ ເປັນພຽງສິ່ງທີ່ຕ້ອງນຳຫຼັກຖານມາຢັ້ງຢືນໃຫ້, ບໍ່ແມ່ນສິ່ງທີ່ຖືກນຳມາເປັນຫຼັກຖານ.

ເພາະວ່າ ບໍ່ມີຫຼັກຖານໃດໆ ນອກຈາກໃນຄຳວັດຂອງອັລລໍຫ໌ ຕະອາລາ ແລະ ຄຳກ່າວຂອງຣໍຊູລຂອງພຣະອົງ ຊັລລັລລໍຮຸ ອະໄລຮິ ອະສັລລຳ, ແລະເຊ່ັນດຽວກັນ ຄຳກ່າວຂອງບັນດາຜູ້ຮູ້ຈາກຊາວສໍຮາບະຫ໌ ຕາມທັດສະນະທີ່ມີນ້ຳຫນັກ ແລະ ຖືກຕ້ອງກວ່າ, ໂດຍມີເງື່ອນໄຂວ່າຈະຕ້ອງບໍ່ມີສິ່ງໃດຂັດແຍ້ງກັບມັນທັ້ງໃ

ນຄຳພີ ອັລ-ກຸຣອານ ແລະ ຊຸນນະຫ໌. ແລະ ຈະຕ້ອງບໍ່ມີຄຳເວົ້າ ຂອງສ່ຣາບະທ່ານອື່ນມາຂັດແຍ້ງ, ຖ້າຫາກມີສິ່ງໃດໃນຄຳພີ ອັ ລ-ກຸຣອານ ແລະ ແບບຢ່າງຂອງທ່ານນະບີ ທີ່ຂັດກັບຄຳເວົ້ານັ້ ນ, ກໍ່ຈຳເປັນຕ້ອງລະຖິ້ມ ແລະ ປະຕິບັດຕາມສິ່ງທີ່ຢູ່ໃນຄຳພີ ອັ ລ-ກຣຸອານ ແລະ ແບບຢ່າງຂອງທ່ານນະບີ. ແລະ ຖ້າຫາກຄຳ ເວົ້າຂອງສ່ຫາບະຫ໌ທ່ານອື່ນຂັດແຍ້ງ ກໍຈຳເປັນຕ້ອງຊັ່ງນ້ຳໜັ ກລະຫວ່າງສອງທັດສະນະນັ້ນ ແລະ ໃຫ້ຍຶດຖືເອົາທັດສະນະທີ່ມີ ນ້ຳໜັກກວ່າ, ຈາກຫຼັກຖານທີ່ອັລລ໋ໜ໌ໄດ້ກ່າວວ່າ:

﴿...فَإِن تَنَٰزَعۡتُمۡ فِي شَيۡءٖ فَرُدُّوهُ إِلَى ٱللَّهِ وَٱلرَّسُولِ إِن كُنتُمۡ تُؤۡمِنُونَ بِٱللَّهِ وَٱلۡيَوۡمِ ٱلۡأٓخِرِۚ ذَٰلِكَ خَيۡرٞ وَأَحۡسَنُ تَأۡوِيلًا﴾

(ແຕ່ຖ້າພວກເຈົ້າຂັດແຍ້ງກັນໃນສິ່ງໃດ ກໍຈົ່ງນຳສິ່ງນັ້ນກັ ບຄືນໄປຫາອັລລ໋ໜ໌ ແລະ ຣ໋ຊູລ ຫາກພວກເຈົ້າສັດທາຕໍ່ອັລລ໋ ໜ໌ ແລະ ວັນອາຄິເຣາະຫ໌ ນັ້ນແຫລະ ເປັນສິ່ງທີ່ດີຍິ່ງ ແລະ ເປັນ ການກັບໄປທີ່ສວຍງາມ)

[ສຸເຣາະຫ໌ ອັນນິສາ : 59].

ນີ້ແມ່ນຂໍ້ຄວາມສະບັບຫຍໍ້ໃນການອະທິບາຍສິ່ງທີ່ຈຳເປັນ ກ່ຽວກັບເລືອດເໜ່ົານີ້ ແລະ ຂໍ້ກຳນົດຂອງມັນ, ປະກອບມີຫົວ ຂໍ້ດັ່ງຕໍ່ໄປນີ້:

- ພາກທີໜຶ່ງ: ອ່າດ້ວຍຄວາມຫມາຍ ແລະ ວິທະຍາປັນຍາ ຂອງເລືອດປະຈຳເດືອນ.

- ພາກທີ່ສອງ: ເວລາ ແລະ ໄລຍະຂອງເລືອດປະຈຳເດືອນ.

- ພາກທີ່ສາມ: ອ່າດ້ວຍບັນຫາຕ່າງໆ ທີ່ກ່ຽວຂ້ອງກັບເລືອ ດປະຈຳເດືອນ.

- ພາກທີສີ່: ອ່າດ້ວຍຂໍ້ກ່ານົດຕ່າງໆ ກ່ຽວກັບເລືອດປະຈຳເດືອນ.

- ພາກທີຫ້າ: ວ່າດ້ວຍເລື່ອງອິສຕີຣາເດາະຫ໌ (ເລືອດທີ່ຜິດປົກກະຕິຂອງແມ່ຍິງ) ແລະ ຂໍ້ກ່າຫນົດຕ່າງໆ ຂອງມັນ.

- ພາກທີຫົກ: ອ່າດ້ວຍເລືອດຫລັງການເກີດລູກ ແລະ ຂໍ້ກ່າຫນົດຕ່າງໆ ຂອງມັນ.

- ພາກທີ່ເຈັດ: ອ່າດ້ວຍການນ່າໃຊ້ສິ່ງທີ່ຢັບຢັ້ງເລືອດປະຈຳເດືອນ ຫຼື ກະຕຸ້ນໃຫ້ປະຈຳເດືອນມາ, ແລະ ສິ່ງທີ່ປ້ອງກັນການຖືພາ ຫຼື ເຮັດໃຫ້ແທ້ງລູກ.

ບົດທີ່ໜຶ່ງ: ຄວາມຫມາຍ ແລະ ວິທະຍາປັນຍາຂອງການມີປະຈຳເດືອນ

ເຮດ ທາງດ້ານພາສາ: ຫມາຍເຖິງການໄຫລ, ແລະ ການໄຫລໄປຂອງສິ່ງໃດໜຶ່ງ.

ໃນທາງບົດບັນຍັດສາສະຫນາ: ຫມາຍເຖິງເລືອດທີ່ເກີດຂຶ້ນກັບເພດຫຍິງຕາມທຳມະຊາດ ໂດຍບໍ່ມີສາເຫດ ໃນຊ່ວງເວລາທີ່ກ່ານົດໄວ້. ມັນເປັນເລືອດທຳມະຊາດທີ່ບໍ່ໄດ້ເກີດຈາກພະຍາດ, ບາດແຜ, ການຕົກ, ຫຼື ການເກີດລູກ. ແລະ ເນື່ອງຈາກວ່າມັນເປັນເລືອດທຳມະຊາດ, ມັນຈຶ່ງມີຄວາມແຕກຕ່າງກັນໄປຕາມສະພາບຂອງເພດຫຍິງ, ສະພາບແວດລ້ອມ ແລະ ພູມອາກາດຂອງນາງ; ດັ່ງນັ້ນ, ຜູ້ຍິງຈຶ່ງມີຄວາມແຕກຕ່າງກັນໃນເລື່ອງນີ້ຢ່າງຫຼວງຫຼາຍ ແລະ ເຫັນໄດ້ຊັດເຈນ!.

ຫົກມະຮ໌ໃນເລື່ອງນີ້ກ່ຄື: ເມື່ອເດັກທາລົກຕອນທີ່ຢູ່ໃນຄັນມານດາ, ລາວບໍ່ສາມາດໄດ້ຮັບອາຫານແບບດຽວກັບຄົນທີ່ຢູ່ພາຍນອກໄດ້, ແລະ ເ◌ຖິງແມ້ຜູ້ທີ່ມີຄວາມເມດຕາຕໍ່ລາວຫຼາ

ຍທີ່ສຸດກໍ່ບໍ່ສາມາດສົ່ງອາຫານໃດໆ ໃຫ້ແກ່ລາວໄດ້. ດ້ວຍເຫດ ນີ້, ອັລລ໋ອ ຈຶ່ງໄດ້ຊົງບັນດານສ້າງຂອງເຫລວທີ່ມີລັກສະນະເປັນເລືອດໃນຮ່າງກາຍຂອງແມ່ຍິງ ເພື່ອເປັນອາຫານໃຫ້ແກ່ທາ ລົກໃນຄັນມານດາ ໂດຍບໍ່ຈຳເປັນຕ້ອງກິນ ແລະ ຍ່ອຍອາຫານ , ໂດຍເລືອດນັ້ນຈະຊຶມຜ່ານທາງສາຍບືເຂົ້າສູ່ຮ່າງກາຍຂອງລາ ອ ແລະ ໄຫລວຽນໄປຕາມເສັ້ນເລືອດຕ່າງໆ ເພື່ອຫຼໍ່ລ້ຽງຮ່າງກາ ຍຂອງລາວ. ມະຫາບໍລິສຸດຍິ່ງຄືອັລລ໋ອ, ຜູ້ຊົງເປັນເລີດແຫ່ງບັ ນດາການສ້າງ.

ນີ້ຄືວິທະປັນຍາ (الحكمة) ຂອງການມີເລືອດປະຈຳເດືອນ; ດ້ ວຍເຫດນີ້ ເມື່ອຜູ້ຍິງຖືພາ ເລືອດປະຈຳເດືອນຂອງນາງກໍ່ຈະຢຸ ດ ແລະ ຈະບໍ່ມີອີກນອກຈາກກໍ່ລະນີທີ່ເກີດຂຶ້ນໄດ້ຍາກ, ໃນທຳ ນອງດຽວກັນ ບັນດາແມ່ທີ່ໃຫ້ນົມລູກກໍ່ມີສ່ວນໜ້ອຍທີ່ຈະມີ ປະຈຳເດືອນ ໂດຍສະເພາະໃນໄລຍະເລີ່ມຕົ້ນຂອງການໃຫ້ນົມ ລູກ.

ບົດທີ່ສອງ : ເວລາ ແລະ ໄລຍະຂອງເລືອດປະຈຳເດືອນ

ການກ່າວໃນບົດນີ້ມີສອງປະການຄື:

ປະເດັນທີ່ໜຶ່ງ: ກ່ຽວກັບອາຍຸທີ່ເລືອດປະຈຳເດືອນຈະມາ.

ປະເດັນທີ່ສອງ: ໄລຍະເວລາຂອງເລືອດປະຈຳເດືອນ.

ສຳລັບປະເດັນທຳອິດ: ຊ່ວງອາຍຸ ໂດຍສ່ວນຫຼາຍຈະມີເລືອ ດປະຈຳເດືອນແມ່ນຢູ່ໃນລະຫວ່າງ ສິບສອງປີ ຫາ ຫ້າສິບປີ, ແ ລະ ບາງທີຜູ້ຍິງອາດຈະມີປະຈຳເດືອນກ່ອນ ຫຼື ຫຼັງຈາກນັ້ນ, ທັ ງນີ້ກໍ່ຂຶ້ນຢູ່ກັບສະພາບຮ່າງກາຍ, ສະພາບແວດລ້ອມ ແລະ ສະ ພາບອາກາດທີ່ນາງພັກອາໄສ.

ບັນດານັກວິຊາການ (ຂໍພຣະອົງອັລລ໋ອ ຊົງເມດຕາພວກທ່ານ) ໄດ້ມີທັດສະນະທີ່ແຕກຕ່າງກັນວ່າ: ອາຍຸຂອງການມີເລືອດປະຈຳເດືອນນັ້ນມີຂອບເຂດກຳນົດທີ່ແນ່ນອນແມ່ນບໍ?, ໂດຍທີ່ຜູ້ຍິງຈະບໍ່ມີເລືອດປະຈຳເດືອນກ່ອນ ຫຼື ຫຼັງຈາກອາຍຸດັ່ງກ່າວ, ແລະ ເລືອດທີ່ອອກມາກ່ອນ ຫຼື ຫຼັງຈາກນັ້ນ ຖືວ່າເປັນເລືອດເສຍ ບໍ່ແມ່ນເລືອດປະຈຳເດືອນ?

ບັນດານັກວິຊາການມີຄວາມເຫັນທີ່ແຕກຕ່າງກັນໃນເລື່ອງດັ່ງກ່າວ; ທ່ານ ອັດ-ດາຣິມີ ຫຼັງຈາກທີ່ໄດ້ກ່າວເຖິງຄວາມເຫັນທີ່ແຕກຕ່າງກັນເຫຼົ່ານັ້ນແລ້ວ - ໄດ້ກ່າວວ່າ: ທັງໝົດນີ້ໃນທັດສະນະຂອງຂ້າພະເຈົ້າແລ້ວແມ່ນຜິດພາດ! ເພາະວ່າບັນທັດຖານໃນເລື່ອງທັງໝົດນີ້ແມ່ນກັບໄປສູ່ການມີຢູ່ຂອງມັນ, ດັ່ງນັ້ນ ປະລິມານໃດກໍຕາມທີ່ປາກົດຂຶ້ນ ໃນສະພາບໃດ ແລະ ອາຍຸເທົ່າໃດກໍຕາມ ກໍຈຳເປັນຕ້ອງຖືວ່າມັນເປັນເລືອດປະຈຳເດືອນ ແລະ ອັລລ໋ອເປັນຜູ້ຊົງຮູ້ດີທີ່ສຸດ[1].

ແລະສິ່ງທີ່ທ່ານ ອັດ-ດາຣິມີ ໄດ້ກ່າວມານີ້ຄືທັດສະນະທີ່ຖືກຕ້ອງ, ຊຶ່ງເປັນທັດສະນະທີ່ຖືກເລືອກໂດຍ ໄລຄ໌ຄຸລອິສລາມ ອິບນຸ ໄຕມິຍະຫ໌[2],

ດັ່ງນັ້ນ, ເມື່ອໃດກໍຕາມທີ່ເພດຍິງມີເລືອດປະຈຳເດືອນ, ນາງກໍຈະຖືກນັບວ່າເປັນຜູ້ຍິງທີ່ມີປະຈຳເດືອນ, ເຖິງແມ່ນວ່ານາງຈະມີອາຍຸຕ່ຳກວ່າເກົ້າປີ ຫຼື ສູງກວ່າຫ້າສິບປີກໍຕາມ. ນັ້ນກໍເພ

---

[1] ອະຫ໌ກາມ ອັລ-ມຸຕະໄຫຍິເຣາະຫ໌ ໃນບົດ ອັລ-ເຮດ, ຂອງອັດ-ດາຣິມີ (ຫນ້າ :17).

[2] ບັນທຶກໂດຍ ອັລບຸກຄ໌ຣີ: ເລື່ອງ ການມີປະຈຳເດືອນ, ຫົວຂໍ້: ແມ່ຍິງທີ່ມີປະຈຳເດືອນປະກອບພິທີກຳທັງໝົດໄດ້ຍົກເວັ້ນການຕໍ່ວາຟຮອບບ້ານຂອງພຣະອົງ, ເລກທີ່ (305), ແລະ ມຸສລິມ: ເລື່ອງ ການປະກອບພິທີຫັຈ, ຫົວຂໍ້: ການອະທິບາຍຮູບແບບຕ່າງ ໆ ຂອງການຄອງອິຫ໌ຣອມ, ເລກທີ່ (1211).

າະວ່າ ບົດບັນຍັດທີ່ກ່ຽວກັບເລືອດປະຈຳເດືອນນັ້ນ, ພຣະອົງອັ ລລໍ ແລະ ທ່ານຣໍຊູລຂອງພຣະອົງ ໄດ້ຜູກພັນມັນໄວ້ກັບການ ເກີດຂຶ້ນຂອງມັນ, ແລະ ບໍ່ໄດ້ກຳຫນົດອາຍຸທີ່ແນ່ນອນໄວ້. ດັ່ງ ນັ້ນ ຈຶ່ງເປັນການຈຳເປັນ (ວາຈິບ) ທີ່ຈະຕ້ອງອ້າງອີງເຖິງການ ມີ ແລະ ການເກີດຂຶ້ນຂອງມັນ ເຊິ່ງບົດບັນຍັດໄດ້ຖືກຜູກພັນໄ ວ້ ແລະ ການກຳຫນົດດ້ວຍອາຍຸທີ່ແນ່ນອນນັ້ນ ຈຳເປັນຕ້ອງ ມີຫຼັກຖານຈາກຄຳພີ ຫຼື ຊຸນນະຫ໌, ເຊິ່ງບໍ່ມີຫຼັກຖານໃດ ໆ ໃນເ ລື່ອງດັ່ງກ່າວ.

ສ່ວນອ່າປະເດັນທີສອງ ແມ່ນ ໄລຍະເວລາຂອງເລືອດປະຈຳ ເດືອນ

ກ່າວຄື: ກຳຫນົດໄລຍະເວລາຂອງມັນ.

ບັນດານັກວິຊາການມີຄວາມຄິດເຫັນທີ່ແຕກຕ່າງກັນໃນເ ລື່ອງນີ້ຢ່າງຫຼວງຫຼາຍ ເຊິ່ງມີປະມານ 6 ຫຼື 7 ທັດສະນະ, ທ່ານ ອິ ບນຸ ອັລ-ມຸນຊິຣ ເຣາະຫິມະຮຸລລໍຮ໌ ໄດ້ກ່າວວ່າ: ນັກວິຊາການກຸ່ ມຫນຶ່ງໄດ້ກ່າວວ່າ: ບໍ່ມີການກຳນົດໄລຍະເວລາທີ່ສັ້ນທີ່ສຸດ ແລ ະ ຍາວທີ່ສຸດຂອງການມີປະຈຳເດືອນເປັນຈຳນວນມື້[1].

ຂ້າພະເຈົ້າຂໍກ່າວວ່າ: ຄຳກ່າວນີ້ກໍ່ເໝືອນກັບຄຳກ່າວຂອງ ທ່ານ ອັດ-ດາຣິມີ ທີ່ກ່າວມາກ່ອນໜ້ານີ້, ແລະ ເປັນທັດສະນະ ທີ່ຖືກເລືອກຂອງ ໄລຣ໌ ອັລ-ອິສລາມ ອິບນຸ ໄຕມິຍະຫ໌, ແລະເປັ ນທັດສະນະທີ່ຖືກຕ້ອງ; ເພາະມີຫຼັກຖານຢັ້ງຢືນຈາກອັລ-ກີຕາ ບ, ອັສ-ສຸນນະຫ໌ ແລະ ການພິຈາລະນາ.

---

[1] ບັນທຶກໂດຍອັລບຸກຄ໌ຣີ: ໜ້ງສື ອັລ-ອຸມເຣາະຫ໌, ຫ໌ວຂໍ້ ຜົນຕອບແທນຂອງອຸມເຣາະຫ໌ຕາມ ຄວາມລຳບາກ, ເລກທີ່ (1662), ແລະ ທ່ານມຸສລິມ: ໜ້ງສື ອັລຫ້ຈ, ຫ໌ວຂໍ້ ການຊີ້ແຈງຮູບ ແບບຕ່າງ ໆ ຂອງການຄອງອີຫ໌ຣອມ, ເລກທີ່ (1211).

ຫຼັກຖານຂໍ້ທີ່ໜຶ່ງຄື: ຄຳກ່າວຂອງອັລລໍ່ຫ໌ ຜູ້ຊົງສູງສົ່ງ:

﴿وَيَسۡـَٔلُونَكَ عَنِ ٱلۡمَحِيضِۖ قُلۡ هُوَ أَذٗى فَٱعۡتَزِلُواْ ٱلنِّسَآءَ فِي ٱلۡمَحِيضِ وَلَا تَقۡرَبُوهُنَّ حَتَّىٰ يَطۡهُرۡنَۖ...﴾

ຄວາມວ່າ: (ແລະ ພວກເຂົາຖາມເຈົ້າກ່ຽວກັບເລືອດປະຈຳເດືອນ, ຈົ່ງກ່າວເຖີດວ່າ ມັນເປັນສິ່ງສົກກະປົກ, ດັ່ງນັ້ນ ພວກເຈົ້າຈົ່ງອອກຫ່າງຈາກບັນດາສະຕີໃນຂະນະທີ່ນາງມີປະຈຳເດືອນ ແລະ ຢ່າເຂົ້າໃກ້ພວກນາງຈົນກວ່າພວກນາງຈະສະອາດ...) [ສູເຣາະຫ໌ ອັລ-ບາກ່ເຣາະຫ໌: 222]. ດັ່ງນັ້ນ ອັລລໍ່ຫ໌ຈຶ່ງໄດ້ກຳໜົດໃຫ້ຂອບເຂດຂອງການຫ້າມນັ້ນ ຄືການກຳໜົດສະພາບຂອງເລືອດປະຈຳເດືອນ, ແລະ ພຣະອົງບໍ່ໄດ້ກຳໜົດໃຫ້ຂອບເຂດນັ້ນເປັນການຜ່ານໄປຂອງໜຶ່ງວັນກັບໜຶ່ງຄືນ, ຫຼື ສາມວັນ, ຫຼື ສິບຫ້າວັນ, ດັ່ງນັ້ນ ສິ່ງນີ້ຈຶ່ງເປັນການຊີ້ໃຫ້ເຫັນວ່າ ເຫດຜົນຂອງຂໍ້ກຳໜົດດັ່ງກ່າວນັ້ນຂຶ້ນຢູ່ກັບການມີ ຫຼື ບໍ່ມີຂອງເລືອດປະຈຳເດືອນ. ເມື່ອໃດທີ່ເລືອດປະຈຳເດືອນມາ, ຂໍ້ກຳນົດກໍຈະມີຜົນ, ແລະ ເມື່ອໃດທີ່ນາງໝົດໄລຍະຈາກມັນ, ຂໍ້ກຳນົດຕ່າງໆ ກໍຈະໝົດໄປ.

ຫຼັກຖານຂໍ້ທີ່ສອງ : ດັ່ງທີ່ມີລາຍງານທີ່ຖືກຕ້ອງໃນປຶ້ມຊ່ໍຮີ ຫ໌ມຸສລິມວ່າ ທ່ານນະບີ ຊ່ໍລລັລລ່ໍຮຸ ອະໄລຮິ ອະສັລລ່ໍາ ໄດ້ກ່າວແກ່ທ່ານນາງອາອິຊະຫ໌ (ໃນຂະນະທີ່ນາງກຳລັງມີປະຈຳເດືອນ ແລະ ຢູ່ໃນສະພາບຄອງອິຫ໌ຣອມເພື່ອທຳອຸມເຣາະຫ໌) ວ່າ:

«افْعَلِي مَا يَفْعَلُ الْحَاجُّ، غَيْرَ أَنْ لَا تَطُوفِي بِالْبَيْتِ حَتَّى تَطْهُرِي». قَالَتْ: فَلَمَّا كَانَ يَوْمُ النَّحْرِ طَهُرَتْ، فَأَفَاضَتْ.

(ເຈົ້າຈົ່ງປະຕິບັດທຸກຢ່າງເໝືອນດັ່ງຜູ້ເຮັດຮັจย์, ยักเอ้นการต่อาฟธอบอิหาบกะบะห์ จันกอ่าเจ้าจะสะอาด). นางได้ก่าออ่า: เมื่อธอดอันนะหัธ (อันแห่งการเฉื่อด) นางก่สะอาดแล้อ, นางจึ่งได้ไปต่อาฟทัดแทน. ทะดิฮ [1].

ແລະ ໃນບັນທຶກຂອງທ່ານອິຫມ່ານທັ້ງສອງ ແທ້ຈິງທ່ານນະບີ -ຊ່ລລັລລ໋ຮຸ ອະໄລຮິ ອະຊັລລ໋ -ໄດ້ກ່າວຕໍ່ນາງວ່າ:

«انتَظِرِي فَإِذَا طَهُرْتِ فَاخْرُجِي إِلَى التَّنْعِيمِ».

«ຈົ່ງລໍຖ້າເຖິດ, ເມື່ອເຈົ້າສະອາດແລ້ວ ກ່ຈົ່ງອອກໄປສູ່ເຂດຕັນອີມ»[2], ທ່ານນະບີ ສ໋ລລັລລ໋ຮຸ ອະໄລຮິ ອະສັລລ໋ -ໄດ້ກຳນົດໃຫ້ຂອບເຂດຂອງການຫ້າມຄືການຫມົດປະຈຳເດືອນ, ແລະ ບ່ໄດ້ກຳນົດໃຫ້ຂອບເຂດນັ້ນເປັນໄລຍະເວລາທີ່ແນ່ນອນ. ດັ່ງນັ້ນ ສິ່ງນີ້ຈຶ່ງຊີ້ໃຫ້ເຫັນວ່າ ຂໍ້ກຳນົດດັ່ງກ່າວແມ່ນຂຶ້ນຢູ່ກັບການມີ ຫຼື ບ່ມີຂອງເລືອດປະຈຳເດືອນ.

ຫຼັກຖານປະການທີ່ສາມ: ການກຳນົດ ແລະ ລາຍລະອຽດຕ່າງໆ ເຫຼ່ານີ້ ທີ່ບັນດານັກວິຊາການນິຕິສາດອິສລາມ (ຟຸກ໋ຮາ ห์) ບາງທ່ານໄດ້ກ່າວໄວ້ໃນບັນຫານີ້ນັ້ນ ກ່ບ່ມີປາກົດຢູ່ໃນຄຳພີຂອງອັລລ໋ ແລະ ບ່ມີໃນຊຸນນະຫ໋ຂອງລ໋ຊູລຂອງພຣະອົງ ຊັລລັລລ໋ຮຸ ອະໄລຮິ ອະສັລລ໋, ທັງ ໆ ທີ່ມີຄວາມຈຳເປັນ ແລະ ຍິ່ງໃປກ່ວານັ້ນຄືຄວາມຈຳເປັນຢ່າງຍິ່ງ ຮຽກຮ້ອງໃຫ້ມີການຊີ້ແຈງເລື່ອງນີ້ຢ່າງຊັດເຈນ, ຖ້າຫາກ່ວາສິ່ງເຫຼ່ານັ້ນເປັນສິ່ງທີ່ປ່ວງປ່ວ ອຕ້ອງທ່າຄວາມເຂົ້າໃຈ ແລະ ໃຊ້ໃນການເຄົາລ໋ບບູຊາຕ໋ພຣະອົງອັລລ໋ ແນ່ນອນພຣະອົງອັລລ໋ ແລະ ສາດສະດາຂອງພຣ

[1] ບ໋ດບັນທຶກ่ວ่าด้อยบันดาฉื่ที่ติดพันกับข้ำกำนົดของผู้อ่างบ์ดบันยัด (ห น้า : 35)
[2] ดูเพิ่มเติมอันดับ (ห น้า : 36).

ະອົງ (ຂໍ ຄວາມສະຫງົບສຸກຈາກອັລລໍຮ໌ຈົ່ງມີແດ່ທ່ານ) ກ່ຳຈະຊ້ ຳຈ້ຳແຈ້ງມັນຢ່ຳງຊັດເຈນໃຫ້ທຸກຄົນໄດ້ຮັບຮູ້; ເນື່ອງຈາກຄວາ ມສຳຄັນຂອງຂໍ້ບັນຍັດຕ່ຳງໆ ທີ່ກ່ຽວຂ້ອງກັບເລື່ອງດັ່ງກ່າວ ເ ຊັ່ນ: ການລະຫມາດ, ການຖືສິນອົດ, ການແຕ່ງງານ, ການຢ່ຳຮ້ ຳງ, ການສືບທອດມໍລະດົກ ແລະ ຂໍ້ບັນຍັດອື່ນໆ, ດັ່ງທີ່ອັລລໍຮ໌ ແລະ ທ່ານສາສະນະທູດຂອງພຣະອົງໄດ້ຊີ້ແຈ້ງໄວ້ກ່ຽວກັບ ຈຳ ນວນຄັ້ງ, ເວລາ, ການກົ້ມຮູກົ້ວະ ແລະ ການກົ້ມກາບສຸຢູດໃນ ການລະຫມາດ, ແລະ ຊະກາດ: ປະເພດສັບສິນ, ເກນກ່ຳຫນົດ, ປະລິມານ ແລະ ຜູ້ມີສິດໄດ້ຮັບ, ແລະ ການຖືສິນອົດ: ໄລຍະເວລ ຳ ແລະ ຊ່ວງເວລາຂອງມັນ, ແລະ ການປະກອບພິທີຮັຈ ແລະ ສິ່ ງອື່ນໆ ທີ່ກ່ຽວຂ້ອງ, ຈົນກະທັ້ງມາລະຍາດໃນການກິນ, ການດື່ ມ, ການນອນ, ການມີເພດສຳພັນ, ການນັ່ງ, ການເຂົ້ຳເຮືອນ ແລະ ການອອກຈາກເຮືອນ, ແລະ ມາລະຍາດໃນການຂັບຖ່າຍ ຈົນເຖິງຈຳນວນການເຊັດລ້ຳງໃນການອິສຕິຈມາຣ໌ ແລະ ອື່ນໆ ຈາກບັນດາເລື່ອງທີ່ລະອຽດອ່ອນຈົນເຖິງເລື່ອງທີ່ໃຫຍ່ຫຼວງ, ຊຶ່ ງເປັນສິ່ງທີ່ອັລລໍຮ໌ໄດ້ເຮັດໃຫ້ສາສະຫນາມີຄວາມສົມບູນ ແລະ ໄດ້ເຮັດໃຫ້ຄວາມໂປດປານຂອງພຣະອົງຄົບຖ້ວນສົມບູນແກ່ ບັນດາຜູ້ສັດທາ, ດັ່ງທີ່ພຣະອົງໄດ້ຊົງກ່າວໄວ້ວ່າ:

﴿...وَنَزَّلۡنَا عَلَيۡكَ ٱلۡكِتَٰبَ تِبۡيَٰنٗا لِّكُلِّ شَيۡءٖ...﴾

(...ແລະ ເຮົາໄດ້ປະທານຄຳພີແກ່ເຈົ້ຳ ເພື່ອຊີ້ແຈ້ງແກ່ທຸກ ສັບພະສິ່ງ...)

[ສຸເຣາະຫ໌ ອັລ-ນະຫ໌ລ :89], ແລະ ພຣະຜູ້ຊົງສູງສົ່ງໄດ້ຕຣັດ ວ່ຳ:

﴿...مَا كَانَ حَدِيثًا يُفْتَرَى وَلَـٰكِن تَصْدِيقَ الَّذِى بَيْنَ يَدَيْهِ وَتَفْصِيلَ كُلَّ شَىْءٍ...﴾

(...ບໍ່ແມ່ນຄຳເວົ້າທີ່ຖືກອຸປະໂຫລກຂຶ້ນ, ຫາກແຕ່ເປັນການຢືນຢັນສິ່ງທີ່ຢູ່ເບື້ອງຫນ້າມັນ ແລະ ເປັນການຈຳແນກທຸກສິ່ງ...) [ຢູເຣາະຫ໌ ຢູຊຸຟ : 111].

ເມື່ອການກ່າວເຖິງ ແລະ ລາຍລະອຽດເຫຼົ່ານີ້ ບໍ່ໄດ້ຖືກລະບຸໄວ້ໃນຄຳພີອັລກຸຣອານ ແລະ ຊຸນນະຫ໌ຂອງທ່ານນະບີ, ຈຶ່ງເປັນທີ່ຊັດແຈ້ງວ່າ ບໍ່ສາມາດນຳມາເປັນຫຼັກຖານອ້າງອີງໄດ້, ແຕ່ໃຫ້ຍຶດຖືຕາມຄວາມຫມາຍຂອງຄຳວ່າ ເລື່ອງປະຈຳເດືອນ ເຊິ່ງສາດສະນາບັນຍັດຕ່າງໆ ໄດ້ຜູກພັນຢູ່ກັບມັນ ທັງໃນເວລາທີ່ມີ ແລະ ບໍ່ມີ. ແລະ ຫຼັກຖານນີ້ - ກ່າວຄື: ການທີ່ບໍ່ໄດ້ກ່າວເຖິງບົດບັນຍັດໃນພຣະຄຳພີອັລ-ກຸຣອານ ແລະ ຊຸນນະຮ໌ ເປັນຫຼັກຖານວ່າບົດບັນຍັດນັ້ນບໍ່ຖືກນຳມາພິຈາລະນາ - ຈະເປັນປະໂຫຍດແກ່ທ່ານໃນບັນຫານີ້ ແລະ ບັນຫາອື່ນ ໆ ຈາກບັນດາຄວາມຮູ້ທາງສາສະຫນາ; ເພາະວ່າບົດບັນຍັດທາງສາສະຫນາຕ່າງໆ ຈະບໍ່ຖືກຢືນຢັນ ນອກຈາກຈະມີຫຼັກຖານຈາກບົດບັນຍັດ (ຊາຣີອະຫ໌) ເຊິ່ງມາຈາກຄຳພີຂອງອັລລໍຮ໌, ຫຼື ຊຸນນະຮ໌ຂອງທ່ານສາສະດາທູດຂອງພຣະອົງ (ຂໍຄວາມສັນຕິສຸກ ແລະ ຄວາມເມດຕາຈາກອັລລໍຮ໌ຈົ່ງມີແດ່ທ່ານ), ຫຼື ການເຫັນດີເຫັນພ້ອມນັກວິຊາການອິສລາມ, ຫຼື ການປຽບທຽບລະຫວ່າງບົດບັນຍັດທີ່ຖືກຕ້ອງ. ໄຊຄຸລອິສລາມ ອິບນຸ ໄຕມິຍະຫ໌ ໄດ້ກ່າວໄວ້ໃນກົດຕາມຫນຶ່ງຂອງເພິ່ນວ່າ: "ແລະ ຈາກສິ່ງດັ່ງກ່າວນັ້ນຄືຄຳວ່າ ເລື່ອງປະຈຳເດືອນ ເຊິ່ງພຣະອົງອັລລໍຮ໌ໄດ້ຕິດພັນກັບຂໍ້ກຳນົດຕ່າງໆ ໄວ້ຢ່າງຫຼວງຫຼາຍໃນຄຳພີກຸລອານ ແລະ ຊຸນນະຫ໌, ໂດຍທີ່ພຣະອົງບໍ່ໄດ້ກຳນົດໄລຍະເວລາທີ່ສັ້ນທີ່ສຸດ ແລະ ຍາວທີ່ສຸດຂອງມັນ, ແລ

ະ ບໍ່ໄດ້ກຳນົດໄລຍະເວລາທີ່ສະອາດລະຫວ່າງສອງຮອບເດືອນ, ເຖິງແມ່ນວ່າປະຊາຊາດອິສລາມຈະປະສົບບັນຫານີ້ຢ່າງແຜ່ຫຼາຍ ແລະ ມີຄວາມຈຳເປັນໃນເລື່ອງນີ້ກໍ່ຕາມ. ແລະ ທາງດ້ານພາສາກໍ່ບໍ່ໄດ້ຈຳແນກຄວາມແຕກຕ່າງລະຫວ່າງໄລຍະເວລາໃດຫນຶ່ງກັບອີກໄລຍະເວລາຫນຶ່ງ. ດັ່ງນັ້ນ, ຜູ້ໃດກໍ່ຕາມທີ່ກຳນົດຂອບເຂດໃນເລື່ອງນີ້, ກໍ່ເທົ່າກັບວ່າຜູ້ນັ້ນໄດ້ຂັດແຍ້ງຕໍ່ຄຳຜີກຸລອານ ແລະ ສຸນນະຫ์"[1]. ຈົບຄຳເວົ້າຂອງທ່ານ.

ຫຼັກຖານປະການທີ່ສີ່: ການປຽບທຽບທີ່ຖືກຕ້ອງຕາມຫຼັກການ, ກ່າວຄື ອັລລ໋ອ ໄດ້ຊົງໃຫ້ເຫດຜົນຂອງການມີເລືອດປະຈຳເດືອນວ່າເປັນສິ່ງທີ່ສ້າງຄວາມລຳບາກ, ສະນັ້ນ, ເມື່ອໃດກໍ່ຕາມທີ່ຍັງມີເລືອດປະຈຳເດືອນຢູ່ ຄວາມລຳບາກນັ້ນກໍ່ຍັງຄົງມີຢູ່, ໂດຍບໍ່ມີຄວາມແຕກຕ່າງກັນລະຫວ່າງມື້ທີສອງກັບມື້ທຳອິດ, ແລະ ລະຫວ່າງມື້ທີສີ່ກັບມື້ທີສາມ. ບໍ່ມີຄວາມແຕກຕ່າງກັນລະຫວ່າງອັນທີສິບຫົກ ແລະ ອັນທີສິບຫ້າ, ແລະ ກໍ່ບໍ່ມີຄວາມແຕກຕ່າງກັນລະຫວ່າງອັນທີສິບແປດ ແລະ ອັນທີສິບເຈັດ, ເລືອດປະຈຳເດືອນກໍ່ຄືເລືອດປະຈຳເດືອນ ແລະ ຄວາມເປັນມົນທິນກໍ່ຄືຄວາມເປັນມົນທິນ, ດັ່ງນັ້ນ ສາເຫດໃນທັງສອງມື້ນັ້ນຈຶ່ງມີສະພາບເທົ່າທຽມກັນ, ແລ້ວການຈຳແນກຂໍ້ຕັດສິນລະຫວ່າງສອງມື້ນັ້ນຈະຖືກຕ້ອງໄດ້ແນວໃດ ໃນເມື່ອສາເຫດຂອງມັນກໍ່ຄືກັນ? ສິ່ງນີ້ບໍ່ແມ່ນການຂັດກັບການປຽບທຽບທີ່ຖືກຕ້ອງບໍ? ແລະ ການປຽບທຽບທີ່ຖືກຕ້ອງບໍ່ແມ່ນການທີ່ທັງສອງມື້ຕ້ອງມີຂໍ້ກຳໜົດທີ່ເທົ່າທຽມກັນບໍ? ເນື່ອງຈາກສາເຫດຂອງທັງສອງກໍເທົ່າທຽມກັນ?

---

[1] ແຫຼ່ງທີ່ມາອັນເກົ່າ (ຫນ້າ:38).

ຫຼັກຖານຂໍ້ທີຫ້າ: ຂໍ້ຂັດແຍ້ງ ແລະ ຄວາມສັບສົນໃນທັດສະນະຂອງບັນດາຜູ້ກ່າຫນົດ, ເຊິ່ງສິ່ງນັ້ນຊີ້ໃຫ້ເຫັນວ່າ ໃນປະເດັນດັ່ງກ່າວບໍ່ມີຫຼັກຖານທີ່ຈຳເປັນຕ້ອງກັບໄປຫາ, ຫາກແຕ່ມັນເປັນພຽງບົດບັນຍັດທີ່ມາຈາກການອິນິດໄສ ເຊິ່ງອາດຈະມີທັງຜິດພາດ ແລະ ຖືກຕ້ອງ, ໂດຍບໍ່ມີຝ່າຍໃດທີ່ສົມຄວນປະຕິບັດຕາມຫລາຍກວ່າອີກຝ່າຍຫນຶ່ງ, ແລະ ບ່ອນກັບຄືນ ເມື່ອເກີດມີການຂັດແຍ້ງກໍຄື ອັລກຸຣອານ ແລະ ສຸນນະຫ໌.

ເມື່ອເປັນທີ່ຊັດແຈ້ງແລ້ວເຖິງຄວາມມີນ້ຳຫນັກຂອງທັດສະນະທີ່ກ່າວວ່າ: ບໍ່ມີການກຳນົດໄລຍະເວລາຂັ້ນຕ່ຳ ແລະ ຂັ້ນສູງສຸດຂອງເລືອດປະຈຳເດືອນ. ແລະ ທັດສະນະດັ່ງກ່າວເປັນທັດສະນະທີ່ມີນ້ຳຫນັກກວ່າ, ດັ່ງນັ້ນ ຈົ່ງຮູ້ໄວ້ວ່າ ເລືອດທຸກຊະນິດທີ່ເປັນເລືອດທຳມະຊາດທີ່ຜູ້ຍິງເຫັນ ທີ່ບໍ່ໄດ້ມີສາເຫດມາຈາກບາດແຜ ຫຼື ສິ່ງອື່ນທີ່ຄ້າຍຄືກັນ, ຖືວ່າເປັນເລືອດປະຈຳເດືອນ ໂດຍບໍ່ມີການກຳນົດໄລຍະເວລາ ຫຼື ອາຍຸ. ຍົກເວັ້ນແຕ່ໃນກໍລະນີທີ່ເລືອດນັ້ນໄຫຼອອກມາຢ່າງຕໍ່ເນື່ອງບໍ່ຂາດສາຍ, ຫຼື ຢຸດໄຫຼພຽງໄລຍະສັ້ນໆ ເຊັ່ນ ຫນຶ່ງມື້ ຫຼື ສອງມື້ໃນເດືອນຫນຶ່ງ, ໃນກໍລະນີນີ້ ຈະຖືວ່າເປັນເລືອດທີ່ຜິດປົກກະຕິ (ອິສຕິຮາເດາະ). ແລະ ຈະໄດ້ກ່າວເຖິງການອະທິບາຍກ່ຽວກັບເລືອດຜິດປົກກະຕິ (ອິສຕິຮາເດາະ) ແລະ ຂໍ້ກຳຫນົດຕ່າງ ໆ ຂອງມັນໃນພາຍຫຼັງ, (ຖ້າຫາກອັລລ໋ອ ຜູ້ສູງສົ່ງ ຊົງປະສົງ).

ທ່ານ ໄຊຄຸລອິສລາມ ອິບນຸ ໄຕມິຍະ ໄດ້ກ່າວວ່າ: ແລະ ຫລັກການພື້ນຖານຂອງທຸກສິ່ງທີ່ອອກມາຈາກມົດລູກແມ່ນເລືອ

ດປະຈຳເດືອນ ຈົນກວ່າຈະມີຫລັກຖານຢືນຢັນວ່າມັນແມ່ນເລືອດ ອິສຕິຮາເດາະ[1].

ແລະ ທ່ານກ່າວອີກວ່າ: ເລືອດທີ່ອອກມານັ້ນຖືວ່າເປັນເລືອດປະຈຳເດືອນ ຖ້າຫາກບໍ່ຮູ້ວ່າມັນເປັນເລືອດຈາກເສັ້ນເລືອດ ຫຼື ບາດແຜ[2].

ແລະ ຄຳກ່າວນີ້, ນອກຈາກຈະເປັນທັດສະນະທີ່ມີນ້ຳໜັກກວ່າໃນດ້ານຫຼັກຖານແລ້ວ, ມັນຍັງເປັນສິ່ງທີ່ເຂົ້າໃຈ ແລະ ຮັບຮູ້ໄດ້ງ່າຍກວ່າ, ທັງຍັງງ່າຍຕໍ່ການປະຕິບັດ ແລະ ນຳໃຊ້ ຫຼາຍກວ່າສິ່ງທີ່ບັນດາຜູ້ກ່າໜົດຂອບເຂດໄດ້ກ່າວໄວ້. ແລະ ສິ່ງໃດທີ່ເປັນເຊັ່ນນີ້ ກໍ່ສົມຄວນທີ່ຈະຖືກຍອມຮັບຫຼາຍກວ່າ ເນື່ອງຈາກມັນສອດຄ່ອງກັບຈິດວິນຍານຂອງສາສະໜາອິດສະລາມ ແລະ ຫຼັກການຂອງມັນ ເຊິ່ງກໍ່ຄືຄວາມສະດວກ ແລະ ຄວາມງ່າຍດາຍ. ອັລລໍຮ໌ ຜູ້ຊົງສູງສົ່ງໄດ້ກ່າວວ່າ:

﴿...وَمَا جَعَلَ عَلَيۡكُمۡ فِي ٱلدِّينِ مِنۡ حَرَجٖ...﴾

(...ແລະພຣະອົງບໍ່ໄດ້ຊົງເຮັດໃຫ້ມີຄວາມຍຸ້ງຍາກໃດໆ ແກ່ພວກເຈົ້າໃນສາສະນາ...) [ສຸເຣາະຫ໌ ອັລ-ຮັຈ : 78], ທ່ານນະບີ ຊັລລັລລໍຮຸ ອະໄລຮິ ອະສັລລຳ ຫຍັງໄດ້ກ່າວໄວ້ວ່າ:

«إِنَّ الدِّينَ يُسْرٌ وَلَنْ يُشَادَّ الدِّينَ أَحَدٌ إِلَّا غَلَبَهُ فَسَدِّدُوا وَقَارِبُوا وَأَبْشِرُوا».

---

[1] ບັນທຶກໂດຍ ອັລບຸກຄ໌ຣີ: ໜັງສື ອັລ-ອີມານ, ເລື່ອງ ອັດດີນ ຍຸສຣ໌, ເລກທີ່ (39), ຈາກຫະດີດຂອງ ທ່ານ ອະບີ ຮຸໄຣເຣາະຫ໌ ຂໍພຣະອົງອັລລໍຮ໌ຊົງພໍພຣະໄທຕໍ່ເພິ່ນ.

[2] ບັນທຶກໂດຍທ່ານບຸກຄ໌ຣີ: ໜັງສືອັລມະນາກຸບ, ບົດວ່າດ້ວຍ ຄຸນນະລັກສະນະ ຂອງນະບີ ສັລລັລລໍຮຸ ອະໄລຮິ ອະສັລລັມ, ເລກທີ (3560), ແລະ ທ່ານມຸສລິມ: ໜັງສືອັລຟະດ໌ອິລ, ບົດວ່າດ້ວຍ ການອອກຫ່າງຈາກບາບທັ້ງຫຼາຍຂອງທ່ານນະບີ ສັລລັລລໍຮຸ ອະໄລຮິ ອະສັລລັມ, ເລກທີ (77/2327).

«ແທ້ຈິງ ສາສະໜາແມ່ນຄວາມສະດວກ, ແລະ ບໍ່ມີຜູ້ໃດທີ່ເຄັ່ງຄັດໃນເລື່ອງສາສະໜາ ເວັ້ນເສຍແຕ່ວ່າມັນຈະເອົາຊະນະເຂົາ. ດັ່ງນັ້ນ ຈົ່ງປະຕິບັດໃຫ້ຖືກຕ້ອງ, ຍຶດທາງສາຍກາງ ແລະຈົ່ງມີຄວາມປິຕິຍິນດີ» ບັນທຶກໂດຍອັລບຸກຄ໌ຣີ[1].

ສ່ວນໜຶ່ງຈາກຈະລິຍະທຳຂອງທ່ານສາດສະດາ ﷺ ອະໄລຮິ ອະສ້ັລລຳ

«أَنَّهُ مَا خُيِّرَ بَيْنَ أَمْرَيْنِ إِلَّا اخْتَارَ أَيْسَرَهُمَا مَا لَمْ يَكُنْ إِثْمًا».

«ແທ້ຈິງ ເມື່ອທ່ານນະບີ ﷺ ຖືກໃຫ້ເລືອກລະຫວ່າງສອງສິ່ງ ທ່ານກໍ່ຈະເລືອກເອົາສິ່ງທີ່ງ່າຍກວ່າຈາກທັ້ງສອງນັ້ນ ຕາບໃດທີ່ມັນບໍ່ແມ່ນບາບ»[2].

ການມີປະຈຳເດືອນຂອງແມ່ຍິງຖືພາ:

ໂດຍສ່ວນຫຼາຍແລ້ວ ເມື່ອແມ່ຫຍິງຖືພາ ປະຈຳເດືອນຂອງນາງກໍຈະຂາດໄປ, ທ່ານອີມາມ ອະຫ໌ມັດ ຣ໋ຫິມະຮຸລ໌ລ໋ຮ ໄດ້ກ່າວວ່າ: «ບັນດາແມ່ຫຍິງຈະຮູ້ວ່າຕົນເອງຖືພາໄດ້ກໍດ້ວຍການຢຸດຂອງປະຈຳເດືອນ»[3].

ຫາກແມ່ຍິງຖືພາເຫັນເລືອດອອກກ່ອນການເກີດລູກໃນໄລຍະເວລາສັ້ນໆ ເຊັ່ນ ສອງ ຫຼື ສາມມື້, ແລະ ມີອາການເຈັບທ້ອງຈະເກີດລູກຮ່ວມນຳ, ເລືອດນັ້ນຖືວ່າເປັນເລືອດຫລັງການເກີດລູກ. ແລະ ຖ້າຫາກເລືອດອອກກ່ອນການເກີດລູກເປັນເວລາດົນ ຫຼື ເປັນເວລາສັ້ນໆ ແຕ່ບໍ່ມີອາການເຈັບທ້ອງເກີດລູກຮ່ວມນຳ, ເລືອດນັ້ນບໍ່ແມ່ນເລືອດຫຼັງຈາກເກີດລູກ. ແຕ່ມັນຈະເ

[1] ໜັງສືອັລ-ຟັດຕະວາ (238/19-239).
[2] ອັລ-ເອົາວ໌ສ໋ັດ (356/2).
[3] ເບິ່ງໃນ ອັລ-ມຸຄນີ (405/1).

ປັນເລືອດປະຈຳເດືອນ ທີ່ຕ້ອງປະຕິບັດຕາມຂໍ້ກຳນົດຂອງເລືອດປະຈຳເດືອນບໍ, ຫຼື ຈະເປັນເລືອດເສຍ ທີ່ບໍ່ຕ້ອງປະຕິບັດຕາມຂໍ້ກຳນົດຂອງເລືອດປະຈຳເດືອນ?

ໃນເລື່ອງນີ້ມີຄວາມຄິດເຫັນທີ່ແຕກຕ່າງກັນລະຫວ່າງບັນດານັກວິຊາການ, ແລະ ທັດສະນະທີ່ຖືກຕ້ອງກ່າວວ່າ ມັນຄືເລືອດປະຈຳເດືອນ ຫາກມັນເປັນໄປຕາມລັກສະນະປົກກະຕິຂອງການມີປະຈຳເດືອນຂອງນາງ; ເພາະວ່າຫຼັກການພື້ນຖານກ່ຽວກັບເລືອດທີ່ອອກມາຈາກແມ່ຍິງນັ້ນ ຖືວ່າເປັນເລືອດປະຈຳເດືອນ, ຫາກແຕ່ຈະມີເຫດຜົນທີ່ຊັດເຈນມາຫ້າມບໍ່ໃຫ້ຖືວ່າເປັນເຊັ່ນນັ້ນ ແລະ ບໍ່ມີຫຼັກຖານໃນຄຳພີກຸຣອານ ແລະ ຊຸນນະຫ໌ ໃດໆ ທີ່ຫ້າມວ່າແມ່ຍິງທີ່ຖືພາ ຈະມີປະຈຳເດືອນບໍ່ໄດ້ (ໝາຍເຖິງມີເລືອດໄຫຼ)

ນີ້ຄືແນວທາງຂອງ ທ່ານອິຫມ່ຳມາລິກ[1] ແລະ ທ່ານອິຫມ່ຳ ອັຊ-ຊາຟີອີ[2], ແລະ ເປັນທັດສະນະທີ່ ໄຊຄຸລ ອິສລາມ ອິບນຸ ໄຕມິຍະຫ໌ ໄດ້ເລືອກໄວ້; ທ່ານໄດ້ກ່າວໄວ້ໃນໜັງສື ອັລ-ອິກຕິຍາຮ ອດ (ໜ້າ: 30) ວ່າ: "ທ່ານໄບຮາກີ ໄດ້ລາຍງານມັນເປັນບົດລາຍງານໜຶ່ງຈາກ ທ່ານອິຫມ່ຳອະຫ໌ມັດ, ຍິ່ງໄປກວ່ານັ້ນ ຍັງໄດ້ລາຍງານອີກວ່າ ທ່ານໄດ້ກັບຄືນສູ່ທັດສະນະດັ່ງກ່າວ.

ດ້ວຍເຫດນີ້, ເລືອດປະຈຳເດືອນຂອງແມ່ຍິງຖືພາ ຈຶ່ງມີຂໍ້ກຳນົດຄືກັນກັບເລືອດປະຈຳເດືອນຂອງແມ່ຍິງທີ່ບໍ່ໄດ້ຖືພາ, ຍົກເວັ້ນໃນສອງປະເດັນ:

---

[1] ອັລມຸດາວະນະຫ໌ (1/ 155), ອັນນາວາດິຮ ວັຊຊິຍາດາຕ (1/ 136).

[2] ຂໍ້ເຫັນຕ່າງຂອງນັກນິຕິສາດອິສລາມ ຂອງອັລມະຮູຊີ (ໜ້າ: 193), ອັລເອົາສັຕ (2/ 239) .

ປະເດັ່ນທີໜຶ່ງ: ເລື່ອງການຫຍ່າຮ້າງ (ຕໍ່ລາກ), ເປັນສິ່ງຕ້ອງຫ້າມໃນການຕໍ່ລາກຫຍ່າຮ້າງກັບພັນລະຍາທີ່ຢູ່ໃນຊ່ວງອິດທະ (ລະຍະລໍຖ້າ) ຂະນະທີ່ນາງມີປະຈຳເດືອນ ສຳລັບກໍລະນີທີ່ບໍ່ໄດ້ຖືພາ, ແຕ່ບໍ່ເປັນທີ່ຕ້ອງຫ້າມໃນກໍລະນີທີ່ນາງຖືພາ. ເພາະວ່າການຫຍ່າຮ້າງໃນຂະນະມີປະຈຳເດືອນສຳລັບຜູ້ຍິງທີ່ບໍ່ໄດ້ຖືພານັ້ນ ຂັດກັບຄຳສັ່ງຂອງພຣະອົງອັລລໍຮ໌ ທີ່ວ່າ:

﴿...فَطَلِّقُوهُنَّ لِعِدَّتِهِنَّ...﴾

ຄວາມວ່າ: (...ດັ່ງນັ້ນ ຈົ່ງຢ່າຮ້າງພວກນາງຕາມກຳນົດເວລາຂອງພວກນາງ...) [ສູເຣາະຫ໌ ອັດຕໍ່ລາກ :1] ສ່ວນການຫຍ່າຮ້າງຍິງທີ່ຖືພາໃນຂະນະທີ່ມີປະຈຳເດືອນນັ້ນ ບໍ່ໄດ້ຂັດກັບຫຼັກການ; ເພາະວ່າຜູ້ທີ່ຫຍ່າຮ້າງແມ່ຍິງທີ່ຖືພາ ກໍຖືວ່າລາວໄດ້ຫຍ່າຮ້າງນາງຕາມກຳນົດເວລາອິດທະຫ໌ຂອງນາງ, ບໍ່ວ່ານາງຈະມີປະຈຳເດືອນ ຫຼື ຢູ່ໃນສະພາບທີ່ສະອາດກໍຕາມ; ເພາະວ່າກຳນົດເວລາອິດທະຫ໌ຂອງແມ່ຍິງຖືພານັ້ນຂຶ້ນຢູ່ກັບການເກີດລູກ. ດ້ວຍເຫດນີ້, ການຫຍ່າຮ້າງນາງຫຼັງຈາກການຮ່ວມຫຼັບນອນ ຈຶ່ງບໍ່ເປັນທີ່ຕ້ອງຫ້າມສຳລັບເຂົາ, ຊຶ່ງແຕກຕ່າງຈາກຜູ້ຍິງຄົນອື່ນ.

ປະເດັ່ນທີສອງ: ໄລຍະເວລາອິດທະຫ໌ຈະບໍ່ສິ້ນສຸດລົງດ້ວຍການເຫັນປະຈຳເດືອນຂອງແມ່ຍິງທີ່ຖືພາ, ເຊິ່ງມັນຕ່າງຈາກເຫັນປະຈຳເດືອນຂອງແມ່ຍິງທີ່ບໍ່ໄດ້ຖືພາ. ເພາະວ່າ ໄລຍະອິດທະຫ໌ຂອງແມ່ຍິງຖືພາ ຈະບໍ່ສິ້ນສຸດລົງ ນອກຈາກການເກີດລູກເທົ່ານັ້ນ, ບໍ່ວ່ານາງຈະມີປະຈຳເດືອນ ຫຼື ບໍ່ກໍຕາມ; ດັ່ງຄຳສັ່ງຂອງພຣະອົງທີ່ວ່າ :

﴿...وَأُوْلَاتُ الأَحْمَالِ أَجَلُهُنَّ أَن يَضَعْنَ حَمْلَهُنَّ...﴾

(...ແລະ ບັນດາແມ່ຍິງທີ່ຖືພາ, ກຳນົດເວລາຂອງພວກນາງແມ່ນຈົນກວ່າພວກນາງຈະຄອດລູກອອກມາ...) [ສູເຣາະຫ໌ ອັດຕໍລາກ :4].

ບົດທີສາມ :
ວ່າດ້ວຍສະພາບທີ່ຜິດປົກກະຕິຂອງເລືອດປະຈຳເດືອນ

ສະພາວະຜິດປົກກະຕິຂອງເລືອດປະຈຳເດືອນມີຫຼາຍປະເພດດັ່ງນີ້:

ປະເພດທີໜຶ່ງ: ການເພີ່ມຂຶ້ນ ຫຼື ການຫຼຸດລົງ, ເຊັ່ນວ່າ; ໂດຍປົກກະຕິແລ້ວແມ່ຍິງມີປະຈຳເດືອນຫ້າມື້, ແຕ່ເລືອດຍັງຄົງໄຫຼຕໍ່ໄປຈົນຮອດເຈັດມື້, ຫຼື ໂດຍປົກກະຕິແລ້ວນາງມີປະຈຳເດືອນເຈັດມື້ ແຕ່ປະຈຳເດືອນຂອງນາງກ່ຫມົດລົງໃນມື້ທີຫ້າ.

ປະເພດທີສອງ: ການມາກ່ອນກຳນົດ ຫຼື ມາຊ້າກວ່າກຳນົດ, ຕົວຢ່າງເຊັ່ນ: ປົກກະຕິຮອບເດືອນຂອງນາງຈະມາໃນທ້າຍເດືອນ ແຕ່ກັບມີປະຈຳເດືອນມາໃນຕົ້ນເດືອນ, ຫຼື ປົກກະຕິຮອບເດືອນຂອງນາງຈະມາໃນຕົ້ນເດືອນ ແຕ່ກັບມີປະຈຳເດືອນມາໃນທ້າຍເດືອນ.

ບັນດານັກວິຊາການຜູ້ຮູ້ມີຄວາມເຫັນທີ່ແຕກຕ່າງກັນໃນຂໍ້ຕັດສິນຂອງສອງກໍລະນີນີ້, ແລະ ທັດສະນະທີ່ຖືກຕ້ອງແມ່ນ: ເມື່ອໃດກໍຕາມທີ່ນາງເຫັນເລືອດ ນາງກໍຄືຜູ້ຍິງທີ່ກຳລັງມີປະຈຳເດືອນ, ແລະເມື່ອໃດກໍຕາມທີ່ນາງຫມົດໄລຍະເລືອດປະຈຳເດືອນ ນາງກໍຄືຜູ້ທີ່ສະອາດແລ້ວ, ບໍ່ວ່າປະຈຳເດືອນຂອງນາງຈ

ະມາຫຼາຍກວ່າ ຫຼື ໜ້ອຍກວ່າປົກກະຕິ, ຈະມາກ່ອນ ຫຼື ຊ້າກວ່າ ກຳນົດກໍຕາມ. ແລະຫຼັກຖານໃນເລື່ອງດັ່ງກ່າວໄດ້ຖືກກ່າວມາ ກ່ອນແລ້ວໃນບົດກ່ອນໜ້ານີ້, ໂດຍທີ່ຜູ້ວາງບົດບັນຍັດໄດ້ຜູກ ພັນຂໍ້ກຳນົດຂອງການມີປະຈຳເດືອນໄວ້ກັບການມີຢູ່ຂອງມັນ.

ນີ້ຄືທັດສະນະຂອງອີມາມ ອັຊຊາຟີອີ[1], ແລະເປັນທັດສະນະ ທີ່ ໄຊຄຸລອິສລາມ ອິບນຸໄຕມິຍະຫ[2] ໄດ້ເລືອກໄວ້, ເຊິ່ງເຈົ້າຂອ ງປຶ້ມ ອັລ-ມຸຄນີ; ກໍ່ໄດ້ໃຫ້ການສະໜັບສະໜູນ ແລະ ຢືນຢັນທັ ດສະນະດັ່ງກ່າວ ໂດຍກ່າວວ່າ: ຫາກວ່າຮິດຄອງປະເພນີເປັນສິ່ ງທີ່ຖືກນຳມາພິຈາລະນາຕາມທີ່ໄດ້ກ່າວໄວ້ໃນມັຊຮັບນັ້ນແລ້ວ , ແນ່ນອນວ່າ ທ່ານນະບີ ສັລລັລລ໋ຮຸ ອະໄລຮິ ອະສັລລ໋ຳ ກໍ່ຈະຊີ້ແ ຈງມັນແກ່ປະຊາຊາດຂອງທ່ານ ແລະ ທ່ານຈະບໍ່ມີທາງທີ່ຈະຊັ ກຊ້າໃນການຊີ້ແຈງມັນຢ່າງເດັດຂາດ; ຍ້ອນບໍ່ເປັນທີ່ອະນຸຍາ ດໃຫ້ຊັກຊ້າໃນການຊີ້ແຈງເກີນເວລາທີ່ກຳນົດໄວ້, ແລະ ບັນດາ ພັນລະຍາຂອງທ່ານ ພ້ອມກັບສະຕີຄົນອື່ນ ໆ ກໍລ້ວນມີຄວາມ ຕ້ອງການຄຳຊີ້ແຈງໃນເລື່ອງດັ່ງກ່າວນີ້ຕະຫຼອດເວລາ, ສະນັ້ນ ທ່ານຈຶ່ງບໍ່ມີທາງທີ່ຈະລະເລີຍການຊີ້ແຈງໃນເລື່ອງດັ່ງກ່າວໄດ້. ແລະ ບໍ່ມີການກ່າວເຖິງຮອບປະຈຳເດືອນ ແລະ ການອະທິບາ ຍກ່ຽວກັບມັນ ທີ່ມາຈາກທ່ານນະບີ ຈໍລລັລລ໋ຮຸ ອະໄລຮິ ອະສັລ ລັມ, ຍົກເວັ້ນໃນກໍລະນີຂອງຜູ້ຍິງທີ່ມີເລືອດອອກຜິດປົກກະຕິ (ອິສຕິຮາເດາະຫ) ເທົ່ານັ້ນ[3].

---

[1] ອັນ-ອຸມມ (82/1).

[2] ໜັງສື ອັລ-ເຟະຕາວາ (238/19-239).

[3] ອັລ-ມຸຄນີ (396/1).

ປະເພດທີ່ສາມ: ນ້ຳສີເຫຼືອງ ຫຼື ນ້ຳສີຂຸ່ນ, ໂດຍຈະເຫັນເປັນ ສີເຫຼືອງຄືກັບນ້ຳເຫຼືອງຈາກບາດແຜ ຫຼື ເປັນສີຂຸ່ນໆ ລະຫວ່າງ ສີເຫຼືອງກັບສີດຳ. ຖ້າຫາກສິ່ງດັ່ງກ່າວນີ້ເກີດຂຶ້ນໃນຊ່ວງເວລາ ຂອງການມີປະຈຳເດືອນ ຫຼື ຕິດພັນຕໍ່ເນື່ອງກັນກ່ອນທີ່ຈະສະ ອາດໝົດຈາກເລືອດ, ກໍຖືວ່າເປັນເລືອດປະຈຳເດືອນ ແລະ ຕ້ ອງປະຕິບັດຕາມຂໍ້ກຳນົດຂອງເລືອດປະຈຳເດືອນ. ແລະ ຖ້າຫ າກມັນເກີດຂຶ້ນຫຼັງຈາກທີ່ສະອາດແລ້ວ ກໍບໍ່ຖືວ່າເປັນເລືອດປ ະຈຳເດືອນ; ເນື່ອງຈາກຄຳກ່າວຂອງທ່ານຍິງ ອຸມມຸ ອະຕີຍະຫ໌ - ຣ໌ດີຍັລລ໌ຮຸ ອັນຮາ- ວ່າ: "ພວກເຮົາ (ບັນດາສະຕຣີ) ບໍ່ນັບວ່າ ນ້ຳສີເຫຼືອງ ແລະ ສີຂຸ່ນ ຫຼັງຈາກຄວາມສະອາດ (ຫຼັງສິ້ນສຸດປະ ຈຳເດືອນ) ເປັນສິ່ງໃດ (ບໍ່ຖືວ່າເປັນປະຈຳເດືອນ)".

ອະທິບາຍເພີ່ມເຕີມ: ໝາຍເຖິງ ເມື່ອແມ່ຍິງເຫັນນ້ຳສີເຫຼື ອງ ຫຼື ຂຸ່ນຫຼັງຈາກທີ່ໄດ້ເຫັນສັນຍານຄວາມສະອາດ (ຊຸ່ນ ເຫັ ນຂອງເຫຼວໃສ ຫຼື ແຫ້ງສະນິດ) ແລ້ວ ກໍ່ບໍ່ຖືວ່າເປັນເລືອດປະ ຈຳເດືອນອີກຕໍ່ໄປ ແຕ່ຖືວ່າເປັນອາການປົກກະຕິ ບໍ່ຕ້ອງງົດລ ະໝາດ ຫຼື ຖືສິນອົດເພາະສິ່ງນັ້ນ. ບັນທຶກໂດຍ ອາບູດາວູດ ດ້ວ ຍສາຍລາຍງານທີ່ຖືກຕ້ອງ ແລະ ເຊື່ອຖືໄດ້[1], ແລະ ອັລ-ບຸກ ຄ໌ ຣ ກໍໄດ້ບັນທຶກຊຸ່ນກັນ ໂດຍບໍ່ມີຄຳເວົ້າຂອງນາງທີ່ວ່າ: (ຫຼັງຈາກ ສະອາດຈາກປະຈຳເດືອນ), ແຕ່ເພິ່ນໄດ້ຕັ້ງຫົວຂໍ້ບົດໄວ້ວ່າ: ບົ ດ ສິ່ງຄັດຫຼັ່ງສີເຫຼືອງ ແລະ ສີຂຸ່ນໃນຊ່ວງເວລາອື່ນທີ່ບໍ່ແມ່ນກາ ນມີປະຈຳເດືອນ[2].

---

[1] ບັນທຶກໂດຍທ່ານອາບຸດາວູດ: ໜັງສື ອັດ-ຕໍຫາຮາ ຮ໌, ບົດວ່າດ້ວຍ "ຖ້າຜູ້ຍິງເຫັນນ້ຳຂຸ່ນ ຫຼື ນ້ຳສີເຫຼືອງຫຼັງຈາກທີ່ໄດ້ສະອາດ (ຫຼັງສິ້ນສຸດປະຈຳເດືອນ)", ເລກທີ (307).

[2] ບັນທຶກໂດຍ ອັລບຸກ ຄ໌ ຣ: ໜັງສືກ່ຽວກັບເລືອດປະຈຳເດືອນ, ບົດວ່າດ້ວຍນ້ຳສີເຫຼືອງ ແລະ ສີ ຂຸ່ນໃນເວລາອື່ນທີ່ບໍ່ແມ່ນຊ່ວງມີປະຈຳເດືອນ, ເລກທີ (326).

ທ່ານໄດ້ກ່າວເສີມໃນຄຳອະທິບາຍຂອງທ່ານຟັດຫຸລ ບາຣີ ວ່າ: «ເພິ່ນໄດ້ຊີ້ແຈງເຖິງການລວມຄວາມໝາຍລະຫວ່າງຫະດີ ຊຂອງທ່ານນາງອາອີຊະຫ໌ ທີ່ໄດ້ກ່າວມາກ່ອນໜ້ານີ້ ໃນຄຳເວົ້າ ຂອງນາງທີ່ວ່າ: ຈົນກວ່າພວກເຈົ້າຈະເຫັນນ້ຳຂາວ. ແລະ ຫະດີ ຊຂອງທ່ານຍິງ ອຸມມຸ ອະຕີຍະຫ໌ ທີ່ໄດ້ກ່າວໄວ້ໃນບົດນີ້ ໄດ້ຊີ້ແຈ ງວ່າສິ່ງດັ່ງກ່າວ, - ກ່າວຄື: ຫະດີຊຂອງທ່ານຍິງອາອີຊະຫ໌ - ແມ່ ນໝາຍເຖິງສະເພາະກໍລະນີທີ່ນາງເຫັນສິ່ງທີ່ມີສີເຫຼືອງ ແລະ ສີ ຂຸ່ນ ໃນຊ່ວງເວລາຂອງການມີປະຈຳເດືອນ, ສ່ວນໃນເວລາອື່ນ ນອກເໜືອຈາກນີ້ ກໍ່ໃຫ້ຖືຕາມສິ່ງທີ່ທ່ານຍິງ ອຸມມຸ ອະຕີຍະຫ໌ ໄດ້ກ່າວໄວ້ »[1].

ແລະ ຫະດີສຂອງທ່ານນາງອາອີຊະຫ໌ ເຮາະດີຍັລລ໋ຮຸ ອັນຮາ ທີ່ທ່ານອີຫມ່ຳບຸຄ໋ຣີໄດ້ກ່າວອ້າງອີງເຖິງນັ້ນ[2], ໝາຍເຖິງວ່າ: ບັນດາຜູ້ຍິງຈະສົ່ງ "ຜ້ານ້ອຍໆ" ມາຫາທ່ານຍິງອາອີຊະຫ໌ (ສິ່ງ ທີ່ແມ່ຍິງໃຊ້ສອດໄວ້ເພື່ອເບິ່ງວ່າຫຍັງມີຮ່ອງຮອຍຂອງປະຈຳເ ດືອນເຫຼືອຢູ່ບໍ?) ເຊິ່ງພາຍໃນນັ້ນມີ "ສຳລີ" ທີ່ມີ ສີເຫຼືອງຕິດຂ້ າງຢູ່ ; ແລ້ວນາງກໍ່ກ່າວວ່າ: “ພວກເຈົ້າຈົ່ງຢ່າຟ້າວ (ຖືວ່າຢຸດມີ ປະຈຳເດືອນ) ຈົນກວ່າຈະເຫັນນ້ຳຂາວສະອາດ”[3].

(ເຊິ່ງເປັນສັນຍານວ່າຄວາມສະອາດໄດ້ເກີດຂຶ້ນແລ້ວ)

ນ້ຳຂາວສະອາດ ແມ່ນທາດແຫຼວສີຂາວທີ່ມົດລູກຂັບອອກ ມາ ເມື່ອເລືອດປະຈຳເດືອນຢຸດ.

---

[1] ຟັຕຫຸລ ອັລ-ບາຣີ (1/ 426).

[2] ບັນທຶກໂດຍອີຫມ່ຳ ອັລ-ບຸຄ໋ຣີ (1/ 71).

[3] ບັນທຶກໂດຍ ທ່ານອີຫມ່ຳອັລ-ບຸກ໋ຣີ: ໜັງສື ອັລໄຮດ, ບົດ ການເລີ່ມຕົ້ນ ແລະ ການສິ້ນສຸ ດຂອງປະຈຳເດືອນ, ກ່ອນຫະດີສ ເລກທີ່ (320).

ປະເພດທີ່ສີ່: ການມາບໍ່ຕໍ່ເນື່ອງຂອງເລືອດປະຈຳເດືອນ, ເ
ຊັ່ນ: ມື້ໜຶ່ງມີເລືອດ ແລະ ອີກມື້ໜຶ່ງສະອາດ (ບໍ່ມີເລືອດ), ເຊິ່ງ
ຈະແບ່ງອອກເປັນສອງກໍລະນີຄື:

ກໍລະນີທີໜຶ່ງ: ການທີ່ຜູ້ຍິງມີເລືອດອອກຢ່າງຕໍ່ເນື່ອງຕະຫຼ
ອດ ບໍ່ຂາດຕອນ, ດັ່ງນັ້ນເລືອດດັ່ງກ່າວນີ້ແມ່ນເລືອດອິສຕິຮາ
ດາະຫ໌ (ອາການເລືອດໄຫຼຜິດປົກກະຕິ) ແລະ ຜູ້ທີ່ເຫັນເລືອດ
ນີ້ຈະມີສະຖານະເປັນ ຜູ້ມີອາການອິສຕິຮາດາະຫ໌."

ກໍລະນີທີສອງ: ຄືການທີ່ເລືອດບໍ່ໄດ້ໄຫຼອອກມາຢ່າງຕໍ່ເນື່ອ
ງ, ແຕ່ຈະໄຫຼອອກມາເປັນບາງຄັ້ງບາງຄາວ, ແລະ ແມ່ຍິງມີໄລ
ຍະເວລາທີ່ສະອາດຢ່າງສົມບູນແວ້ວ. ບັນດານັກວິຊາການ ເຮາ
ະຫັນະຮ ມຸລລ໋ຫ໌ ມີທັດສະນະທີ່ແຕກຕ່າງກັນກ່ຽວກັບໄລຍະເວ
ລາທີ່ສະອາດນີ້: ວ່າໄລຍະດັ່ງກ່າວຈະຖືກຖືວ່າເປັນໄລຍະທີ່ສະອ
າດ ຫຼື ຈະຢູ່ພາຍໃຕ້ຂໍ້ກຳນົດຂອງການມີປະຈຳເດືອນ?

ທັດສະນະຂອງມັດຊັບຊາຟີອີ ຕາມທັດສະນະທີ່ຖືກຕ້ອງທີ່
ສຸດລະຫວ່າງສອງທັດສະນະຂອງທ່ານນັ້ນແມ່ນ ຖືວ່າຕົກຢູ່ໃນ
ຂໍ້ກຳນົດຂອງເລືອດປະຈຳເດືອນ, ສະນັ້ນຈຶ່ງຖືເປັນເລືອດປະ
ຈຳເດືອນ[1], ຊຶ່ງເປັນທັດສະນະຂອງ ໄຊຄຸລອິສລາມ ອິບນຸໄຕມິ
ຍະ ແລະ ເຈົ້າຂອງຫນັງສື ອັລ-ຟາອິກ[2], ແລະ ເປັນທັດສະນະຂ
ອງມັຊຮັບ ອະບີ ຮະນີຟະຫ໌[3]. ທັງນີ້ກໍເພາະວ່າຈະບໍ່ເຫັນນ້ຳຂາວ
(ທີ່ເປັນສັນຍານຄວາມສະອາດ) ໃນຊ່ວງເວລານັ້ນ; ແລະເພາະ
ວ່າ ຫາກຖືວ່າຊ່ວງເວລາດັ່ງກ່າວເປັນຊ່ວງເວລາທີ່ສະອາດແລ້

[1] ຫນັງສື ອັລ-ອຸມມ (1/ 83-84)
[2] ລາຍງານຈາກບັນດາຊ່ຮາບີຍະຫ໌ ໃນ ອິນຊອຟ.
[3] ອັລ-ອັສລ໌ (19/2-20)

ອ, ສິ່ງທີ່ມາກ່ອນຫນ້ານັ້ນກໍຈະເປັນໄລຍະປະຈໍາເດືອນ ແລະ ສິ່ງທີ່ຕາມມາຫຼັງຈາກນັ້ນກໍເປັນໄລຍະປະຈໍາເດືອນເຊັ່ນກັນ, ຊຶ່ງບໍ່ມີໃຜມີທັດສະນະເຊັ່ນນີ້, ຖ້າບໍ່ເຊັ່ນນັ້ນ ໄລຍະເວລາອິດທະຫ໌ທີ່ນັບດ້ວຍ ກຸຣູອ໌ (ຮອບເດືອນ) ກໍຈະສິ້ນສຸດລົງພາຍໃນຫ້າວັນ. ອີກກໍຣະນີ, ຖ້າຫາກຖືກກໍານົດໃຫ້ເປັນສິ່ງທີ່ໃຊ້ຊໍາລະລ້າງ ກໍຈະກໍ່ໃຫ້ເກີດຄວາມຫຍຸ້ງຍາກລໍາບາກໃນການອາບນ້ໍາຍົກຮາດັຊ ແລະ ອື່ນໆ ທຸກໆ ສອງມື້, ເຊິ່ງສາສະຫນານີ້ໄດ້ຍົກເວັ້ນຄວາມຫຍຸ້ງຍາກລໍາບາກດັ່ງກ່າວ, ແລະ ການສັນລະເສີນທັງຫມົດເປັນຂອງອັລລໍ່ຫ໌.

ແລະ ທັດສະນະທີ່ເປັນທີ່ຮູ້ຈັກກັນດີຂອງມັຊຮັບ ຮັນບະລີ ແມ່ນຖືວ່າ ເລືອດທີ່ອອກມາເປັນເລືອດປະຈໍາເດືອນ ແລະ ໄລຍະທີ່ບໍ່ມີເລືອດອອກແມ່ນໄລຍະທີ່ສະອາດ, ເວັ້ນເສຍແຕ່ວ່າໄລຍະເວລາລວມຂອງທັງສອງຈະເກີນກວ່າໄລຍະເວລາສູງສຸດຂອງການມີປະຈໍາເດືອນ, ດັ່ງນັ້ນ ເລືອດທີ່ອອກເກີນກໍານົດນັ້ນຈະຖືວ່າເປັນເລືອດທີ່ຜິດປົກກະຕິ (ອິສຕິຮາເດາະຫ໌)[1].

ແລະ ທ່ານໄດ້ກ່າວໄວ້ໃນຫນັງສື ອັລ-ມຸຄນີ ວ່າ: «ມີທັດສະນະທີ່ຖືກຕ້ອງວ່າ: ການທີ່ເລືອດຢຸດໄຫລໃນໄລຍະເວລາທີ່ນ້ອຍກວ່າຫນຶ່ງມື້ນັ້ນ ບໍ່ຖືວ່າເປັນການສະອາດ (ຕໍຮຸຣ) ຢ່າງສົມບູນ, ໂດຍອີງຕາມລາຍງານທີ່ພວກເຮົາໄດ້ກ່າວໄວ້ໃນເລື່ອງຂອງເລືອດນິຟາສ (ເລືອດຫລັງການຄອດລູກ) ວ່າຈະບໍ່ນັບເອົາ (ການຢຸດຂອງເລືອດ) ທີ່ນ້ອຍກວ່າຫນຶ່ງມື້. ເຊິ່ງນີ້ເປັນທັດສະນະທີ່ຖືກຕ້ອງທີ່ສຸດ -ອິນຊາອັລລໍ່ຮ໌- ເພາະວ່າເລືອດນັ້ນມີການໄຫລ ແລະ ຢຸດສະລັບກັນໄປ, ແລະ ໃນການທີ່ຈະບັງຄັບໃຫ້ຕ້ອງອາບນ້ໍາ

[1] ອັລ-ມຸຄນີ (226/1).

ຍົກຫະດັດທຸກຄັ້ງທີ່ເລືອດຢຸດເປັນໄລຍະໆ ນັ້ນ ມັນເປັນຄວາມຍາກລຳບາກທີ່ຖືກຍົກອອກໄປ; ດັ່ງຄຳດຳລັດຂອງພຣະອົງທີ່ວ່າ:

﴿...وَمَا جَعَلَ عَلَيۡكُمۡ فِي ٱلدِّينِ مِنۡ حَرَجٖ...﴾

(...ແລະພຣະອົງບໍ່ໄດ້ຊົງເຮັດໃຫ້ມີຄວາມຍຸ້ງຍາກໃດ ໆ ແກ່ພວກເຈົ້າໃນສາສະນາ...) [ສຸເຣາะห์ ฮัจ-ຮัจ : 78]. ທ່ານກ່າວວ່າ: ດັ່ງນັ້ນ, ການຢຸດໄຫຼຂອງເລືອດທີ່ນ້ອຍກວ່າໜຶ່ງມື້ຈະບໍ່ຖືກນັບວ່າເປັນການສະອາດ ເວັ້ນແຕ່ວ່ານາງຈະເຫັນສິ່ງທີ່ບົ່ງບອກເຖິງມັນ ເຊັ່ນ ການຢຸດໄຫຼນັ້ນເປັນຊ່ວງທ້າຍຂອງຮອບປະຈຳເດືອນຂອງນາງ ຫຼື ເຫັນນ້ຳຕົກຂາວ »[1]

ດັ່ງນັ້ນ ຄຳເວົ້າຂອງເຈົ້າຂອງຫນັງສື ອັລ-ມຸຄນີ ນີ້ ຈຶ່ງເປັນທາງສາຍກາງລະຫວ່າງສອງທັດສະນະ, ແລະ ອັລລ໋ຮ ຊົງຮູ້ດີຍິ່ງ.

ປະເພດທີຫ້າ: ການທີ່ເລືອດແຫ້ງລົງຈົນເຫັນພຽງແຕ່ຄວາມຊຸ່ມຊື່ນ, ຖ້າຫາກມັນເກີດຂຶ້ນໃນຊ່ວງທີ່ມີເລືອດປະຈຳເດືອນ ຫຼື ຕໍ່ເນື່ອງກັນກ່ອນທີ່ຈະສະອາດ (ຫມົດປະຈຳເດືອນ) ກ່າຖືວ່າເປັນເລືອດປະຈຳເດືອນ, ແລະ ຖ້າຫາກເກີດຂຶ້ນຫລັງຈາກສະອາດແລ້ວ ກ່ບໍ່ຖືວ່າເປັນເລືອດປະຈຳເດືອນ. ເພາະຢ່າງຫຼາຍທີ່ສຸດ ສະຖານະຂອງມັນກ່ຖືກນັບເປັນນ້ຳສີເຫຼືອງ ແລະ ນ້ຳສີຂຸ່ນ, ແລະນີ້ຄືຂໍ້ຕັດສິນຂອງມັນ.

[1] ອັລ-ມຸຄນີ (257/1).

ບົດທີ່ສີ່ :

ວ່າດ້ວຍຂໍ້ກຳຫນົດຂອງເລືອດປະຈຳເດືອນ

ຂໍ້ກ່ຳຫນົດຕ່າງໆ ທີ່ກ່ຽວຂ້ອງກັບເລືອດປະຈຳເດືອນນັ້ນມີຫລາຍກວ່າ 20 ຂໍ້, ໃນທີ່ນີ້ຈະຂໍຍົກມາສະເພາະຂໍ້ທີ່ມີຄວາມຈຳເປັນຫລາຍທີ່ສຸດ, ມີດັ່ງນີ້:

ຂໍ້ກ່ຳຫນົດທີ່ຫນຶ່ງ: ການລະມາດ; ການລະມາດເປັນສິ່ງຕ້ອງຫ້າມສຳລັບຜູ້ຍິງທີ່ມີປະຈຳເດືອນ, ບໍ່ວ່າຈະເປັນລະມາດຜົດດູ ຫຼື ຊຸນນະຮ໌, ແລະ ການລະມາດຂອງນາງກໍບໍ່ຖືກຕ້ອງ (ໃຊ້ບໍ່ໄດ້).

ເຊັ່ນດຽວກັນ, ການລະມາດກໍບໍ່ເປັນສິ່ງຈຳເປັນ (ວາຈິບ) ສຳລັບນາງ ຍົກເວັ້ນແຕ່ວ່ານາງຈະທັນເວລາຂອງການລະມາດນັ້ນປະມານຫນຶ່ງຣ໌ກະອັດທີ່ສົມບູນ, ດັ່ງນັ້ນ ການລະມາດຈຶ່ງເປັນສິ່ງຈຳເປັນ (ວາຈິບ) ສຳລັບນາງ ບໍ່ວ່ານາງຈະທັນໃນຊ່ວງຕົ້ນເວລາ ຫຼື ໃນຊ່ວງທ້າຍເວລາກໍຕາມ.

ຕົວຢ່າງຂອງກໍລະນີນີ້ຄື: ແມ່ຍິງຄົນຫນຶ່ງມີປະຈຳເດືອນ ຫຼັງຈາກຕາເວັນຕົກດິນ ໃນຊ່ວງເວລາປະມານຫນຶ່ງຣ໌ກະອັດ, ສະນັ້ນ ຈຳເປັນ (ວາຈິບ) ທີ່ນາງຈະຕ້ອງຊົດໃຊ້ການລະຫມາດມັກຣິບ ເມື່ອນາງຫມົດໄລຍະປະຈຳເດືອນແລ້ວ, ເພາະວ່ານາງໄດ້ທັນເວລາຂອງມັນປະມານຫນຶ່ງຣ໌ກະອັດ ກ່ອນທີ່ນາງຈະມີປະຈຳເດືອນ.

ຕົວຢ່າງກໍລະນີດັ່ງກ່າວຄື: ແມ່ຍິງທີ່ຫມົດໄລຍະເລືອດປະຈຳເດືອນກ່ອນຕາເວັນຂຶ້ນ ໂດຍມີເວລາເຫຼືອພໍທີ່ຈະລະຫມາດໄດ້ຫນຶ່ງຣ໌ກະອັດ, ດັ່ງນັ້ນ ຈຳເປັນ (ວາຈິບ) ທີ່ນາງຈະຕ້ອງຊົດໃຊ້ລະຫມາດຟາຈັຣ ຫຼັງຈາກທີ່ນາງໄດ້ອາບນ້ຳຊຳລະຮ່າງກາຍແ

ລ້ວ; ເພາະອ່ານບາງໄດ້ທັນເວລາສ່ວນຫນຶ່ງຂອງການລະຫມາດ ທີ່ພຽງພໍສຳລັບຫນຶ່ງຣ໌ກະອັດ.

ແຕ່ຖ້າຫາກວ່າແມ່ຍິງມີປະຈຳເດືອນໃນຊ່ວງເວລາພຽງສ່ວນນ້ອຍຫນຶ່ງຈົນບໍ່ພໍສຳລັບການລະຫມາດຫນຶ່ງຣ໌ກະອັດທີ່ສົມບູນ, ເຊັ່ນ; ມີປະຈຳເດືອນໃນຕົວຢ່າງທຳອິດ ຫຼັງຈາກຕາເວັນຕົກດິນພຽງຊົ່ວຂະນະຫນຶ່ງ ຫຼື ຫມົດປະຈຳເດືອນ (ສະອາດ) ໃນຕົວຢ່າງກ່ອນນີ້ທີສອງ ກ່ອນຕາເວັນຂຶ້ນພຽງຊົ່ວຂະນະຫນຶ່ງ, ແທ້ຈິງແລ້ວການລະຫມາດນັ້ນບໍ່ເປັນວາຢິບຕໍ່ນາງ; ເນື່ອງຈາກຄຳສອນຂອງທ່ານນະບີ ຊຸລວັລລ໋ຮຸ ອະໄລຮິ ອະສັລລັມ ທີ່ກ່າວວ່າ:

«مَنْ أَدْرَكَ رَكْعَةً مِنَ الصَّلَاةِ فَقَدْ أَدْرَكَ الصَّلَاةَ».

«ຜູ້ໃດທີ່ທັນຫນຶ່ງຣ໌ກະອັດຂອງການລະຫມາດ, ຜູ້ນັ້ນກໍໄດ້ທັນການລະຫມາດແລ້ວ» ລາຍງານໂດຍທ່ານບຸກ່ອຣີ ແລະ ທ່ານມຸສລິມ[1], ແທ້ຈິງແລ້ວ ຄວາມຫມາຍຂອງຂໍ້ຄວາມນີ້ກໍ່ຄື ຜູ້ທີ່ທັນການລະຫມາດຫນ້ອຍກວ່າຫນຶ່ງຣ໌ກະອັດ, ຈະບໍ່ຖືວ່າເປັນຜູ້ທັນເວລາລະຫມາດນັ້ນ (ບໍ່ຖືວ່າທັນລະຫມາດ).

ແລະ ຫາກວ່ານາງທັນເວລາລະຫມາດອັສຣິຫນຶ່ງຣ໌ອກອັດ, ນາງຈຳເປັນຕ້ອງລະຫມາດຊຸຫ໌ຣິພ້ອມກັບລະຫມາດອັສຣິບໍ? ຫຼື ຫາກນາງທັນເວລາລະຫມາດອີຊາຫນຶ່ງຣ໌ອກອັດ, ນາງຈຳເປັນຕ້ອງລະຫມາດມັກກະຣິບພ້ອມກັບລະຫມາດອີຊາບໍ?

---

[1] ບັນທຶກໂດຍທ່ານບຸກ່ອຣີ: ຫນັງສື ມະວາກີຕຸສສ໋ລາຕ, ບົດວ່າດ້ວຍ ຜູ້ທີ່ມາທັນລະຫມາດຄົບຫນຶ່ງຣ໌ກະອັດ, ເລກທີ່ (580).

ແລະ ທ່ານມຸສລິມ: ໃນຫນັງສື ອັລ-ມະຊາຈິດ ອະ ມະອາດ, ບົດວ່າດ້ວຍ ຜູ້ທີ່ມາທັນລະຫມາດຄົບຫນຶ່ງຣ໌ກະອັດ ກໍ່ເທົ່າກັບທັນລະຫມາດທັ້ງໝົດ, ເລກທີ່ (607), ຈາກຫະດີສ ຂອງ ທ່ານອະບີ ຮຸຣອຍເຣາະ ຮ໌ ຣ໌ດິຍ໋ລ໋ລ໋ ຮຸອັນຮຸ.

ໃນປະເດັນນີ້ ບັນດານັກວິຊາການມີຄວາມເຫັນທີ່ແຕກຕ່າ ງກັນ, ແລະ ທັດສະນະທີ່ຖືກຕ້ອງແມ່ນ ບໍ່ໄດ້ບັງຄັບໃຫ້ນາງຕ້ອ ງລະຫມາດ ນອກຈາກການລະຫມາດທີ່ນາງທັນເວລາຂອງມັນ ເທົ່ານັ້ນ, ເຊິ່ງໄດ້ແກ່ ລະຫມາດອັສຣ ແລະ ລະຫມາດອີຊາ; ດັ່ງ ຄຳກ່າວຂອງທ່ານນະບີ ຊຸລລັລລ໌ຮ໌ ອະໄລຮິ ອະສັລລັມ ທີ່ກ່າວ ວ່າ:

«مَنْ أَدْرَكَ رَكْعَةً مِنَ الْعَصْرِ قَبْلَ أَنْ تَغْرُبَ الشَّمْسُ فَقَدْ أَدْرَكَ الْعَصْرَ».

«ໃຜທີ່ທັນລະໝາດອັສຣິໜຶ່ງຣ໌ກະອັດ ກ່ອນທີ່ຕາເວັນຈະ ຕົກດິນ, ກໍຖືວ່າຜູ້ນັ້ນໄດ້ທັນລະໝາດອັສຣ໌» ມຸດຕະຟັກກຸລ ອ າໄລ[1], ທ່ານນະບີ ຊຸລລັລລ໌ຮ໌ ອະໄລຮິ ອະສັລລັມ ບໍ່ໄດ້ກ່າວວ່າ: “ ຖືວ່າຜູ້ນັ້ນໄດ້ທັນລະຫມາດລຸຫ໌ຣິ ແລະ ລະຫມາດອັສຣ໌.”

ແລະ ບໍ່ໄດ້ກ່າວເຖິງການເປັນວາຈິບຂອງການລະຫມາດລຸ ຫ໌ຣິຕໍ່ວາວ, ແລະ ຫຼັກການເດີມຄືການຟົ້ນຈາກຟັນທະ, ແລະ ນີ້ຄືແນວທາງຂອງ ທ່ານອະບີ ຫານີຟະຫ໌ ແລະ ທ່ານມາລິກ ເຊິ່ ງໄດ້ລາຍງານຈາກທັງສອງທ່ານໄວ້ໃນຫນັງສື ຊັຣຫ໌ ອັລ-ມຸຫັຊ ຊັບ[2].

ສຳລັບການລ່າລີກ, ການກ່າວຕັກບີຣ, ການກ່າວຕັສບີຫ໌, ການກ່າວຕະຫ໌ມີດ, ການກ່າວ ບີສມີລລາ໌ ກ່ອນກິນອາຫານ ແລະ ອື່ນໆ, ການອ່ານຫນັງຫະດີສ ແລະ ຟີກ໌, ການຂໍດຸອາ ແ ລະ ການກ່າວອາມີນ, ແລະ ການຮັບຟັງອັລກຸຣອານ, ສິ່ງດັ່ງກ່າ

---

[1] ບັນທຶກໂດຍທ່ານບຸກອ໌ຣີ: ຫນັງສື ມະວາກີດຕຸລ ສ໌ລາຕ, ບົດວ່າດ້ວຍ ຄົນທີ່ມາທັນລະຫມາ ດຜະຈັຣ ຣ໌ກະອັດ , ເລກທີ່ (579). ແລະ ທ່ານມຸສລິມ: ຫນັງສື ອັລມະຊາຈິດ ວະມະວາດ ງ ວ ອັຊສ໌ລາຕ, ວ່າດ້ວຍ ໃຜທີ່ທັນລະຫມາດພຽງຣ໌ກະອັດດຽວກໍ່ເທົ່າກັບທັນລະຫມາດ , ເລກທີ່ (608), ຈາກຫະດີສຂອງ ທ່ານ ອະບີ ຫຸຣອຍເຣາະຫ໌ ຣ໌ດີຍັລລ໌ຮ໌ ອັນຮຸ.

[2] ຫນັງສື ອັລ-ມັຈມູອ ຊາເຣາະຫ໌ ອັລ-ມຸຫັຊຊັບ (3/ 70).

ອທັງໝົດນີ້ບໍ່ເປັນທີ່ຕ້ອງຫ້າມສຳລັບນາງ, ເພາະໄດ້ມີການຍັ້ງ
ຍືນໃນຫນັງສືບັນທຶກສໍຣິຫ໌ທ່ານທັງສອງ ແລະ ສະບັບອື່ນໆ,

«أَنَّ النَّبِيَّ صَلَّى اللهُ عَلَيْهِ وَسَلَّمَ كَانَ يَتَّكِئُ فِي حِجْرِ عَائِشَةَ رَضِيَ اللهُ عَنْهَا وَهِيَ حَائِضٌ فَيَقْرَأُ الْقُرْآنَ».

"ແທ້ຈິງ ທ່ານນະບີ ຊ່ອລລັລລ໋ຮຸ ອະໄລຮິ ອະຊັລລ໋ຳ ເຄີຍເອນ
ໂຕຢູ່ເທິງຕັກຂອງທ່ານຍິງອາອິຊະຫ໌ ຣ໋ດິຍັລລ໋ຮຸ ອັນຮາ ໃນຂະ
ນະທີ່ນາງກຳລັງມີປະຈຳເດືອນ, ແລ້ວທ່ານກໍ່ໄດ້ອ່ານອັລກຸຣອາ
ນ"[1].

ແລະ ໃນບັນທຶກຂອງທ່ານອີຫມ່ຳທັ້ງສອງຄືກັນ ລາຍງານຈ
າກ ທ່ານນາງ ອຸມມຸ ອະຕີຍະຫ໌ ຣ໋ດິຍັລລ໋ຮຸ ອັນຮາ ວ່ານາງໄດ້ຍິ
ນ ທ່ານນະບີ -ຊ່ອລລັລລ໋ຮຸ ອະໄລຮິ ອະຊັລລ໋ຳ- ກ່າວວ່າ:

«يَخْرُجُ الْعَوَاتِقُ وَذَوَاتُ الْخُدُورِ وَالْحُيَّضُ -يَعْنِي: إِلَى صَلَاةِ الْعِيدَيْنِ- وَلْيَشْهَدْنَ الْخَيْرَ، وَدَعْوَةَ الْمُؤْمِنِينَ، وَيَعْتَزِلُ الْحُيَّضُ الْمُصَلَّى».

ຄວາມໝາຍວ່າ: (ໃຫ້ບັນດາສາວຫນຸ່ມ, ຜູ້ຍິງບໍລິສຸດ ແລະ
ຜູ້ຍິງທີ່ມີປະຈຳເດືອນ ອອກໄປ -ເຊິ່ງໝາຍເຖິງ: ການໄປລະຫ
ມາດໃນສອງວັນອີດ- ເພື່ອເປັນສັກຂີພິຍານໃນສິ່ງທີ່ດີງາມ ແ

[1] ບັນທຶກໂດຍທ່ານບຸກ່ອ້ຣີ: ຫນັງສືອ້ັລເຮດ, ບົດວ່າດ້ວຍການອ່ານກຸຣອານຂອງຜູ້ຊາຍເທິງ
ຕັກພັນລະຍາທີ່ກຳລັງມີປະຈຳເດືອນ, ລວກທີ່ (297).
ແລະ ທ່ານມຸສລິມ: ຫນັງສືອ້ັລເຮດ, ບົດວ່າດ້ວຍການເຄນໂຕນອນຂອງຜູ້ຊາຍເທິງຕັກພັນລ
ະຍາທີ່ກຳລັງມີປະຈຳເດືອນ ແລະ ການອ່ານກຸຣອານ, ລວກທີ່ (301), ຈາກຫະດີສຂອງ ທ່ານ
ຍິງອາອິຊະຫ໌ ຂ໋ອ້ັລລ໋ຮ໌ຊ໋ຳພ໋ພ໋ຣ໋ະໄທນາງ.

ລະ ການຂໍດຸອາຂອງບັນດາຜູ້ສັດທາ, ສ່ວນຜູ້ຍິງທີ່ມີປະຈຳເດືອນນັ້ນ ໃຫ້ຢູ່ຫ່າງຈາກສະຖານທີ່ລະຫມາດ)[1].

ສຳລັບແມ່ຍິງທີ່ຢູ່ໃນຊ່ວງມີປະຈຳເດືອນ ການອ່ານອັລກຸຣອານໂດຍການເບິ່ງດ້ວຍຕາ ຫຼື ການໄຕ່ຕອງໃນໃຈ ໂດຍບໍ່ອອກສຽງນັ້ນ ຖືວ່າເປັນທີ່ອະນຸຍາດ. ເຊັ່ນ: ການວາງຄຳພີອັລກຸຣອານ ຫຼື ແຜ່ນຊຽນໄວ້ ແລ້ວເບິ່ງອາຍະຕ່າງໆ ແລະ ອ່ານໃນໃຈ. ອິມາມ ອັນນະວະວີ ໄດ້ກ່າວໄວ້ໃນ ອະທິບາຍ ຊັຮຫ໌ ອັຮມຸຫັດຊັບ ວ່າ: "ເປັນທີ່ອະນຸຍາດໂດຍບໍ່ມີຂໍ້ຂັດແຍ້ງ"[2].

ສ່ວນວ່າ ຖ້າຫາກເປັນການອ່ານອອກສຽງດ້ວຍລີ້ນ, ນັກວິຊາການສ່ວນໃຫຍ່ລ້ວນຄວາມເຫັນວ່າມັນເປັນສິ່ງທີ່ຕ້ອງຫ້າມ ແລະ ບໍ່ອະນຸຍາດ, ແລະ ອັລ-ບຸຄ່ອ[3] ແລະ ອິບນຸ ຈະລີຣ ອັຕ-ຕໍບ່ຣີ[4] ແລະ ອິບນຸ ອັລ-ມຸນຊິຣ[5] ໄດ້ກ່າວວ່າ: ມັນເປັນທີ່ອະນຸຍາດ.

---

[1] ບັນທຶກໂດຍ ອັລບຸກ່ອຣີ: ຫນັງສື ອັລ-ເຮດ, ບົດວ່າດ້ວຍ ການທີ່ແມ່ຍິງມີປະຈຳເດືອນເຂົ້າຮ່ວມໃນວັນອີດທັ້ງສອງ ແລະ ການຊົມຊອບຂອງຊາວມຸສລິມໃຫ້ມາຮ່ວມງານວັນອີດ - ໂດຍທີ່ພວກນາງ ແຍກໂຕອອກຈາກສະຖານທີ່ລະຫມາດ, ເລກທີ່ (324).

ແລະ ທ່ານມຸສລິມ: ຫນັງສື ຊ່ວາຕີ ອັລ-ອີໂດ໌, ບົດວ່າດ້ວຍ ການອະນຸຍາດໃຫ້ແມ່ຍິງອອກໄປຍັງບ່ອນລະຫມາດໃນວັນອີດທັ້ງສອງ ແລະ ການເຂົ້າຮ່ວມຟັງຄຸດບະຫ໌ ໂດຍໃຫ້ພວກນາງ ແຍກຈາກບັນດາຜູ້ຊາຍ, ເລກທີ່ (890).

[2] ຫນັງສືອັນນ໌ຈມູອ (2/ 357).

[3] ເບິ່ງ ສໍຣີຫ໌ ອັລບຸຄ່ອຣີ: ກິຕາບ ອັລເຮດ, ບົດວ່າດ້ວຍ ແມ່ຍິງທີ່ມີປະຈຳເດືອນປະຕິບັດພິທີກຳທັ້ງໝົດຍົກເວັ້ນການຕ໋ອາຟຮອບໄບຕຸລລ໋ຫ໌,

ແລະ ຟ໌ຕຮຸລ ບາຣີ (1/ 407-408).

[4] ຟ໌ຕຮຸລ ບາຣີ (1/ 408).

[5] ອັລ-ເອົາສ໌ຕ (2/ 223).

ແລະ ໄດ້ຖືກລາຍງານຈາກທ່ານມາລິກ ແລະ ຈາກທ່ານຊາຟິອີ ໃນທັດສະນະເກົ່າ[1], ເຊິ່ງເພິ່ນໄດ້ກ່າວໂອ້ຈາກທັງສອງທ່ານໃນຫນັງສື ຟັຕຮຸລບາຣີ[2].

ທ່ານບຸກຄ໋ອຣີ ໄດ້ກ່າວເຖິງຄຳເວົ້າຂອງ ທ່ານ ອິບຄ໋ຮ໋ມ ອັນ-ນັຄອີ ວ່າ: "ບໍ່ເປັນຫຍັງທີ່ຈະອ່ານອາຍະຫ໌"[3].

ທ່ານເຊກຄຸລອິສລາມ ອິບນຸ ໄຕມິຍະຫ໌ ໄດ້ກ່າວໄວ້ໃນຫນັງສືອັລ-ຟະຕາວາ ຂອງ ອິບນ ກ໋ຊິມ ວ່າ: ບໍ່ມີຫຼັກຖານຈາກສຸນນະຫ໌ໃດໆ ເລີຍ ໃນການຫ້າມສິ່ງດັ່ງກ່າວຈາກອັລ-ກຣຸອານ, ເພາະວ່າຄຳກ່າວຂອງເພິ່ນທີ່ວ່າ:

«لَا تَقْرَأُ الحَائِضُ وَلَا الجُنُبُ شَيْئًا مِنَ الْقُرْآنِ».

ຄວາມໝາຍວ່າ: (ແມ່ຍິງທີ່ຢູ່ໃນສະພາບມີປະຈຳເດືອນ ແລະ ຜູ້ທີ່ຢູ່ໃນສະພາບຫະດັສໃຫຍ່ ຈະບໍ່ອ່ານສິ່ງໃດຈາກອັລກຣຸອານ)[4] ເປັນຫະດີຊທີ່ອ່ອນແອ ຕາມຄວາມເຫັນທີ່ເປັນມະຕິເອກະສັນຂອງບັນດາຜູ້ມີຄວາມຮູ້ ດ້ານຫະດີຊ[5].

ບັນດາແມ່ຍິງໃນສະໄໝຂອງ ທ່ານນະບີ ຊ໋ລລັລລ໋ຮຸ ອະໄລຮິ ວະສັລລັມ ກໍເຄີຍມີປະຈຳເດືອນ, ສະນັ້ນ ຖ້າຫາກວ່າການອ່ານ

---

[1] ອັລ-ມ໋ຈມຸອ (2/ 356).

[2] ຟັຕຮຸລ ອັລ-ບາຣີ (1/ 408).

[3] ບັນທຶກໂດຍທ່ານບຸກຄ໋ອຣີ: ຫນັງສື ອັລເຮດ, ບົດ ແມ່ຍິງທີ່ມີປະຈຳເດືອນປະຕິບັດພິທີກຳທັງຫມົດ ຍົກເວັ້ນການຢາງຕ໋ອາຟ, ກ່ອນຫະດີດ ເລກທີ່ (305).

[4] ບັນທຶກໂດຍ ອັດ-ຕິຣມິຊີ: ພາກວ່າດ້ວຍຄວາມສະອາດ, ບົດທີ່ວ່າດ້ວຍ ຜູ້ທີ່ຢູ່ໃນສະພາບຫະດັສໃຫຍ່ ແລະ ແມ່ຍິງທີ່ມີປະຈຳເດືອນ ພວກເຂົາທັງສອງຈະບໍ່ອ່ານຄຳພີອັນກຸລອານ, ເລກທີ (131).

[5] ເບິ່ງທີ່: ອັລ-ອິລ໋ລ ຂອງ ອັດ-ຕິຣມິຊີ (ໜ້າ: 69/ ການຈັດລຽງຂອງເພິ່ນ),
ແລະ ອັສ-ສຸນັນ ອັລ-ກຸບຣ໋ ຂອງ ອັລ-ໄບຮ໋ກີ (1/ 309),
ແລະ ອັລ-ອະຫ໋ກາມ ອັຊ-ຊ໋ຣ໋ອີຍະຫ໌ ຂອງ ອິບນ ອັບດິລຫ໋ກ (1/ 504),
ແລະ ນ໋ສບຸ ອັຣ-ຣ໋ຍະຫ໌ ຂອງ ອັຊ-ໄຊລະອີ (1/ 195).

ກຸຣອານເປັນສິ່ງທີ່ຕ້ອງຫ້າມສຳລັບພວກນາງເໝືອນດັ່ງການ ລະຫມາດແລ້ວ, ແນ່ນອນວ່າເລື່ອງນີ້ກໍຈະເປັນສິ່ງທີ່ ທ່ານນະບີ ຊ່ລລັລລ່ຮຸ ອະລັຍຮິ ອະສ້ລລັມ ຈະຕ້ອງໄດ້ຊີ້ແຈງແກ່ປະຊາຊາ ດຂອງເພິ່ນ, ແລະ ບັນດາແມ່ຂອງຜູ້ສັດທາກໍຈະໄດ້ຮຽນຮູ້ມັນ ແລະ ມັນກໍຈະເປັນສິ່ງທີ່ພວກນາງຈະໄດ້ຖ່າຍທອດໃຫ້ແກ່ຜູ້ຄົ ນ ລຸ່ນສູ່ລຸ່ນ. «ເມື່ອບໍ່ມີຜູ້ໃດລາຍງານຂໍ້ຫ້າມໃນເລື່ອງນີ້ຈາກທ່ ານນະບີ ຊ່ລລັລລ່ຮຸ ອະໄລຮິ ອະສ້ລລັມ, ມັນຈຶ່ງບໍ່ອະນຸຍາດໃຫ້ຖື ກຕັດສິນວ່າເປັນສິ່ງທີ່ຕ້ອງຫ້າມ (ຫາຮອມ) ທັງໆ ທີ່ຮູ້ກັນຢູ່ແ ລ້ວວ່າເພິ່ນບໍ່ໄດ້ຫ້າມມັນ. ແລະ ເມື່ອເພິ່ນບໍ່ໄດ້ຫ້າມມັນ ທັງໆ ທີ່ການມີປະຈຳເດືອນເປັນເລື່ອງທີ່ເກີດຂຶ້ນຫຼາຍໃນສະໄໝຂອ ງເພິ່ນ, ກໍເປັນທີ່ຮູ້ກັນວ່າສິ່ງນັ້ນບໍ່ແມ່ນສິ່ງທີ່ຖືກຫ້າມ»[1]

ແລະ ສິ່ງທີ່ສົມຄວນຈະກ່າວ ຫຼັງຈາກທີ່ພວກເຮົາໄດ້ຮັບຮູ້ເ ຖິງຄວາມຂັດແຍ້ງຂອງບັນດານັກວິຊາການແລ້ວກໍຄື: ສິ່ງທີ່ດີ ທີ່ສຸດສຳລັບແມ່ຍິງທີ່ມີປະຈຳເດືອນຄືບໍ່ຄວນອ່ານກຸຣອານອອ ກສຽງ ຍົກເວັ້ນໃນເວລາທີ່ມີຄວາມຈຳເປັນຕ່ໍສິ່ງນັ້ນ, ຕົວຢ່າງເ ຊັ່ນ ນາງເປັນຄູສອນ ແລະ ຈຳເປັນຕ້ອງສອນການອ່ານໃຫ້ແ ກ່ນັກຮຽນຍິງ, ຫຼື ໃນກໍລະນີສອບເສັງ ທີ່ນັກຮຽນຍິງຈຳເປັນຕ້ ອງອ່ານເພື່ອການສອບເສັງຂອງນາງ ຫຼື ກໍລະນີອື່ນໆ ທີ່ຄ້າຍຄື ກັນ.

ຂໍ້ກ່ຳໜົດທີສອງ: ການຖືສິນອົດ: ຫ້າມຜູ້ຍິງທີ່ມີປະຈຳເດືອ ນຖືສິນອົດ, ທັງທີ່ເປັນຟັຣດູ ແລະ ສຸນນະຫ໌, ແລະ ຖືວ່າໃຊ້ບໍ່ໄ ດ້. ແຕ່ທະວ່າຈຳເປັນທີ່ນາງຈະຕ້ອງຊົດໃຊ້ການຖືສິນອົດທີ່ເປັ

[1] ໜັງສືຟ໌ຕວາ (26/ 191).

ນຟັຣດ; ຕາມຫະດີຊຂອງ ທ່ານຍິງອາອິຊະ ຮ໌ ຂໍອັລລ໋ອ ຮ໌ ຈົ່ງພໍພ ຣະໄທນາງ:

"كَانَ يُصِيبُنَا ذَلِكَ -تَعْنِي: الْحَيْضَ- فَنُؤْمَرُ بِقَضَاءِ الصَّوْمِ وَلَا نُؤْمَرُ بِقَضَاءِ الصَّلَاةِ".

"ພວກເຮົາເຄີຍປະສົບກັບສິ່ງນັ້ນ (ໝາຍເຖິງ: ເລືອດປະ ຈຳເດືອນ), ພວກເຮົາຈຶ່ງຖືກສັ່ງໃຫ້ຖືບວດຊົດໃຊ້ ແລະ ບໍ່ໄດ້ຖື ກສັ່ງໃຫ້ຊົດໃຊ້ການລະໝາດ". ບັນທຶກໂດຍ: ມຸດຕະຟາກຸລອະໄ ລ.[1]

ແລະ ຫາກນາງມີເລືອດປະຈຳເດືອນ ໃນຂະນະທີ່ກຳລັງຖືສີ ອອດຢູ່, ການຖືສີອອດຂອງນາງກໍ່ຈະເສຍໄປ, ເຖິງແມ່ນວ່າຈະ ເກີດຂຶ້ນກ່ອນຕາເວັນຕົກດິນພຽງຊົ່ວພິບຕາກໍ່ຕາມ, ແລະ ຈຳເປັນ (ວາຈິບ) ທີ່ນາງຈະຕ້ອງຖືສີອອດຊົດໃຊ້ມື້ນັ້ນຄືນ ຖ້າ ຫາກວ່າການຖືສີອອດນັ້ນເປັນການຖືສີອົດ ຟັຣດ. ສ່ວນຫາກ ນາງ ຮູ້ສຶກວ່າເລືອດປະຈຳເດືອນເຄື່ອນຕົວອອກມາກ່ອນຕາ ເວັນຕົກດິນ ແຕ່ມັນຍັງບໍ່ໄຫຼອອກມາຈົນກວ່າຫຼັງຕາເວັນຕົກ ດິນ, ການຖືບວດຂອງນາງແມ່ນສົມບູນ ແລະ ບໍ່ຖືວ່າເປັນໂມ ຄະ ຕາມທັດສະນະທີ່ຖືກຕ້ອງ; ເພາະວ່າເລືອດທີ່ຍັງຢູ່ໃນຮ່າງກ າຍນັ້ນ ຍັງບໍ່ມີຂໍ້ກຳນົດຕັດສິນເທື່ອ.

---

[1] ບັນທຶກໂດຍ ທ່ານບຸກຄ໋ອ ຮ໌ ໜັງສືອັລ ຮ໌ ດ, ວ່າດ້ວຍບໍ່ຈຳເປັນຕ້ອງທົດລະໝາດເມື່ອເປັນ ປະຈຳເດືອນ; ເລກທີ (321).

ແລະ ທ່ານມຸສລິມ: ໜັງສືອັລ ຮ໌ ດ, ວ່າດ້ວຍຈຳເປັນຕ້ອງຊົດໃຊ້ການຖືສິນອົດສຳຫຼັບແມ່ຍິງ ເປັນປະຈຳເດືອນ ແຕ່ ບໍ່ຕ້ອງຊົດສຳຫຼັບການລະໝາດ , ເລກທີ (335). ແລະ ສຳນວນເປັນ ຂອງມຸສລິມ.

ແລະ ເນື່ອງຈາກວ່າ ທ່ານນະບີ ﷺ ອະໄວຣິ ອະສັວລັມ ເມື່ອເພິ່ນຖືກຖາມກ່ຽວກັບຜູ້ຍິງທີ່ເຫັນໃນຄວາມຝັນຂອງນາງຄືກັນກັບທີ່ຜູ້ຊາຍເຫັນວ່າ: ນາງຈະຕ້ອງອາບນ້ຳຍົກຫະດັຊ ຫຼື ບໍ່?

قال: «نَعَمْ إِذَا هِيَ رَأَتِ الْمَاءَ».

ທ່ານກ່າວວ່າ: "ແມ່ນແລ້ວ, ເມື່ອນາງເຫັນນ້ຳ"[1] ດັ່ງນັ້ນ ຂໍ້ກຳນົດຈຶ່ງຕິດພັນກັບການເຫັນນ້ຳອະສຸຈິ ບໍ່ແມ່ນການເຄື່ອນທີ່ຂອງມັນ, ໃນທຳນອງດຽວກັນ ຂໍ້ກຳນົດຕ່າງໆ ຂອງເລືອດປະຈຳເດືອນກໍບໍ່ມີຜົນບັງຄັບໃຊ້ ນອກຈາກຈະເຫັນມັນອອກມາພາຍນອກ ບໍ່ແມ່ນການເຄື່ອນທີ່ຂອງມັນ.

ແລະ ຫາກວ່າຮຸ່ງເຊົ້າໄດ້ເຂົ້າມາ ໃນຂະນະທີ່ນາງຍັງມີປະຈຳເດືອນ, ການຖືສິນອົດຂອງນາງໃນມື້ນັ້ນຈະບໍ່ຖືກຕອບຮັບ, ແມ້ວ່ານາງຈະສະອາດ (ຫມົດໄລຍະປະຈຳເດືອນ) ພາຍຫຼັງຈາກຮຸ່ງເຊົ້າເຂົ້າພຽງຊົ່ວຄາວ.

ແລະ ຫາກນາງຫມົດປະຈຳເດືອນກ່ອນຮຸ່ງເຊົ້າມືດ ແລ້ວນາງໄດ້ຖືສິນອົດ, ການຖືສິນອົດຂອງນາງກໍ່ຖືວ່າສົມບູນ, ເຖິງແມ່ນວ່ານາງຈະບໍ່ໄດ້ອາບນ້ຳຊຳລະຮ່າງກາຍຈົນກວ່າຈະຫຼັງຈາກຮຸ່ງເຊົ້າແລ້ວກໍ່ຕາມ; ເຊັ່ນດຽວກັບຜູ້ທີ່ຢູ່ໃນສະພາບຈຸນຸບ (ສະພາບທີ່ຈຳເປັນຕ້ອງອາບນ້ຳຍົກຫະດັຊ) ຫາກລາວຕັ້ງໃຈຖືສິນອົດໃນຂະນະທີ່ລາວຍັງຢູ່ໃນສະພາບດັ່ງກ່າວ ແລະ ບໍ່ໄດ້ອາບນ້ຳ

---

[1] ບັນທຶກໂດຍທ່ານບຸກຄ໋ອຣີ: ຫນ້ງສືອ້ວ-ອິລມ, ບົດອ່າດ້ວຍ ຄວາມລະອາຍໃນການສຶກສາຫາຄວາມຮູ້, ເລກທີ່ (130).

ແລະ ທ່ານມຸສລິມ: ຫນ້ງສືອ້ວ-ຮຄ, ບົດອ່າດ້ວຍ ສິ່ງທີ່ຈຳເປັນສຳຫຼັບແມ່ຍິງໃນການອາບນ້ຳ ..., ເລກທີ່ (313).

ຊຳລະຮ່າງກາຍຈົນກວ່າຈະຫຼັ່ງຈາກຮ່ຽເຊົ້າ, ການຖືສິນອົດຂອ
ງລາວກໍ່ຖືວ່າສົມບູນເຊັ່ນກັນ. ຈາກຫະດີຊຂອງທ່ານນາງ ອາອີ
ຊະຫ໌ ຣ໌ດີຍັລລ໋ຮ ອັນຮາ ໄດ້ກ່າວວ່າ:

"كَانَ النَّبِيُّ صَلَّى اللَّهُ عَلَيْهِ وَسَلَّمَ يُصْبِحُ جُنُبًا مِنْ جِمَاعٍ غَيْرِ احْتِلَامٍ ثُمَّ يَصُومُ فِي رَمَضَانَ".

ທ່ານນະບີ ຊ໋ລລັລລ໋ຮ ອະໄລຮິ ອະສັລລັມ ໄດ້ຕື່ນຂຶ້ນມາໃນ
ຕອນເຊົ້າໃນສະພາບທີ່ເປັນຈຸນຸບຈາກການມີເພດສຳພັນ ບໍ່ເ
ມ່ນຈາກການຝັນປຽກ, ແລ້ວທ່ານກໍ່ໄດ້ຖືສິນອົດໃນເດືອນຣ໋ມ
າດອນ. ມຸດຟັກກຸລ ອາໄລ[1].

ຂໍ້ກ່ຳຫນົດທີສາມ: ການຕ໋ອາຟທີ່ໃບຕຸລລ໋ຫ໌: ຫ້ຳມບໍ່ໃຫ້ນາ
ງເຮັດການຕ໋ອາຟ, ທັງທີ່ເປັນຟັຣດູ ແລະ ຊຸນນັຕ, ແລະ ຖືວ່າໃ
ຊ້ບໍ່ໄດ້. ສ່ວນການປະຕິບັດອື່ນໆ ທີ່ຫລືອ ເຊັ່ນ ການເດີນລະຫ
ວ່າງເນີນພູ ອັລ-ຊ໋ຟາ ແລະ ອັລ-ມ໋ຣ໋ວະ, ການຢຸດພັກທີ່ທ່ຳອ
ຣ໋ຟະ, ການພັກຄ້າງຄືນທີ່ ມຸຊດາລິຟະຫ໌ ແລະ ທ່ຳມີນາ, ການຂ
ວ່າງກ້ອນຫີນ ແລະ ພິທີກ່ຳອື່ນໆ ຂອງການປະກອບພິທີຮັຈຫ໌
ແລະ ອຸມເຣາະຫ໌, ສິ່ງເຫລ່ຳນີ້ບໍ່ແມ່ນຂໍ້ຫ້ຳມສ່ຳລັບນາງ, ດັ່ງທີ່
ທ່ານນະບີ ຊ໋ລລັລລ໋ຮ ອະໄລຮິ ອະສັລລັມ ໄດ້ກ່າວແກ່ທ່ານນາງ
ອາອີຊະຫ໌ ຕອນທີ່ນາງມີປະຈ່ຳເດືອນວ່າ:

«افْعَلِي مَا يَفْعَلُ الْحَاجُّ غَيْرَ أَلَّا تَطُوفِي بِالْبَيْتِ حَتَّى تَطْهُرِي».

---

[1] ບັນທຶກໂດຍອັລບຸກ໋ຣ໋ຽ: ຫນ້ງສືອ໋ຮ-ຊ໋ອິມ, ບົດວ່າດ້ວຍ ການອາບນ້ຳຂອງຜູ້ຖືສິນອົດ, ເລກ
ທີ່ (1931).
ແລະທ່ານມຸສລິມ: ຫນ້ງສືອ໋ຮ-ລີຍາມ, ບົດວ່າດ້ວຍ ການຖືສິນອົດຂອງຜູ້ນັ້ນຈະຖືກຕອບຮັບ
ບໍ່ ຂະນະທີ່ລາວຕື່ນມາແລ້ວຕົນຢູ່ສະພາບທີ່ມີຈຸນຸບ , ເລກທີ່ (1109).

ຄວາມໝາຍວ່າ: (ເຈົ້າຈົ່ງປະຕິບັດໃນສິ່ງທີ່ຜູ້ປະກອບພິທີຮັຈຍ์ກະທຳ, ຍົກເວັ້ນການຕ໋ອາຟຮອບໃບຕຸລວ໋ຣ ຈົນກວ່າເຈົ້າຈະສະອາດ)[1].

ດ້ວຍເຫດນີ້, ຫາກແມ่ຍิงได้ปะติบัดการต๋อาฟในสะพาบที่สะอาด แล้วมีเลือดปะจำเดือนออกมาทันทีหลังจากการต๋อาฟ ซึ่ ในละหว่างการสะอิ, ก็บ่มีบันหาหยังในเลื่องนั้น.

ข้ำหม่ดที่สี่: การยกเว้นต๋อาฟอะดาอฺ (ตะอาฟอำลา) ให้แก่นางๆ: หากผู้ยิงได้ปะกอบพิทีกำของรัจย์ และอุมเราะ์ สืมบูนแล้ว, ต่มานางมีเลือดปะจำเดือนก่อนที่จะเดินทางกับปะเทดของนาง และ ยังคงมีเลือดปะจำเดือนต่เนื่องจนเถิงเอลาเดินทางกับ, ดั่งนั้น นางสามาดเดินทางออกไปได้โดยบ่ต้องเร๊ดต๋อาฟอำลา. ลายงานจากอิบนุ อับบาส ร๎ดิยัลลอ์ฮุ อันฮุมา เว่าว่า:

"أُمِرَ النَّاسُ أَنْ يَكُونَ آخِرُ عَهْدِهِمْ بِالْبَيْتِ، إِلَّا أَنَّهُ خُفِّفَ عَنِ الْمَرْأَةِ الْحَائِضِ".

ได้ถืกสั่งใจ้แก่ผู้สัดทาให้เร๊ดการอำลา "อะดาอฺ บ้านของอัลล๋ฮ์เป้นสิ่งสุดท้ายก่อนออกเดินทาง, เอ้ิ้นแต่อ่าได้มีการผ่อนผันให้แก่แม่ยิงที่มีปะจำเดือน.

[มุตตะฟา กุลอาไล: 46][2]

---

[1] บันทึกโดยท่านบุกค๋ธิ ในหน้งสืฮ๊ัลเธด, เลกที่ (305).
และ ท่านมุสลิม ในหน้งสืฮ๊ัลหัจย์, เลกที่ (1211).

[2] บันทึกโดยฮ๊ัลบุกค๋ธิ: หน้งสื ฮ๊ัล-ฮัจย์, บ๊ดอ่าด้วย ต๋อาฟ อ๊ัล-อะดาอ์, เลกที (1755). และ ท่านมุสลิม: หน้งสื ฮ๊ัล-ฮัจย์, บ๊ดอ่าด้วย ข๋บ้งคับของการต๋อาฟ อ๊ัลอะดาอฺ และ การยกเว้นจากแม่ยิงที่มีปะจำเดือน, เลกที (1328).

ແລະ ບໍ່ເປັນທີ່ສົ່ງເສີມສຳຫຼັບແມ່ຍິງທີ່ມີປະຈຳເດືອນໃນເວລາອຳລາ ທີ່ຈະມາທີ່ປະຕູມັສຍິດອັລ-ຫະຣອມ ແລະ ວິງວອນຂໍດຸອາ; ເພາະວ່າສິ່ງດັ່ງກ່າວບໍ່ມີແບບຢ່າງມາຈາກທ່ານນະບີ ຊ.ລ.ລ.ລ.ຮ. ອະລັຍຮິ ອະສ.ລ.ລ.ມ, ແລະ ການປະກອບອິບາດະຫ໌ທັງຫຼາຍແມ່ນຕັ້ງຢູ່ເທິງພື້ນຖານຂອງສິ່ງທີ່ມີລາຍງານຫຼັກຖານຮອງຮັບ. ກົງກັນຂ້າມ, ສິ່ງທີ່ຖືກລາຍງານຈາກທ່ານນະບີ ຊ.ລ.ລ.ລ.ຮ. ອະໄລຮິ ອະຊ.ລ.ລ.ມ ນັ້ນຊີ້ໃຫ້ເຫັນໃນທາງກົງກັນຂ້າມ, ດັ່ງທີ່ປາກົດໃນເລື່ອງລາວຂອງທ່ານຍິງຊໍຟິຍະຮ໌ ເມື່ອນາງມີປະຈຳເດືອນຫຼັງຈາກການເຮັດຕໍ.ວ.ຟ ອິຟ.ລ.ດ.ຮ.ຮ໌, ເຊິ່ງທ່ານນະບີ ຊ.ລ.ລ.ລ.ຮ. ອະໄລຮິ ອະຊ.ລ.ລ.ມ ໄດ້ກ່າວກັບນາງວ່າ:

«فَلْتَنْفِرْ إِذَنْ».

(ດັ່ງນັ້ນ ຈົ່ງອອກເດີນທາງເຖີດ) ມຸ.ຕ.ຟ.ກ.ອ.ລ.[1]

ແລະ ທ່ານບໍ່ໄດ້ສັ່ງໃຫ້ໄປທີ່ປະຕູມັສຍິດ, ເພາະຖ້າຫາກວ່າສິ່ງດັ່ງກ່າວເປັນສິ່ງທີ່ຖືກບັນຍັດໄວ້ໃນສ.ສ.ຫ.ລ.ວ. ທ່ານກໍ.ງ.ຈ.ຊີ້ແຈງມັນ. ສ.ນ.ການຕໍ.ວ.ຟ.ຂ.ຮ.ຈ. ແລະ ອຸ.ມ.ເ.ຮ.ຫ.ນ.ນ ຈ.ບ.ຖ.ກ.ຍ.ກ.ເ.ວ.ໃ.ແ.ນ.ງ, ແ.ຕ.ນ.ງ.ຈ.ຕ.ອ.ງ.ທ.ກ.ນ.ຕ.ວ.ຟ ເ.ມ.ອ.ນ.ງ.ສ.ອ.ດ.ແ.ລ.ວ.

ຂໍ້ກ.ຫ.ນ.ດ.ທ.ີ 5: ກ.ນ.ຢ.ໃ.ນ.ມ.ສ.ຍ.ດ: ຫ.ມ.ບ.ໃ.ຫ.ແ.ມ.ຍ.ງ.ທ.ມ.ປ.ຈ.ຳ.ເ.ດ.ອ.ນ.ເ.ຂ.ົ.ໄ.ປ.ພ.ກ.ຢ.ໃ.ນ.ມ.ສ.ຍ.ດ, ແ.ມ.ກ.ະ.ທ.ັ.ງ.ສ.ຖ.ນ.ທ.ລ.ະ.ຫ.ມ.ດ.ອ.ດ.ກ.ຫ.ມ.ບ.ໃ.ຫ.ນ.ງ.ເ.ຂ.ົ.ໄ.ປ.ບ.ວ.ເ.ອ.ນ.ນ.ນ. ຈ.ກ.ຫ.ດ.ຊ: ລ.ຍ.ງ

[1] ບ.ນ.ທ.ກ.ໂ.ດ.ຍ.ອ.ລ.ບ.ກ.ຄ.ຣ: ຫ.ງ.ສ.ອ.ລ-ຫ.ຈ, ບ.ດ.ອ.ຳ.ດ.ວ.ຍ ຫ.ກ.ແ.ມ.ຍ.ງ.ມ.ປ.ຈ.ຳ.ເ.ດ.ອ.ນ.ຫ.ງ.ຈ.ກ.ໄ.ດ.ເ.ຮ.ດ.ກ.ນ.ອ.ຟ.ກ.ດ.ະ.ແ.ລ.ວ, ຄ.ກ.ທ.ິ (1757).

ແ.ລ.ະ ທ.່.ນ.ມ.ສ.ລ.ມ: ຫ.ງ.ສ.ອ.ລ-ຫ.ຈ, ບ.ດ.ອ.ຳ.ດ.ວ.ຍ ຂ.ບ.ງ.ຄ.ບ.ຂ.ອ.ງ.ກ.ນ.ຕ.ວ.ຟ ອ.ລ.ວ.ະ.ດ.ອ. ໝ.ຍ ຄ.ກ (1211)

ານຈາກອຸມມຸອະຕີຍະຫ໌ ຣ.ດ ຍັລລ.ລ.ຮຸ ອັນຮາ ນາງໄດ້ເວົ້າວ່າ ທ່ານ ນະບີ ຊ.ລລັລລ.ລ.ຮຸ ອະໄລຮິ ອະສັລລ.ມ ໄດ້ກ່າວວ່າ:

«يَخْرُجُ الْعَوَاتِقُ وَذَوَاتُ الْخُدُورِ وَالْحُيَّضُ».

«ໃຫ້ບັນດາຍິງສາວທີ່ຢັງບໍ່ໄດ້ແຕ່ງງານ, ແລະ ແມ່ຍິງທີ່ຢູ່ແຕ່ໃນເຮືອນ ແລະ ຜູ້ຍິງທີ່ມີປະຈຳເດືອນ ອອກມາຮ່ວມດ້ວຍ (ໃນວັນອີດ)» ແລະ ໃນນັ້ນ:

«يَعْتَزِلُ الْحُيَّضُ الْمُصَلَّى».

«ບັນດາແມ່ຍິງທີ່ມີປະຈຳເດືອນ ໃຫ້ຫຼີກຫ່າງຈາກສະຖານທີ່ລະຫມາດ» ບັນທຶກໂດຍ: ມຸດຕະຟາກຸ.ລອະໄລ[1].

ຂໍ້ກ່າໜົດທີ ຫົກ: ການມີເພດສຳພັນ; ເປັນສິ່ງທີ່ຕ້ອງຫ້າມ ສຳລັບສາມີຂອງນາງທີ່ຈະມີເພດສຳພັນກັບນາງ, ແລະ ເປັນທີ່ ຕ້ອງຫ້າມສຳລັບນາງທີ່ຈະຍິນຍອມໃຫ້ເຂົາກະທຳເຊັ່ນນັ້ນ; ເນື່ ອງຈາກຄຳຕຣັດຂອງອັລລ.ລ.ຮ໌ທີ່ກ່າວວ່າ:

﴿وَيَسْـَٔلُونَكَ عَنِ ٱلْمَحِيضِۖ قُلْ هُوَ أَذًى فَٱعْتَزِلُواْ ٱلنِّسَآءَ فِي ٱلْمَحِيضِ وَلَا تَقْرَبُوهُنَّ حَتَّىٰ يَطْهُرْنَۖ...﴾

ຄວາມວ່າ: (ແລະ ພວກເຂົາຖາມເຈົ້າກ່ຽວກັບການມີປະ ຈຳເດືອນ ຈົ່ງກ່າວເຖີດວ່າ ມັນຄືສິ່ງທີ່ເປັນມົນທິນ ດັ່ງນັ້ນ ພວ ກເຈົ້າຈົ່ງອອກຫ່າງຈາກນາງໃນຂະນະທີ່ມີປະຈຳເດືອນ ແລະ ຢ່

[1] ບັນທຶກຈາກອັລ-ບຸ.ຄ.ຣິ: ຫນັງສື ອັລ-ເຮດ, ບົດວ່າດ້ວຍ ການທີ່ແມ່ຍິງມີປະຈຳເດືອນເຂົ້າຮ່ວ ມໃນວັນອີດທັ້ງສອງ ແລະ ການເຊີນຊວນຂອງມຸສລິມໃຫ້ຮ່ວມງານ ໂດຍທີ່ພວກນາງແຍ ກໂຕອອກຈາກສະຖານທີ່ລະຫມາດ, ເລກທີ (324),

ມຸສລິມ: ຫນັງສື ສ.ລາຕ ອັລ-ອີດໄຕ໌, ບົດວ່າດ້ວຍ ການກ່າວເຖິງ ເລື່ອງອະນຸຍາດໃຫ້ແມ່ຍິງ ອອກໄປຍັງສະຖານທີ່ລະຫມາດອັນອີດທັ້ງສອງ ແລະ ເຂົ້າຮ່ວມຟັງຄຸດບະຫ໌ ໂດຍໃຫ້ນາງແຍ ກຈາກຜູ້ຊາຍ, ເລກທີ (890).

ເຂົ້າໃກ້ພວກນາງຈົນກວ່າພວກນາງຈະສະອາດບໍລິສຸດ...) [ສູ ເຣາະຫ໌ ອັລ-ບາກໍເຣາະຫ໌: 222]. ຄວາມຫມາຍຂອງຄໍາວ່າ "ມະ ຮີດ" (المَحِيض) ແມ່ນ ໄລຍະເວລາຂອງການມີປະຈໍາເດືອນ ແລ ະ ສະຖານທີ່ຂອງມັນ, ເຊິ່ງກໍຄື ອະໄວຍະວະເພດ. ແລະ ດັ່ງທີ່ທ່າ ນນະບີ ຊໍລລັລລໍຮຸ ອະໄລຮິ ອະສັລລໍາ ໄດ້ກ່າວໄວ້ວ່າ:

«اصْنَعُوا كُلَّ شَيْءٍ إِلَّا النِّكَاحَ».

«ຈົ່ງເຮັດທຸກຢ່າງໄດ້ ເວັ້ນແຕ່ການຮ່ວມຫຼັບນອນ» ຫມາຍ ເຖິງ: ການມີເພດສໍາພັນ. ບັນທຶກໂດຍມຸສລິມ[1]; ແລະ ເນື່ອງຈ າກວ່າບັນດາມຸສລິມ ມີມະຕິເປັນເອກະສັນກັນວ່າຫ້າມມີເພດ ສໍາພັນກັບແມ່ຍິງທີ່ກໍາລັງມີປະຈໍາເດືອນທາງອະໄວຍະວະເພດ ຂອງນາງ.

ດັ່ງນັ້ນ, ບໍ່ເປັນທີ່ອະນຸຍາດສໍາລັບຜູ້ທີ່ສັດທາຕໍ່ອັລລໍຮ໌ ແລະ ມື້ອັນສິ້ນໂລກ ທີ່ຈະກະທໍາໃນສິ່ງອັນຊົ່ວຮ້າຍນີ້ ເຊິ່ງຄໍາພີຂອງ ພຣະເຈົ້າຊົງສູງສຸດ, ແບບຢ່າງຂອງສາດສະນະທູດຂອງພຣະອົ ງ (ຊລ) ແລະ ມະຕິເອກະສັນຂອງຊາວມຸສລິມ ໄດ້ຊີ້ຂາດວ່າເປັ ນສິ່ງຕ້ອງຫ້າມ; ຜູ້ນັ້ນກໍຈະກາຍເປັນຜູ້ທີ່ຝ່າຝືນຕໍ່ອັລລໍຮ໌ ແ ລະ ສາດສະນະທູດຂອງພຣະອົງ, ແລະ ປະຕິບັດຕາມແນວທາງ ອື່ນທີ່ບໍ່ແມ່ນແນວທາງຂອງບັນດາຜູ້ສັດທາ. ທ່ານ ອັນ-ນະວ ວີ ໄດ້ກ່າວໄວ້ໃນຫນັງສື ອັລ-ມັຈມູອ ຊັຣຫ໌ ອັລ-ມຸຫັສຊັບ (ເຫຼັ້ມ ທີ 2, ຫນ້າທີ 374) ວ່າ: ທ່ານ ອິມາມ ອັຊ-ຊາຟິອີ ຂໍພຣະອົງອັລ ລໍຮ໌ຊົງເມດຕາທ່ານ ໄດ້ກ່າວວ່າ: “ຜູ້ໃດກໍຕາມທີ່ໄດ້ກະທໍາສິ່ງນັ້ ນ ແນ່ນອນເຂົາຜູ້ນັ້ນໄດ້ເຮັດບາບໃຫຍ່ແລ້ວ”.

[1] ບັນທຶກໂດຍທ່ານມຸສລິມ: ຫນັງສື ເລືອດປະຈໍາເດືອນ, ບົດວ່າດ້ວຍ ການອະນຸຍາດໃຫ້ແມ່ຍິງ ມີປະຈໍາເດືອນລ້າງສະພົມໃຫ້ພໍ່, ເລກທີ່ (302).

ບັນດາອຸລະມາອຸຂອງພວກເຮົາ ແລະ ທ່ານອື່ນໆ ໄດ້ກ່າວວ່າ: “ຜູ້ໃດກໍຕາມທີ່ຖືວ່າການມີເພດສຳພັນກັບແມ່ຍິງທີ່ມີປະຈຳເດືອນເປັນທີ່ອະນຸມັດ ຈະຖືກຕັດສິນວ່າເປັນຜູ້ປະຕິເສດສັດທາ”. ຈົບຄຳກ່າວຂອງ ທ່ານ ອັນ-ນະວະວີ.

ແລະ ໄດ້ຖືກອະນຸຍາດໃຫ້ແກ່ລາວ - ແລະ ການສັນລະເສີນທັງຫມົດເປັນຂອງພຣະອົງອັລລໍຮ໌ - ໃນສິ່ງທີ່ສາມາດບັນເທົາອາລົມຄວາມຢາກຂອງລາວໄດ້ ໂດຍບໍ່ແມ່ນການຮ່ວມສັງວາດ, ຊຶ່ນ: ການຈູບ, ການກອດ ແລະ ການສຳພັດຮ່າງກາຍໂດຍກົງໃນສ່ວນອື່ນໆ ທີ່ບໍ່ແມ່ນອະໄວຍະວະເພດ, ແຕ່ສິ່ງທີ່ດີກວ່າແມ່ນບໍ່ຄວນມີການສຳພັດຮ່າງກາຍໂດຍກົງໃນບໍລິເວນລະຫວ່າງສະບືແລະ ຫົວເຂົ່າ ນອກຈາກມີຜ້າກັ້ນ. ດັ່ງຄຳເວົ້າຂອງທ່ານນາງອາອີຊະຫ໌ ຣໍດີຍັລລໍຮຸ ອັນຮາ ວ່າ:

"كَانَ النَّبِيُّ صَلَّى اللَّهُ عَلَيْهِ وَسَلَّمَ يَأْمُرُنِي فَأَتَّزِرُ فَيُبَاشِرُنِي وَأَنَا حَائِضٌ".

"ທ່ານນະບີ ﷺ ຊົ່ວລັ່ວລໍຮຸ ອະໄລຮິ ວະຊັ່ລລັ່ມ ຈະສັ່ງໃຫ້ຂ້ອຍເອົາຜ້າມາພັນຮອບແອວ ແລ້ວທ່ານກໍຈະສຳພັດຮ່າງກາຍຂອງຂ້ອຍ ໃນຊ່ວງທີ່ຂ້ອຍກຳລັງມີປະຈຳເດືອນ". ມຸດຕະຟາກຸລອະໄລ[1].

ເພາະວ່າ ຫາກນາງຖືກຢ່າຮ້າງໃນຂະນະທີ່ມີເລືອດປະຈຳເດືອນ, ນາງຈະບໍ່ເລີ່ມນັບໄລຍະເວລາອີດທະ ເນື່ອງຈາກວ່າຮອບປະຈຳເດືອນທີ່ນາງຖືກຢ່າຮ້າງນັ້ນຈະບໍ່ຖືກນັບລວມໃນໄລຍ

---

[1] ບັນທຶກໂດຍທ່ານອັລບຸກຄ໌ຣີ: ບົດວ່າດ້ວຍເລືອດປະຈຳເດືອນ, ບົດວ່າດ້ວຍ ການສຳຜັດກັບຍິງທີ່ມີປະຈຳເດືອນ, ເລກທີ (301).

ແລະ ທ່ານມຸສລິມ: ບົດວ່າດ້ວຍເລືອດປະຈຳເດືອນ, ບົດວ່າດ້ວຍ ການສຳຜັດກັບຍິງທີ່ມີປະຈຳເດືອນເໜືອຜ້າສະໂວ່ງ, ເລກທີ (293).

ະເວລາອິດທະຫ໌, ແລະ ຫາກນາງຖືກຢ່າຮ້າງໃນສະພາບທີ່ສະອາ
ດຫຼັງຈາກການມີເພດສຳພັນ, ກໍຈະບໍ່ຮູ້ແນ່ຊັດເຖິງໄລຍະເວລາ
ອິດທະຫ໌ທີ່ນາງຈະເລີ່ມນັບ, ເພາະບໍ່ຮູ້ວ່ານາງໄດ້ຖືພາຈາກການ
ມີເພດສຳພັນຄັ້ງນີ້ ຫຼື ບໍ່, ເຊິ່ງຖ້າຖືພາ ນາງກໍຈະຕ້ອງຢູ່ໃນໄລຍ
ະອິດທະຫ໌ຈົນກວ່າລູກຈະເກີດ, ຫຼື ຖ້າບໍ່ຖືພາ ນາງກໍຈະຕ້ອງຢູ່ໃ
ນໄລຍະອິດທະຫ໌ໂດຍການນັບຮອບປະຈຳເດືອນ. ດັ່ງນັ້ນ, ເມື່ອ
ບໍ່ມີຄວາມແນ່ນອນໃນປະເພດຂອງອິດທະຫ໌, ການອັດຕໍ່ວາກ
ຈຶ່ງເປັນທີ່ຕ້ອງຫ້າມສຳລັບລາວ ຈົນກວ່າເລື່ອງດັ່ງກ່າວຈະແຈ່
ມແຈ້ງ.

ຂໍ້ກຳນົດທີ່ເຈັດ: ການຢ່າຮ້າງ; ຫ້າມບໍ່ໃຫ້ສາມີຢ່າຮ້າງກັບພັ
ນລະຍາຂອງຕົນໃນຂະນະທີ່ນາງກຳລັງມີປະຈຳເດືອນ; ເນື່ອງຈ
າກຄຳດຳລັດຂອງອັລລໍຮ໌ທີ່ກ່າວວ່າ:

﴿يَاأَيُّهَا النَّبِيُّ إِذَا طَلَّقْتُمُ النِّسَاء فَطَلِّقُوهُنَّ لِعِدَّتِهِنَّ...﴾

ຄວາມວ່າ: (ໂອ້ ທ່ານນະບີເອີຍ ເມື່ອພວກເຈົ້າຕໍ່ວາກ (ເລີ
ກ) ບັນດາພັນລະຍາ ກໍຈົ່ງຢ່າຮ້າງພວກນາງຕາມກຳນົດອິດ
ທະຫ໌ຂອງພວກນາງ...) [ສູເຣາະຫ໌ ອັດຕໍ່ວາກ :1] ກ່າວຄື: ໃນສະ
ພາບທີ່ພວກນາງສາມາດເລີ່ມຕົ້ນໄລຍະອິດທະຫ໌ຂອງພວກນ
າງໄດ້ຢ່າງຖືກຕ້ອງຕາມກຳຫນົດເມື່ອຖືກຢ່າຮ້າງ, ເຊິ່ງຈະເປັນ
ໄປໄດ້ກໍ່ຕໍ່ເມື່ອລາວຢ່າຮ້າງນາງໃນຂະນະທີ່ນາງຖືພາ ຫຼື ຢູ່ໃນສ
ະພາບທີ່ສະອາດໂດຍທີ່ຍັງບໍ່ທັນໄດ້ຮ່ວມຫຼັບນອນນຳກັນ;

ດັ່ງນັ້ນ, ການຢ່າຮ້າງແມ່ຍິງໃນຂະນະທີ່ນາງກຳລັງມີປະຈຳເ
ດືອນຈຶ່ງເປັນສິ່ງທີ່ຕ້ອງຫ້າມ ຕາມໂອງການທີ່ໄດ້ກ່າວມາກ່ອ
ນໜ້ານີ້; ແລະ ອີງຕາມສິ່ງທີ່ຖືກຢັ້ງຢືນໃນບັນທຶກຫະດີສທີ່ຖື
ກຕ້ອງໄດ້ທັງສອງສະບັບ ແລະ ສະບັບອື່ນໆ ຈາກຫະດີສຂອງ ອິ

ບນ ອຸມັຣ ທີ່ເວົ້າວ່າ: ລາວໄດ້ຢ່າຮ້າງພັນລະຍາຂອງລາວໃນຂະ ນະທີ່ນາງກຳລັງມີປະຈຳເດືອນ, ດັ່ງນັ້ນ ທ່ານອຸມັຣ ຈຶ່ງໄດ້ແຈ້ງເ ລື່ອງດັ່ງກ່າວໃຫ້ທ່ານນະບີ ﷺ ຮັບຊ າບ, ທ່ານສາດສະດາ ﷺ ອະລັຍຮິ ອະຊັລລຳ ຮັບຊ າບ, ທ່ານສາດສະດາ ﷺ ອະລັຍຮິ ອະຊັລລຳ ຈຶ່ງໂກດ ແ ລະ ໄດ້ກ່າວວ່າ:

«مُرْهُ فَلْيُرَاجِعْهَا ثُمَّ لِيُمْسِكْهَا حَتَّى تَطْهُرَ، ثُمَّ تَحِيضَ، ثُمَّ تَطْهُرَ، ثُمَّ إِنْ شَاءَ أَمْسَكَ بَعْدُ، وَإِنْ شَاءَ طَلَّقَ قَبْلَ أَنْ يَمَسَّ، فَتِلْكَ الْعِدَّةُ الَّتِي أَمَرَ اللَّهُ أَنْ تُطَلَّقَ لَهَا النِّسَاءُ».

«ຈົ່ງສັ່ງລາວໃຫ້ຮັບນາງກັບຄືນມາ, ຈາກນັ້ນໃຫ້ລາວຢູ່ກັບ ນາງຈົນກວ່ານາງຈະສະອາດ (ຈາກປະຈຳເດືອນ), ຈາກນັ້ນນາ ງກໍ່ມີປະຈຳເດືອນ, ແລ້ວນາງກໍ່ສະອາດອີກຄັ້ງ. ຫລັງຈາກນັ້ນ, ຖ້າລາວຕ້ອງການກໍ່ໃຫ້ຢູ່ກັບນາງຕໍ່ໄປ, ແລະ ຖ້າລາວຕ້ອງກາ ນກໍ່ໃຫ້ຢ່າຮ້າງນາງ ກ່ອນທີ່ຈະມີເພດສຳພັນກັບນາງ, ເພາະນີ້ ຄືໄລຍະເວລາອິດດະຫ໌ທີ່ອົງອັລລໍຫ໌ໄດ້ຊົງບັນຊາໃຫ້ມີການຢ່າຮ້ າງບັນດາແມ່ຍິງຕາມກຳຫນົດດັ່ງກ່າວ»[1].

ດັ່ງນັ້ນ ຫາກຜູ້ຊາຍຄົນໜຶ່ງຢ່າຮ້າງພັນລະຍາຂອງຕົນ ໃນ ຂະນະທີ່ນາງກຳລັງມີປະຈຳເດືອນ, ກໍ່ຖືວ່າລາວໄດ້ກະທຳບາບ, ແລະ ລາວຈຳເປັນຕ້ອງກັບໂຕຕໍ່ພຣະອົງອັລລໍຫ໌ຜູ້ຊົງສູງສົ່ງ, ແລະ ຕ້ອງຮັບເອົານາງກັບຄືນມາເປັນພັນລະຍາຂອງຕົນ ເພື່

[1] ບັນທຶກໂດຍອັລບຸກຄ໋ອ: ບົດວ່າດ້ວຍການຢ່າຮ້າງ, ເລກທີ່ (5251).
ແລະ ທ່ານມຸສລິມ: ບົດວ່າດ້ວຍການຢ່າຮ້າງ, ຫົວຂໍ້: ການຫ້າມຢ່າຮ້າງຍິງທີ່ມີປະຈຳເດືອນໂດ ຍບໍ່ໄດ້ຮັບຄວາມຍິນຍອມຈາກນາງ, ແລະ ຫາກຝ່າຝືນການຢ່າຮ້າງກໍ່ຖືວ່າມີຜົນ ແລະ ຕ້ອ ງຖືກສັ່ງໃຫ້ກັບໄປຄືນດີກັບນາງ, ເລກທີ (1471), ຈາກຫະດີສຂອງ ທ່ານອິບນ ອຸມັຣ (ຂໍອັ ລລ ﷺ ຊົງພໍພຣະໄທແກ່ເພິ່ນທັ້ງສອງ).

ອທີ່ຈະຢ່າຮ້າງນາງຢ່າງຖືກຕ້ອງຕາມຫຼັກການສາສະໜາ ໃຫ້ສ
ອດຄ່ອງກັບຄຳສັ່ງຂອງອົງອັລລ໋ອ ﷻ ແລະ ທ່ານສາສະດາຂອງພະ
ອົງ, ໂດຍລາວຈະຕ້ອງປະນາງໄວ້ຫຼັງຈາກທີ່ໄດ້ຮັບນາງກັບຄືນ
ມາແລ້ວ ຈົນກວ່ານາງຈະສະອາດຈາກການມີປະຈຳເດືອນໃນຮ
ອບທີ່ລາວໄດ້ຢ່າຮ້າງນາງ, ຈາກນັ້ນກໍ່ປະໃຫ້ນາງມີປະຈຳເດືອນ
ອີກຄັ້ງໜຶ່ງ, ຫຼັງຈາກນັ້ນ ເມື່ອນາງສະອາດແລ້ວ ຖ້າລາວຕ້ອງ
ການກໍ່ໃຫ້ນາງຢູ່ຕໍ່ ຫຼື ຖ້າຕ້ອງການກໍ່ຢ່າຮ້າງນາງໄດ້ ກ່ອນທີ່ຈ
ະມີເພດສຳພັນກັບນາງ.

ມີຂໍ້ຍົກເວັ້ນຈາກການຫ້າມຢ່າຮ້າງໃນຂະນະມີປະຈຳເດືອນ
ສາມກໍລະນີດັ່ງນີ້:

ໜຶ່ງ: ຫາກການຢ່າຮ້າງເກີດຂຶ້ນກ່ອນທີ່ຈະໄດ້ຢູ່ກັນຕາມ
ລຳພັງກັບນາງ ຫຼື ໄດ້ສຳຜັດຕົວນາງ, ກໍ່ບໍ່ເປັນຫຍັງທີ່ຈະຢ່າຮ້າ
ງນາງໃນຂະນະທີ່ນາງກຳລັງມີປະຈຳເດືອນ; ເພາະວ່າບໍ່ມີອິດ
ທ໋ສຳລັບນາງ, ການຢ່າຮ້າງຈຶ່ງບໍ່ຂັດຕໍ່ບົດບັນຍັດ ຕາມຄຳດຳລັ
ດຂອງພະອົງທີ່ວ່າ:

﴿...فَطَلِّقُوهُنَّ لِعِدَّتِهِنَّ...﴾

ຄວາມວ່າ: (...ດັ່ງນັ້ນ ຈົ່ງຢ່າຮ້າງພວກນາງຕາມກຳນົດເວ
ລາຂອງພວກນາງ...) [ສູເຣາະ໋ ອັດຕໍລາກ :1]

ສອງ: ເມື່ອມີເລືອດປະຈຳເດືອນໃນຂະນະຖືພາ, ແລະ ສາເຫ
ດຂອງມັນໄດ້ອະທິບາຍຜ່ານມາແລ້ວ.

ສາມ: ຖ້າຫາກວ່າການຢ່າຮ້າງນັ້ນມີຄ່າຕອບແທນ (ເຊັ່ນ
ການຂໍ), ກໍ່ເປັນທີ່ອະນຸຍາດໃຫ້ຢ່າຮ້າງກັບນາງໄດ້ ໃນຊ່ວງທີ່ນ
າງກຳລັງມີປະຈຳເດືອນ.

ເຊັ່ນວ່າ: ເມື່ອເກີດຄວາມຂັດແຍ້ງ ແລະ ການໃຊ້ຊີວິດຄູ່ທີ່ ບໍ່ລົງລອຍກັນລະຫວ່າງສາມີ ແລະ ພັນລະຍາ, ຜູ້ເປັນສາມີຈຶ່ງຮັ ບເອົາສິ່ງຕອບແທນເພື່ອທີ່ຈະຢ່າຮ້າງນາງ, ກໍລະນີນີ້ຖືວ່າເປັນ ທີ່ອະນຸຍາດ ເຖິງແມ່ນວ່ານາງຈະຢູ່ໃນຊ່ວງມີປະຈຳເດືອນກໍ່ຕາ ມ. ລາຍງານຈາກ ອິບນ ອັບບາສ ຣ.ດ.ຍ.ລ.ລ.ຮ.ຸ ອັນຮຸມາ ກ່າວວ່າ : ພັນລະຍາຂອງທ່ານ ຊາບິດ ບິນ ກໍສ ບິນ ຊ.ມ.ມ.ສ ໄດ້ມາຫາທ່ ານນະບີ ຊ.ລ.ລ.ລ.ລ.ຮ.ຸ ອະໄລຮິ ອະຊັລລ.ມ ແລະ ໄດ້ກ່າວວ່າ: "ໂອ້ ທ່ ານຣ.ຊ.ລ.ລ.ລ.ຫ.ໍ, ຂ້ານ້ອຍບໍ່ໄດ້ຕຳໜິລາວໃນເລື່ອງຂອງຄຸນສົມ ບັດ ແລະ ສາດສະໜາ, ແຕ່ຂ້ານ້ອຍລັ້ງກ.ງ.ດການເນ.ລ.ະ.ຄຸ.ນ.ໃ.ນ ອິ.ສ.ລ.າ.ມ." ທ່ານນະບີ ຊ.ລ.ລ.ລ.ລ.ຮ.ຸ ອະໄລຮິ ອະຊັລລ.ມ ຈຶ່ງໄດ້ກ່າ ວວ່າ:

«أَتَرُدِّينَ عَلَيْهِ حَدِيقَتَهُ؟»

"ເຈົ້າຈະສົ່ງຄືນສວນຂອງລາວ ໃຫ້ລາວບໍ່?" ນາງໄດ້ກ່າວວ່າ : ໂດຍ. ທ່ານຣ.ຊ.ລ ຊ.ລ.ລ.ລ.ລ.ຮ.ຸ ອະໄລຮິ ອະຊັລລ.ມ ຈຶ່ງໄດ້ກ່າວວ່າ:

«اقْبَلِ الْحَدِيقَةَ وَطَلِّقْهَا تَطْلِيقَةً»

"ຈົ່ງຮັບເອົາສວນນັ້ນຄືນມາ ແລະ ຢ່າຮ້າງນາງໜຶ່ງຄັ້ງ".

[ບັນທຶກໂດຍອັລ-ບຸກ.ຣ.ຮ.ິ][1].

ແລະ ທ່ານນະບີ ຊ.ລ.ລ.ລ.ລ.ຮ.ຸ ອະໄລຮິ ອະສ.ລ.ລ.ມ ບໍ່ໄດ້ຖ.ມ.ວ.ວ່ າ : ນາງກຳ.ລ.ັ.ງ.ມ.ີ.ປ.ະ.ຈ.ຳ.ເ.ດ.ືອ.ນ ຫຼ.ື ວ.ວ.ວ.ວ.ວ.ວ.ວ? ແລະ ເ.ນ.ື.ອ.ງ.ຈ.າ.ກ.ວ.ວ.ວ ການຢ.ວ.ວ.ວ.ວ.ວ.ວ.ນ.ີ.ເ.ປ.ັ.ນ.ການ.ໄ.ຖ.ຖ.ອ.ນ.ຕ.ົ.ອ.ຂ.ອ.ງ.ນ.າ.ງ.ເ.ອ.ງ ຈ.ຶ.ງ.ເ.ປ.ັ.ນ.ທ.ີ.

[1] ບັນທຶກໂດຍ ອັລ-ບຸກ.ຣ.ຮ.ິ: ບ.ດ ອ.ດ-ຕ.ໍ.ລ.ວ.ຊ, ຫ.ົ.ວ.ຂ.ໍ້ ການ.ຄ.ຸ.ລ.ຍ.ຊ ແ.ລ.ະ ຮ.ູ.ບ.ແ.ບ.ບ.ການ.ຢ.ວ.ວ.ວ.ວ.ວ.ວ.ວ, ເ.ລ.ກ.ທ.ີ (5273), ຈ.າ.ກ.ຫ.ະ.ດ.ີ.ຊ.ຂ.ອ.ງ ທ.ວ.ວ.ວ.ວ.ວ.ວ.ວ

ອະນຸຍາດເມື່ອມີຄວາມຈຳເປັນ ບໍ່ວ່າຈະຢູ່ໃນສະພາບໃດກໍຕາມ.

ເພິ່ນໄດ້ກ່າວໄວ້ໃນຫນັງສື ອັນ-ນຸຄນີ ເຖິງເຫດຜົນທີ່ອະນຸຍາດໃຫ້ເຮັດຄຸລະອ ໃນຂະນະທີ່ມີປະຈຳເດືອນ (ຫນ້າ: 52, ເຫຼັ້ມ ທີ 7, ພມ) ວ່າ: ເພາະວ່າການຫ້າມຢ່າຮ້າງໃນຂະນະມີປະຈຳເດືອນນັ້ນ ແມ່ນເນື່ອງຈາກຄວາມເສຍຫາຍທີ່ຈະເກີດກັບນາງ ຈາກການທີ່ໄລຍະອິດດະຫ໌ຍາວນານຂຶ້ນ, ສ່ວນການຄຸລະອ (ການຂໍຢ່າຮ້າງຂອງຝ່າຍຍິງ) ແມ່ນເພື່ອຂະຈັດຄວາມເສຍຫາຍທີ່ເກີດກັບນາງ ຈາກການຢູ່ຮ່ວມກັນທີ່ບໍ່ດີ ແລະ ການທີ່ຕ້ອງຢູ່ກັບຄົນທີ່ນາງກຽດຊັງ, ເຊິ່ງຄວາມເສຍຫາຍນີ້ຮ້າຍແຮງກວ່າຄວາມເສຍຫາຍຈາກການທີ່ໄລຍະອິດດະຫ໌ຍາວນານ. ດັ່ງນັ້ນ ຈຶ່ງອະນຸຍາດໃຫ້ປັດເປົ່າຄວາມເສຍຫາຍທີ່ໃຫຍ່ກວ່າ ດ້ວຍການຍອມຮັບຄວາມເສຍຫາຍທີ່ນ້ອຍກວ່າ; ດ້ວຍເຫດນີ້ເອງ, ທ່ານນະບີ ຊ່ລລັລລ່ຮ ອະລັຍຮິ ອະຊ່ລລ່ຳ ຈຶ່ງບໍ່ໄດ້ຊັກຖາມຜູ້ຍິງທີ່ຂໍຄຸລະອ ກ່ຽວກັບສະພາບຂອງນາງ.

ສຳລັບການເຮັດສັນຍາແຕ່ງງານກັບແມ່ຍິງໃນຂະນະທີ່ນາງມີປະຈຳເດືອນນັ້ນ ບໍ່ມີບັນຫາຫຍັງ; ເພາະວ່າຫຼັກການເດີມແມ່ນອະນຸຍາດ, ແລະ ບໍ່ມີຫຼັກຖານໃດໆ ທີ່ຫ້າມໃນເລື່ອງນີ້. ແຕ່ວ່າການທີ່ສາມີຈະເຂົ້າໄປຢູ່ຮ່ວມກັບນາງໃນຂະນະທີ່ນາງຍັງມີປະຈຳເດືອນນັ້ນ ຕ້ອງໄດ້ຮັບການພິຈາລະນາ, ຖ້າຫາກໝັ້ນໃຈໄດ້ວ່າລາວຈະບໍ່ມີເພດສຳພັນກັບນາງ ກໍບໍ່ເປັນຫຍັງ. ແຕ່ຖ້າບໍ່ເຊັ່ນນັ້ນ ກໍບໍ່ຄວນເຂົ້າໄປຢູ່ຮ່ວມກັບນາງຈົນກວ່ານາງຈະບໍລິສຸດ ເພື່ອປ້ອງກັນບໍ່ໃຫ້ເກີດການກະທຳໃນສິ່ງທີ່ຖືກຫ້າມ.

ຂໍ້ກຳນົດທີ່ແປດ: ການນັບໄລຍະເວລາອິດທະຫ໌ຂອງການຢ່າຮ້າງດ້ວຍກັບການມີປະຈຳເດືອນ: ເມື່ອຜູ້ຊາຍໄດ້ຢ່າຮ້າງກັບພັນລະຍາຂອງລາວ ຫຼັງຈາກທີ່ໄດ້ມີເພດສຳພັນ ຫຼື ຢູ່ສອງຕໍ່ສອງກັບນາງແລ້ວ, ນາງຈຳເປັນຕ້ອງຢູ່ໃນໄລຍະເວລາອິດທະຫ໌ໃຫ້ຄົບສາມປະຈຳເດືອນເຕັມ, ຖ້ານາງເປັນຜູ້ຍິງທີ່ມີປະຈຳເດືອນ ແລະ ບໍ່ໄດ້ຖືພາ; ເນື່ອງຈາກຄຳດຳລັດຂອງພຣະອົງ ຜູ້ຊົງສູງສົ່ງທີ່ວ່າ:

﴿وَٱلۡمُطَلَّقَٰتُ يَتَرَبَّصۡنَ بِأَنفُسِهِنَّ ثَلَٰثَةَ قُرُوٓءٖ...﴾

(ແລະ ບັນດາແມ່ຍິງທີ່ຖືກຢ່າຮ້າງ ພວກນາງຈົ່ງລໍຄອຍດ້ວຍຕົວຂອງພວກນາງເອງ ສາມກຸ່ຣ໌...) [ສູເຣາະຫ໌ ອັລ-ບາກໍເຣາະຫ໌: 228]. ໝາຍເຖິງ: ສາມຮອບປະຈຳເດືອນ. ຫາກນາງຖືພາ, ກຳນົດເວລາອິດທະຫ໌ຂອງນາງແມ່ນຈົນກວ່າຈະເກີດລູກ, ບໍ່ວ່າໄລຍະເວລານັ້ນຈະຍາວນານ ຫຼື ສັ້ນກໍ່ຕາມ, ຈາກຫຼັກຖານຄຳດຳລັດຂອງພຣະອົງທີ່ວ່າ:

﴿...وَأُوْلَٰتُ ٱلۡأَحۡمَالِ أَجَلُهُنَّ أَن يَضَعۡنَ حَمۡلَهُنَّۚ...﴾

(...ແລະ ບັນດາແມ່ຍິງທີ່ຖືພາ ກຳນົດຂອງພວກນາງຄືການຄອດລູກຂອງພວກນາງ...) [ສູເຣາະຫ໌ ອັດຕໍລາກ :4] ສ່ວນຜູ້ຍິງທີ່ບໍ່ມີປະຈຳເດືອນ ເຊັ່ນ: ເດັກຍິງທີ່ຍັງບໍ່ທັນມີປະຈຳເດືອນ, ແມ່ຍິງໄວໝົດປະຈຳເດືອນເນື່ອງຈາກອາຍຸສູງ, ຫຼື ຜູ້ທີ່ຜ່ານການຜ່າຕັດເອົາມົດລູກອອກ ຫຼື ດ້ວຍສາເຫດອື່ນໆ ທີ່ບໍ່ຫວັງວ່າຈະມີປະຈຳເດືອນກັບມາອີກ, ໄລຍະອິດທະຫ໌ຂອງນາງແມ່ນສາມເດືອນ; ຈາກຄຳດຳລັດຂອງພະອົງຕາອາລາທີ່ວ່າ:

﴿وَاللَّائِي يَئِسْنَ مِنَ الْمَحِيضِ مِن نِّسَائِكُمْ إِنِ ارْتَبْتُمْ فَعِدَّتُهُنَّ ثَلَاثَةُ أَشْهُرٍ وَاللَّائِي لَمْ يَحِضْنَ...﴾

ຄວາມວ່າ : (ແລະ ບັນດາແມ່ຍິງໃນໝູ່ພວກເຈົ້າທີ່ໝົດປະຈຳເດືອນແລ້ວ ຫາກພວກເຈົ້າສົງໄສ ແລ້ວກຳນົດເວລາຂອງພວກນາງແມ່ນສາມເດືອນ ແລະ ບັນດາແມ່ຍິງທີ່ຍັງບໍ່ທັນມີປະຈຳເດືອນ...) [ສູເຣາະຫ໌ ອັດຕໍລາກ :4]، ແລະ ຫາກວ່ານາງເປັນຜູ້ຍິງທີ່ມີປະຈຳເດືອນ ແຕ່ປະຈຳເດືອນຂອງນາງໄດ້ຢຸດໄປດ້ວຍສາເຫດທີ່ຮູ້ຈັກ ເຊັ່ນ: ການເຈັບປ່ວຍ ແລະ ການໃຫ້ນົມລູກ, ນາງກໍຍັງຄົງຕ້ອງຢູ່ໃນໄລຍະອິດທະຫ໌ ເຖິງແມ່ນວ່າໄລຍະເວລານັ້ນຈະຍາວນານກໍຕາມ ຈົນກວ່າປະຈຳເດືອນຂອງນາງຈະກັບມາ, ຫຼັງຈາກນັ້ນນາງກໍເລີ່ມນັບໄລຍະອິດທະຫ໌ຂອງນາງດ້ວຍຮອບເດືອນນັ້ນ. ຖ້າຫາກສາເຫດນັ້ນໄດ້ໝົດໄປ, ເຊັ່ນ: ຫາຍຈາກການເຈັບປ່ວຍ ຫຼື ໝົດໄລຍະການໃຫ້ນົມລູກ, ແຕ່ເລືອດປະຈຳເດືອນກໍຍັງຄົງບໍ່ກັບມາ, ນາງຈະຕ້ອງນັບໄລຍະເວລາລ໋ອຍເປັນເວລາໜຶ່ງປີເຕັມ ນັບຈາກມື້ທີ່ສາເຫດນັ້ນໄດ້ໝົດໄປ. ນີ້ຄືຄຳກ່າວທີ່ຖືກຕ້ອງ, ທີ່ສອດຄ່ອງກັບບັນດາຫຼັກການຂອງສາສະໜາບັນຍັດ, ຫາກສາເຫດນັ້ນໄດ້ໝົດໄປ ແລະ ເລືອດປະຈຳເດືອນບໍ່ກັບຄືນມາ, ນາງກໍຈະຢູ່ໃນສະຖານະເໝືອນກັບຜູ້ທີ່ປະຈຳເດືອນຂາດຫາຍໄປໂດຍບໍ່ມີສາເຫດທີ່ແນ່ນອນ, ແລະ ເມື່ອປະຈຳເດືອນຂອງນາງຂາດຫາຍໄປໂດຍບໍ່ມີສາເຫດທີ່ແນ່ນອນ, ນາງຈະຕ້ອງຢູ່ໃນໄລຍະອິດທະຫ໌ເປັນເວລາໜຶ່ງປີເຕັມ: ເກົ້າເດືອນເພື່ອເປັນການກັນໄວ້ສຳລັບການຖືພາ ເພາະເປັນໄລຍະເວລາສ່ວນໃຫຍ່ຂອງການຖືພາ, ແລະ ອີກສາມເດືອນສຳລັບໄລຍະອິດທະຫ໌.

ສ່ວນການຢ່າຮ້າງຫາກເກີດຂຶ້ນຫຼັງຈາກການເຮັດສັນຍາແ
ຕ່ງດອງ ແລະ ກ່ອນການຮ່ວມສັງວາດ, ກໍບໍ່ມີອິດທະຫ໌ແຕ່ຢ່າ
ງໃດ, ບໍ່ວ່າຈະດ້ວຍການນັບຮອບປະຈຳເດືອນ ຫຼື ດ້ວຍຮູບແບ
ບອື່ນໆ ກໍຕາມ; ດັ່ງດຳລັດຂອງພຣະອົງທີ່ວ່າ:

﴿يَاأَيُّهَا الَّذِينَ آمَنُوا إِذَا نَكَحْتُمُ الْمُؤْمِنَاتِ ثُمَّ طَلَّقْتُمُوهُنَّ مِن قَبْلِ أَن تَمَسُّوهُنَّ فَمَا لَكُمْ عَلَيْهِنَّ مِنْ عِدَّةٍ تَعْتَدُّونَهَا...﴾

ຄວາມວ່າ: (ໂອ້ ບັນດາຜູ້ສັດທາເອີ່ຍ ເມື່ອພວກເຈົ້າໄດ້ແຕ່
ງງານກັບບັນດາຜູ້ສັດທາຍິງ ຈາກນັ້ນພວກເຈົ້າກໍໄດ້ຢ່າຮ້າງພ
ວກນາງ ກ່ອນທີ່ພວກເຈົ້າຈະໄດ້ສຳຜັດພວກນາງ ສະນັ້ນ ບໍ່ມີ
ອິດທະຫ໌ໃດໆ ເໜືອພວກນາງສຳລັບພວກເຈົ້າທີ່ຈະນັບມັນ...)
[ອຼເຣາະຫ໌ ອັລອະຫ໌ຊາບ : 49].

ຂໍ້ກຳໜົດທີເກົ້າ: ການຢັ້ງຢືນຄວາມບໍລິສຸດຂອງມົດລູກ,
ກ່າວຄື: ການຢັ້ງຢືນວ່າມົດລູກນັ້ນວ່າງເປົ່າຈາກການຖືພາ, ເຊິ
ງເປັນສິ່ງທີ່ຈຳເປັນໃນທຸກໆ ກໍລະນີທີ່ຕ້ອງການຢັ້ງຢືນຄວາມ
ບໍລິສຸດຂອງມົດລູກ, ແລະ ມີປະເດັນຕ່າງໆ ດັ່ງນີ້:

ໜຶ່ງໃນນັ້ນກໍຄື: ເມື່ອບຸກຄົນໃດໜຶ່ງເສຍຊີວິດລົງ ແລະ ໄ
ດ້ປະແມ່ຍິງໄວ້ ໂດຍທີ່ລູກໃນທ້ອງຂອງນາງເປັນຜູ້ສືບທອດມ
ລະດົກຂອງລາວ, ແລະ ນາງກໍມີສາມີຢູ່ແລ້ວ, ດັ່ງນັ້ນ ບໍ່ອະນຸຍາ
ດໃຫ້ສາມີຂອງນາງຮ່ວມຫຼັບນອນກັບນາງຈົນກວ່ານາງຈະມີ
ປະຈຳເດືອນ ຫຼື ຈົນກວ່າຈະເປັນທີ່ແນ່ຊັດວ່ານາງຖືພາ. ຖ້າຫາ
ກເປັນທີ່ແນ່ຊັດແລ້ວວ່ານາງຖືພາ, ກໍຈະຖືກຕັດສິນໃຫ້ລາວໄ
ດ້ຮັບມໍລະດົກ ເນື່ອງຈາກຖືວ່າລາວມີຕົວຕົນຢູ່ແລ້ວໃນເວລາ
ທີ່ຜູ້ໃຫ້ມໍລະດົກເສຍຊີວິດ. ແລະ ຖ້າຫາກນາງມີປະຈຳເດືອນ,
ກໍຈະຖືກຕັດສິນວ່າລາວບໍ່ໄດ້ຮັບມໍລະດົກ ເນື່ອງຈາກຖືວ່າກາ

ນມີປະຈຳເດືອນເປັນການຢືນຢັນເຖິງການອ່ານເປົ່າຂອງມົດລູກ.

ຂໍ້ກ່າໜົດທີ່ສິບ: ການບັງຄັບໃຫ້ອາບນ້ຳ (ກຸສູລ): ວາຈິບສຳລັບແມ່ຍິງທີ່ໝົດໄລຍະປະຈຳເດືອນແລ້ວ ທີ່ຈະຕ້ອງອາບນ້ຳຊຳລະລ້າງທົ່ວທັ່ງຮ່າງກາຍ. ຈາກຄຳກ່າວຂອງທ່ານນະບີ ຊ ລ ວ ລ ຣ ອະໄລຮິ ອະຊ ລ ສ ແກ່ນາງຟາຕີມະ ບິນຕ ອະບີ ຫຸໄບຊ ອ່າ:

«فَإِذَا أَقْبَلَتِ الْحَيْضَةُ فَدَعِي الصَّلَاةَ، وَإِذَا أَدْبَرَتْ فَاغْتَسِلِي وَصَلِّي».

«ເມື່ອເລືອດປະຈຳເດືອນມາ ກໍ່ຈົ່ງຫຍຸດຈາກການລະໝາດ, ແລະ ເມື່ອມັນໝົດໄປແລ້ວ ກໍ່ຈົ່ງອາບນ້ຳຊຳລະຮ່າງກາຍ ແລະ ຈົ່ງລະໝາດເຖີດ».[1] ບັນທຶກໂດຍອັລ-ບຸກ ຣ.

ສິ່ງທີ່ຈຳເປັນຂັ້ນຕ່ຳສຸດໃນການອາບນ້ຳຊຳລະຮ່າງກາຍ ຄື ການເຮັດໃຫ້ນ້ຳປຽກຊຸ່ມທົ່ວທຸກສ່ວນຂອງຮ່າງກາຍ ຈົນຮອດກ້ອງເສັ້ນຜົມ, ແລະ ສິ່ງທີ່ປະເສີດທີ່ສຸດແມ່ນ ການປະຕິບັດຕາມຮູບແບບທີ່ໄດ້ກ່າວເອ້ໃນບົດຮະດີຊ. ຈາກທ່ານນະບີ ຊ ລ ວ ລ ຣ ອະໄລຮິ ອະຊ ລ ວ່າ, ເມື່ອທ່ານນາງ ອັສມາອ໌ ບິນຕ ຊະກ ລ ໄດ້ຖາມທ່ານກ່ຽວກັບການອາບນ້ຳ (ກຸສູລ) ຈາກເລືອດປະຈຳເດືອນ, ທ່ານ ຊ ລ ວ ລ ຣ ອະໄລຮິ ອະຊ ລ ວ່າ ຈຶ່ງໄດ້ກ່າວວ່າ:

---

[1] ບັນທຶກໂດຍທ່ານບຸກ ຣ: ໜ້ງສືອ ລ ຮ, ບົດວ່າດ້ວຍ ການເລີ່ມຕົ້ນ ແລະ ການສິ້ນສຸດຂອງປະຈຳເດືອນ, ເລກທີ່ (320),

ແລະ ທ່ານມຸສລິມ: ໜ້ງສືອ ລ ຮ, ບົດວ່າດ້ວຍ ຍິງທີ່ມີເລືອດອອກເລື້ອລ້ຳ ການອາບນ້ຳຂອງນາງ ແລະ ການລະໝາດຂອງນາງ , ເລກທີ່ (333), ຈາກລາຍງານຂອງທ່ານຍິງອາອິຊະ ໜ ຣ ດ ຍ ລ ຣ ອັນຮາ.

«تَأْخُذُ إِحْدَاكُنَّ مَاءَهَا وَسِدْرَتَهَا فَتَطَهَّرُ فَتُحْسِنُ الطُّهُورَ، ثُمَّ تَصُبُّ عَلَى رَأْسِهَا فَتَدْلُكُهُ دَلْكًا شَدِيدًا، حَتَّى تَبْلُغَ شُؤُونَ رَأْسِهَا، ثُمَّ تَصُبُّ عَلَيْهَا الْمَاءَ، ثُمَّ تَأْخُذُ فِرْصَةً مُمَسَّكَةً -أَيْ: قِطْعَةَ قُمَاشٍ فِيهَا مِسْكٌ- فَتَطَهَّرُ بِهَا».

"ໃຫ້ແມ່ຍິງຄົນໜຶ່ງໃນໝູ່ພວກເຈົ້າເອົານ້ຳ ແລະ ເອົາໃບກະທັນມາ(ເພື່ອສະຜົມ)ເຮັດຄວາມສະອາດຢ່າງດີທີ່ສຸດ, ຈາກນັ້ນໃຫ້ຖອກນ້ຳລົງໃສ່ຫົວ ແລ້ວຂະຫຍີ້ໃຫ້ແຮງຈົນຮອດໂຄນຜົມ, ຈາກນັ້ນຈຶ່ງຖອກນ້ຳລ້າງທົ່ວຮ່າງກາຍ, ແລ້ວເອົາຜ້າສຳລີ ຫຼື ຜ້າສິ້ນໜຶ່ງທີ່ໃສ່ນ້ຳຫອມ ຊຳລະບໍລິເວນນັ້ນ (ບໍລິເວນທີ່ມີເລືອດປະຈຳເດືອນ). ທ່ານນາງອັສມາຈຶ່ງຖາມວ່າ: ຈະຊຳລະລ້າງມັນແນວໃດ? ທ່ານຈຶ່ງຕອບວ່າ:

«سُبْحَانَ اللَّهِ!»

«ຊຸບຮານັລລ໋ອ!» ທ່ານຍິງອາອິຊະ ຈຶ່ງໄດ້ກ່າວແກ່ນາງວ່າ: "ເຈົ້າຈົ່ງເຊັດບໍລິເວນຮອຍເລືອດຊ້ຳໆ".

[ບັນທຶກໂດຍມຸສລິມ][1].

ບໍ່ຈຳເປັນຕ້ອງແກ້ຜົມທີ່ມັດໄວ້, ຍົກເວັ້ນແຕ່ວ່າມັນຈະຖືກມັດໄວ້ແໜ້ນ ຈົນເປັນການກີດກັ້ນບໍ່ໃຫ້ນ້ຳເຂົ້າເຖິງໂຄນຜົມ. ຈາກຫະດີຊໃນປຶ້ມຊ່ຮີຫ໌ມຸສລິມ ລາຍງານຈາກທ່ານນາງ ອຸມມຸ ສະລາມະ ເຮາະດີຍັລລ໋ຮຸອັນຮາ, ນາງໄດ້ຖາມທ່ານນະບີ ຊ່ລລ ລ່ລ ອະໄລຮິ ອະຊ່ລລ່ຳ ວ່າ: "ແທ້ຈິງຂ້ອຍເປັນຜູ້ຍິງທີ່ຖັກເປຍ

[1] ບັນທຶກໂດຍ ອັລບຸກ່ຄ່ຣີ: ໜ້ງສື ອັລ-ເຮດ, ບົດທີ່ວ່າ ວິທີອາບນ້ຳຂອງຜູ້ມີເລືອດປະຈຳເດືອນ, ເລກທີ່ (315),
ແລະ ມຸສລິມ: ກີຕ່ຳບ ອັລ-ເຮດ, ບົດທີ່ວ່າ ການສົ່ງເສີມໃຫ້ແມ່ຍິງທີ່ອາບນ້ຳຫຼ້ງໝົດປະຈຳເດືອນ ໃຊ້ຜ້າທີ່ມີກິ່ນນ້ຳຫອມມ໋ສກ໋ ເຊັດບໍລິເວນທີ່ມີເລືອດອອກ, ເລກທີ່ (332),
ຈາກລາຍງານຂອງທ່ານຍິງອາອິຊະ ຮ໋ດິຍັລລ໋ຮຸ ອັນຮາ.

ຜົມແໜ້ນ, ຂ້ອຍຈຳເປັນຕ້ອງແກ້ມັນອອກບໍ່ ເພື່ອອາບນ້ຳຍົກຫະດັສໃຫຍ່ (ຈະນາບະຫ໌)?" ແລະໃນອີກລາຍງານໜຶ່ງກ່າວວ່າ: "ເພື່ອອາບນ້ຳຍົກຫະດັສຈາກປະຈຳເດືອນ ແລະ ຈະນາບະຫ໌?" ທ່ານຈຶ່ງກ່າວວ່າ:

«لَا، إِنَّمَا يَكْفِيكِ أَنْ تَحْثِيَ عَلَى رَأْسِكِ ثَلَاثَ حَثَيَاتٍ ثُمَّ تُفِيضِينَ عَلَيْكِ الْمَاءَ فَتَطْهُرِينَ».

«ບໍ່, ພຽງແຕ່ເຈົ້າລາດນ້ຳໃສ່ຫົວຂອງເຈົ້າສາມຄັ້ງ, ຈາກນັ້ນກໍ່ລາດນ້ຳໃຫ້ທົ່ວຮ່າງກາຍ ແລ້ວເຈົ້າກໍ່ຈະສະອາດ»[1].

ຖ້າຫາກຜູ້ຍິງຫມົດເລຍະເລືອດປະຈຳເດືອນໃນຊ່ວງເວລາລະຫມາດ, ຈຳເປັນຈະຕ້ອງຟ້າອາບນ້ຳຊຳລະຮ່າງກາຍ ເພື່ອໃຫ້ທັນການລະມາດໃນເວລານັ້ນ. ໃນກໍລະນີທີ່ນາງກຳລັງເດີນທາງ ແລະ ບໍ່ມີນ້ຳ, ຫຼື ມີນ້ຳ ແຕ່ຢ້ານວ່າຈະເກີດອັນຕະລາຍຈາກການໃຊ້ນ້ຳນັ້ນ, ຫຼື ນາງເຈັບປ່ວຍ ເຊິ່ງການໃຊ້ນ້ຳຈະເປັນອັນຕະລາຍຕໍ່ນາງ, ໃຫ້ນາງເຮັດຕະຢັມມຸມ ແທນການອາບນ້ຳຊຳລະຮ່າງກາຍ ຈົນກວ່າອຸປະສັກນັ້ນຈະຫມົດໄປ ແລ້ວຈຶ່ງອາບນ້ຳຊຳລະຮ່າງກາຍ.

ແລະ ມີແມ່ຍິງບາງຄົນທີ່ສະອາດຈາກປະຈຳເດືອນໃນຊ່ວງເວລາລະຫມາດ, ແລະ ພວກນາງໄດ້ເລື່ອນການອາບນ້ຳຊຳລະຮ່າງກາຍອອກໄປໃນເວລາອື່ນ ໂດຍໃຫ້ເຫດຜົນວ່າ: ບໍ່ສາມາດຊຳລະລ້າງຮ່າງກາຍໃຫ້ສະອາດສົມບູນໄດ້ໃນເວລານັ້ນ, ແຕ່ທະອ່າສິ່ງນີ້ບໍ່ແມ່ນຂໍ້ອ້າງ ແລະ ບໍ່ແມ່ນຂໍ້ແກ້ຕົວ; ເພາະວ່ານາງສ

[1] ບັນທຶກໂດຍທ່ານມຸສລິມ: ກິຕາບ ອັລ-ຮຍ, ບົດວ່າ ຫຸກ່ມຜົມເປຍຂອງຜູ້ຍິງທີ່ອາບນ້ຳກຸສລ, ເລກທີ (330), ຈາກຫະດີສຂອງທ່ານນາງ ອຸມມຸ ສະລາມະຫ໌ (ຂໍອັລລ໋ອ ຮ່ຽ ອັນຮ່ານ).

ามาดເຮັດການອາບນ້ຳຊຳລະຮ່າງກາຍພຽງຂັ້ນຕ່ຳທີ່ເປັນວາ
ຈິບ, ເພື່ອທີ່ຈະປະຕິບັດການລະມາດໃຫ້ທັນເວລາ, ຫຼັງຈາກນັ້ນ
ເມື່ອມີເວລາພຽງພໍ ຈຶ່ງຄ່ອຍເຮັດການຊຳລະຮ່າງກາຍໃຫ້ສົມບູ
ນຄົບຖ້ວນ.

ພາກທີຫ້າ: ວ່າດ້ວຍເລື່ອງອິສຕິຮາເດາະຫ໌ (ເລືອດທີ່ຜິດປົກກະຕິຂອງແມ່ຍິງ) ແລະ ຂໍ້ກຳໜົດຕ່າງໆ ຂອງມັນ.

ຄຳວ່າ "ອັລອິສຕິຮາເດາະຕຸ" ໝາຍເຖິງ ການມີເລືອດໄຫຼອ
ອກມາຢ່າງຕໍ່ເນື່ອງຂອງແມ່ຍິງ ໂດຍທີ່ເລືອດບໍ່ຢຸດໄຫຼເລີຍ ຫຼື
ຢຸດໄຫຼໃນໄລຍະເວລາອັນສັ້ນໆ ເຊັ່ນ: ມື້ໜຶ່ງ ຫຼື ສອງມື້ຕໍ່ເດືອນ.

ສ່ວນຫຼັກຖານຂອງກໍລະນີທຳອິດທີ່ເລືອດບໍ່ຢຸດໄຫຼຕະຫຼອດ
ນັ້ນ ແມ່ນສິ່ງທີ່ຖືກຢືນຢັນໃນ ຊໍຮີຫ໌ອັລບຸກຄ໌ຣີ ລາຍງານຈາກ
ທ່ານຍິງອາອີຊະຫ໌ ຣ໌ດີຍັລລ໌ລ໌ຮຸ ອັນຮາ ໄດ້ກ່າວວ່າ: ນາງຟາຕິມະ
ຫ໌ ບິນຕ໌ ອະບີ ຫຸໂບຊ໌ ໄດ້ກ່າວຕໍ່ທ່ານຣ໌ສູລລ໌ລ໌ຫ໌ ຊ໌ລລ໌ລ໌ລ໌ຮຸ ອະ
ໄລຮິ ອະສັລລຳ ວ່າ:

"يَا رَسُولَ اللَّهِ إِنِّي لَا أَطْهُرُ".

"ໂອ້ ທ່ານສາສະນະທູດຂອງອັລລ໌ລ໌ຫ໌, ແທ້ຈິງຂ້ານ້ອຍບໍ່ສະອ
າດ. ແລະ ໃນອີກລາຍງານໜຶ່ງ:

"أَسْتَحَاضُ فَلَا أَطْهُرُ".

ຂ້ານ້ອຍມີເລືອດໄຫຼອອກບໍ່ເຊົາ ຈຶ່ງບໍ່ສະອາດ"[1].

---

[1] ບັນທຶກໂດຍ ອັລບຸກ໌ຣ໌ຣ: ກິຕາບ ອັລວຸດຸອ໌, ບົດ ການລ້າງເລືອດ, ເລກທີ່ (228), ແລະ ມຸສລິມ: ກິຕາບ ອັລໄຮ໌ດ, ບົດ ອັລມຸສຕ໌ຮາເດາະຫ໌ ແລະ ການອາບນ້ຳ ແລະ ການລະຫ ມາດຂອງນາງ, ເລກທີ່ (333), ຈາກລາຍງານຂອງທ່ານຍິງອາອີຊະຫ໌ ຣ໌ດີຍັລລ໌ລ໌ຮຸ ອັນຮາ.

ແລະ ຫຼັກຖານຂອງກໍລະນີທີສອງທີ່ເລືອດບໍ່ຢຸດໄຫຼ ເຊິ່ນເສຍແຕ່ພຽງເລັກນ້ອຍນັ້ນ ແມ່ນຫະດີຊຂອງນາງ ຮໍານະຫ໌ ບິນຕ ຈະຫ໌ຊິນ, ເມື່ອນາງໄດ້ມາຫາທ່ານນະບີ ຊັລລັລລໍຮຸ ອະໄລຮິ ອະສັລລໍາ ແລະ ໄດ້ກ່າວວ່າ:

"يَا رَسُولَ اللَّهِ إِنِّي أُسْتَحَاضُ حَيْضَةً كَثِيرَةً شَدِيدَةً".

"ໂອ້, ທ່ານຮໍ່ຊູລຂອງອັລລໍຮ໌, ແທ້ຈິງຂ້ານ້ອຍມີເລືອດອອກມາຢ່າງຫລວງຫລາຍ ແລະ ຮຸນແຮງ. ບັນທຶກໂດຍ ອະຫ໌ມັດ, ແລະ ອະບູ ດາວູດ ແລະ ອັດ-ຕິຣມີຊີ[1]

ແລະ ທ່ານໄດ້ຕັດສິນວ່າມັນຊໍຮີຫ໌ ແລະ ໄດ້ອ້າງອີງການຕັດສິນວ່າຊໍຮີຫ໌ຈາກທ່ານອິມາມອະຫ໌ມັດ ແລະ ການຕັດສິນວ່າເ ປັນຫະດີດທີ່ດີ (ຫະຊັນ) ຈາກທ່ານອັລບຸກຄໍຣີ[2].

ກໍລະນີຕ່າງໆ ຂອງອິສຕິຮາເດາະຫ໌:

ກໍລະນີທັງສາມຂອງແມ່ຍິງທີ່ມີເລືອດຜິດປົກກະຕິມີດັ່ງນີ້:

ກໍລະນີທີໜຶ່ງ: ຄື ແມ່ຍິງທີ່ມີຮອບວຽນປະຈໍາເດືອນທີ່ແນ່ນອນກ່ອນທີ່ຈະມີເລືອດອິສຕິຮາເດາະ, ໃຫ້ນາງກັບໄປອີງໃສ່ເວລະເວລາຂອງຮອບວຽນປະຈໍາເດືອນທີ່ແນ່ນອນຂອງນາງທີ່ເຄີຍເປັນມາກ່ອນ. ໃນຊ່ວງເວລານັ້ນໃຫ້ນາງຢຸດພັກ ແລະ ປະຕິບັດຕາມຂໍ້ກໍານົດຂອງການມີປະຈໍາເດືອນ. ສ່ວນເລືອດທີ່ອອກນ

---

[1] ບັນທຶກໂດຍທ່ານອິມ່ານອະມັດ (6/ 349), ແລະ ທ່ານອາບຸດາວູດ ໃນກິຕາບ ອັດ-ຕໍຫາເຣາະຫ໌, ເລກທີ (287),
ແລະ ທີ່ຕິຣມີຊີ ໃນບົດ ອັດ-ຕໍຮາເຣາະຫ໌, ເລກທີ (128),
ຈາກຮະດີສຂອງ ທ່ານນາງ ຮໍານະຫ໌ ບິນຕ ຈະຫ໌ຊິນ ຂໍອັລລໍຮ໌ຊ່ວງພໍພຣະໄທຕໍ່ນາງ.

[2] ສຸນັນ ອັດ-ຕິຣມີຊີ: ພາກວ່າດ້ວຍການສໍາລະວ້າງ, ບົດກ່ຽວກັບແມ່ຍິງທີ່ເປັນອິສຕິຮາເດາະຫ໌ ທີ່ລວມສອງລະຫມາດດ້ວຍການອາບນໍ້າຄັ້ງດຽວ, ຕາມຫຼັງຫະດີຊເລກທີ (128).

ອາເຫມືອຈາກນັ້ນ ຖືວ່າເປັນເລືອດອິສຕິຮາເດາະ, ແລະ ໃຫ້ນາ ງປະຕິບັດຕາມຂໍ້ກຳນົດສຳລັບຜູ້ຍິງທີ່ມີເລືອດອິສຕິຮາເດາະ.

ຕົວຢ່າງກໍຄື ແມ່ຍິງຄົນຫນຶ່ງທີ່ປົກກະຕິແລ້ວມີເລືອດປະ ຈຳເດືອນຫົກມື້ໃນຊ່ວງຕົ້ນຂອງທຸກ ໆ ເດືອນ, ຕໍ່ມານາງກໍ່ມີ ເລືອດ ອິສຕິຮາເດາະ ເຊິ່ງເຮັດໃຫ້ເລືອດໄຫຼອອກມາຢ່າງຕໍ່ເນື່ ອງ, ດັ່ງນັ້ນ ໄລຍະເວລາປະຈຳເດືອນຂອງນາງກໍຄືຫົກວັນໃນຊ່ ວງຕົ້ນຂອງທຸກໆ ເດືອນ, ສ່ວນທີ່ນອກເຫນືອຈາກນັ້ນແມ່ນເລື ອດ ອິສຕິຮາເດາະ. ຈາກຫະດີຊ ທີ່ລາຍງານຈາກ ທ່ານນາງ ອາ ອີຊະ ຮ໌ ຣ໌ດີຍັລລ໌ຮຸ ອັນຮາ ວ່າ: ທ່ານນາງ ຟາຕິມະ ຮ໌ ບິນຕ໌ ອາບີ ຫຸໂບຊ໌ ໄດ້ກ່າວຖາມວ່າ: ໂອ້ ທ່ານລ໌ຊູລຂອງອັລລ໌ ຮ໌, ແທ້ຈິງຂ້ າ ນ້ອຍເປັນຜູ້ຍິງທີ່ມີເລືອດອິສຕິຮາເດາະ ຫ໌ (ເລືອດເສຍ) ໄຫຼອ ອກມາຕະຫຼອດເວລາຈົນບໍ່ສະອາດຈັກເທື່ອ, ຂ້ານ້ອຍຄວນຈະ ປະລະການລະຫມາດບໍ? ທ່ານໄດ້ກ່າວວ່າ:

«لَا، إِنَّ ذَلِكَ عِرْقٌ، وَلَكِنْ دَعِي الصَّلَاةَ قَدْرَ الْأَيَّامِ الَّتِي كُنْتِ تَحِيضِينَ فِيهَا ثُمَّ اغْتَسِلِي وَصَلِّي».

"ບໍ່, ນັ້ນເປັນພຽງເລືອດເສັ້ນຈາກເລືອດ, ແຕ່ເຈົ້າຈົ່ງລະເວັ້ ນການລະຫມາດຕາມຈຳນວນວັນທີ່ເຈົ້າເຄີຍເປັນປະຈຳເດືອ ນ, ຫຼັງຈາກນັ້ນຈົ່ງອາບນ້ຳ ແລະ ລະຫມາດເຖີດ. ບັນທຶກໂດຍອັ ລ-ບຸກຄ໌ ຣ[1].

[1] ບັນທຶກໂດຍ ອັລບຸກຄ໌ ຣ: ບົດວ່າດ້ວຍການມີປະຈຳເດືອນ, ຫົວຂໍ້ ການມີປະຈຳເດືອນ, ແລະ ສິ່ງທີ່ແມ່ຍິງຖືກເຊື່ອໃນເລື່ອງການມີປະຈຳເດືອນ ແລະ ການຖືພາ, ໃນສິ່ງທີ່ເປັນໄປໄດ້ຈາກ ການມີປະຈຳເດືອນ, ເລກທີ່ (325), ຈາກຫະດີສຂອງ ທ່ານຍິງອາອີຊະ ຫ໌ ຂໍອັລລ໌ ຮ໌ ຈົ່ງພໍພຣ ະໄທຕໍ່ນາງ.

ແລະ ລາຍງານທີ່ຖືກຕ້ອງຈາກມຸສລິມ: ແທ້ຈິງທ່ານນະບີ ﷺ ໄດ້ກ່າວແກ່ທ່ານນາງ ອຸມມຸ ຫະບີບະຫ໌ ບິນຕ ຈະຫ໌ຊ ວ່າ:

«امْكُثِي قَدْرَ مَا كَانَتْ تَحْبِسُكِ حَيْضَتُكِ ثُمَّ اغْتَسِلِي وَصَلِّ».

"ຈົ່ງງົດຕາມກຳນົດເວລາທີ່ປະຈຳເດືອນຂອງເຈົ້າເຄີຍມາ, ຈາກນັ້ນຈົ່ງອາບນ້ຳຊຳລະຮ່າງກາຍ ແລະ ລະຫມາດເຖິດ"[1].

ດ້ວຍເຫດນີ້, ຜູ້ຍິງທີ່ມີເລືອດອອກຜິດປົກກະຕິທີ່ຮູ້ກຳນົດເວລາປະຈຳເດືອນຂອງຕົນເອງ, ໃຫ້ນາງຢຸດພັກຕາມກຳຫນົດເວລາປະຈຳເດືອນຂອງນາງ, ຈາກນັ້ນໃຫ້ນາງອາບນ້ຳຊຳລະຮ່າງກາຍ ແລະ ປະຕິບັດການລະມາດ, ໂດຍບໍ່ຕ້ອງສົນໃຈກັບເລືອດທີ່ໄຫລອອກມາໃນເວລາເກີນຈາກນັ້ນ.

ກໍລະນີທີສອງ: ຄືການທີ່ນາງບໍ່ມີຮອບປະຈຳເດືອນທີ່ແນ່ນອນມາກ່ອນ ທີ່ຈະມີເລືອດຜິດປົກກະຕິ (ອິສຕິຮາດາ), ໂດຍທີ່ເລືອດຜິດປົກກະຕິນັ້ນໄຫຼອອກມາຢ່າງຕໍ່ເນື່ອງຕັ້ງແຕ່ຄັ້ງທຳອິດທີ່ນາງເລີ່ມມີເລືອດ. ໃນກໍລະນີນີ້ ໃຫ້ອີງໃສ່ການຈຳແນກລັກສະນະຂອງເລືອດ, ດັ່ງນັ້ນ ເລືອດປະຈຳເດືອນຂອງນາງ ຄືເລືອດທີ່ສາມາດຈຳແນກໄດ້ດ້ວຍສີທີ່ດຳເຂັ້ມ, ມີຄວາມຂຸ້ນ ຫຼື ມີກິ່ນ, ເຊິ່ງຈະຖືກນຳໃຊ້ກັບຂໍ້ກຳຫນົດຂອງເລືອດປະຈຳເດືອນ. ສ່ວນເລືອດທີ່ນອກເໜືອຈາກນີ້ ຖືເປັນເລືອດຜິດປົກກະຕິ (ອິສຕິຮາດາ) ເຊິ່ງຈະຖືກນຳໃຊ້ກັບຂໍ້ກຳນົດຂອງເລືອດຜິດປົກກະຕິ.

---

[1] ບັນທຶກໂດຍທ່ານມຸສລິມ: ກິຕາບ ອັລຮຍ, ບົດວ່າດ້ວຍ ອັລມຸສຕະຮາດ່ະຫ໌ ການອາບນ້ຳ ແລະ ການລະໝາດຂອງນາງ, ເລກທີ (334), ຈາກຫະດີດຂອງທ່ານນາງອາອີຊະຫ໌ ຂໍອັລລ໋ອ ຈົ່ງພໍພຣະໄທຕໍ່ນາງ.

ຕົວຢ່າງເຊັ່ນ: ຜູ້ຍິງຄົນໜຶ່ງທີ່ເລີ່ມມີເລືອດອອກມາ ແລະ ມັນໄຫລອອກມາຢ່າງຕໍ່ເນື່ອງ, ແຕ່ນາງສັງເກດເຫັນວ່າ ເປັນເ ວລາສິບມື້ແລ້ວເລືອດເປັນສີດຳ ແລະ ສ່ວນທີ່ເຫລືອຂອງເດືອ ນເປັນສີແດງ, ຫຼື ເປັນເວລາສິບມື້ແລ້ວເລືອດມີລັກສະນະຂົ້ນ ຂຸ້ນ ແລະ ສ່ວນທີ່ເຫລືອຂອງເດືອນມີລັກສະນະສີໃສ, ຫຼື ເປັນເ ວລາສິບມື້ເລືອດມີກິ່ນຂອງເລືອດປະຈຳເດືອນ ແລະ ສ່ວນທີ່ ຫລືອຂອງເດືອນບໍ່ມີກິ່ນ, ສະນັ້ນ, ເລືອດປະຈຳເດືອນຂອງນາງ ກໍຄື ເລືອດສີດຳໃນຕົວຢ່າງທີໜຶ່ງ, ເລືອດທີ່ຂົ້ນຂຸ້ນໃນຕົວຢ່າ ງທີສອງ, ແລະ ເລືອດທີ່ມີກິ່ນໃນຕົວຢ່າງທີສາມ, ສ່ວນສິ່ງທີ່ນ ອກເໜືອຈາກນີ້ ຖືວ່າເປັນເລືອດ ອິສຕິຮາເດາະ (ເລືອດຜິດປົ ກກະຕິ). ຈາກຄຳກ່າວຂອງທ່ານນະບີ ຊ່ອລ ລ ລ ອະໄລຮິ ອະຊ ລ ລ ລ ແລ ຟາຕິມະ ບິນຕ ອະບີ ຫຸໄບຊ ວ່າ:

«إِذَا كَانَ دَمُ الْحَيْضَةِ فَإِنَّهُ أَسْوَدُ يُعْرَفُ، فَإِذَا كَانَ ذَلِكَ فَأَمْسِكِي عَنِ الصَّلَاةِ فَإِذَا كَانَ الْآخَرُ فَتَوَضَّئِي وَصَلِّي؛ فَإِنَّمَا هُوَ عِرْقٌ».

«ຖ້າຫາກເປັນເລືອດປະຈຳເດືອນ, ແທ້ຈິງແລ້ວມັນຈະເປັ ນສີດຳທີ່ເປັນທີ່ຮູ້ຈັກ, ຖ້າຫາກເປັນເຊັ່ນນັ້ນ ກໍ່ຈົ່ງງົດເວັ້ນຈາກ ການລະຫມາດ. ແຕ່ຖ້າຫາກເປັນເລືອດຊະນິດອື່ນ ກໍ່ຈົ່ງອາບ ນ້ຳລະຫມາດ ແລະ ລະຫມາດເຖີດ; ເພາະມັນເປັນພຽງເລືອດທີ່ ອອກຈາກເສັ້ນເລືອດເທົ່ານັ້ນ». [ບັນທຶກໂດຍ ອະບູດາອູດ ແລ ະ ນະຊາອີ, ແລະ ຢັ້ງຢືນຄວາມຖືກຕ້ອງໂດຍ ທ່ານ ອິບນຸ ຮິບບ ານ ແລະ ທ່ານຮາກິມ][1].

[1] ບັນທຶກໂດຍ ອະບູ ດາອູດ: ປຶ້ມວ່າດ້ວຍຄວາມສະອາດ, ບົດວ່າດ້ວຍ ຜູ້ທີ່ກ່າວວ່າ ເມື່ອມີປະ ຈຳເດືອນໃຫ້ງົດການລະຫມາດ, ເລກທີ (286),

ເຖິງວ່າສາຍລາຍງານ ແລະ ເນື້ອໃນຂອງຫະດີຊຸບົດນີ້ຈະມີຂໍ້ສັງເກດຢູ່ກໍ່ຕາມ, ແຕ່ບັນດານັກວິຊາການ -ຂໍອັລລໍຮ໌ຊົງເມດຕາພອກເຂົາ- ກໍ່ໄດ້ຍຶດຖືປະຕິບັດຕາມ, ເຊິ່ງເປັນສິ່ງທີ່ດີກວ່າການກັບໄປອີງຕາມນິໄສໂດຍທົ່ວໄປຂອງແມ່ຍິງສ່ວນຫຼາຍ.

ກໍລະນີທີ່ສາມ: ກໍລະນີທີ່ບໍ່ມີຮອບປະຈຳເດືອນທີ່ແນ່ນອນ ແລະ ບໍ່ສາມາດຈຳແນກລັກສະນະຂອງເລືອດໄດ້, ໂດຍທີ່ເລືອດຜິດປົກກະຕິ (ອິສຕິຮາເດາະ) ໄຫລຢ່າງຕໍ່ເນື່ອງນັບຕັ້ງແຕ່ເລີ່ມເຫັນເລືອດຄັ້ງທຳອິດ, ແລະ ເລືອດນັ້ນມີລັກສະນະດຳ ຫຼື ມີລັກສະນະທີ່ບໍ່ສະຫມ່ຳສະເຫມີຈົນບໍ່ສາມາດເປັນເລືອດປະຈຳເດືອນໄດ້, ສະນັ້ນ ໃຫ້ນາງປະຕິບັດຕາມຮີດຄອງຂອງຜູ້ຍິງສ່ວນໃຫຍ່ ໂດຍກຳນົດໃຫ້ເລືອດປະຈຳເດືອນຂອງນາງເປັນເວລາຫົກ ຫຼື ເຈັດມື້ໃນແຕ່ລະເດືອນ, ເຊິ່ງເລີ່ມນັບຈາກມື້ທຳອິດທີ່ນາງເຫັນເລືອດ, ສ່ວນທີ່ນອກເໜືອຈາກນັ້ນແມ່ນເລືອດທີ່ຜິດປົກກະຕິ.

ຕົວຢ່າງເຊັ່ນ: ນາງເລີ່ມມີເລືອດອອກໃນວັນທີຫ້າຂອງເດືອນ ແລະ ມີເລືອດອອກຢ່າງຕໍ່ເນື່ອງໂດຍບໍ່ມີລັກສະນະທີ່ຈຳແນກໄດ້ວ່າເປັນເລືອດປະຈຳເດືອນ, ບໍ່ວ່າຈະເປັນສີ ຫຼື ລັກສະນະອື່ນໆ, ດັ່ງນັ້ນ ການມີປະຈຳເດືອນຂອງນາງໃນແຕ່ລະເດືອນຈະຖື

ແລະ ອັນ-ນາຊາອີ: ປຶ້ມວ່າດ້ວຍຄວາມສະອາດ, ບົດວ່າດ້ວຍ ຜູ້ຍິງທີ່ມີເລືອດຜິດປົກກະຕິທີ່ຮູ້ຈຳນວນມື້ຂອງຮອບເດືອນຂອງຕົນ ກ່ອນທີ່ເລືອດຈະໄຫຼຕໍ່ເນື່ອງ, ເລກທີ (211),

ແລະ ອິບນຸ ມາຈະ້ ຫ: ປຶ້ມວ່າດ້ວຍຄວາມສະອາດ ແລະ ແບບສະບັບຕ່າງໆ ຂອງມັນ, ບົດວ່າດ້ວຍ ຜູ້ຍິງທີ່ມີເລືອດຜິດປົກກະຕິທີ່ຮູ້ຈຳນວນມື້ຂອງຮອບເດືອນຂອງຕົນ ກ່ອນທີ່ເລືອດຈະໄຫຼຕໍ່ເນື່ອງ, ເລກທີ (620),

ແລະ ອິບນຸ ຮິບບານ ໃນປຶ້ມສ ຮ ິ ຫ ໍ ຂອງທ່ານ (1348),

ແລະ ອັນ-ຮາກິມ ໃນປຶ້ມ ມຸ ສ ຕ ັ ດ ຣ ັ ອກ ຂອງທ່ານ (618),

ຈາກຫະດີດຂອງທ່ານນາງ ອາອິຊະ ຫ ໍ ຂໍອັລລໍ ຫ ໍ ຊົງພໍພຣະໄທແດ່ນາງ.

ການັບເປັນເວລາ ຫ້າ ຫຼື ເຈັດມື້ ໂດຍເລີ່ມຈາກວັນທີຫ້າຂອງທຸກໆ ເດືອນ. ຈາກຫະດີຊ: ລາຍງານຈາກ ທ່ານນາງ ຮໍານະຫ໌ ບິນ ຕີ ຈະຫ໌ຊິນ ຣ໌ດີຍັລລໍຮ ອັນຮາ ໄດ້ກ່າວວ່າ: ໂອ້ ທ່ານຣ໌ສູລຸລລໍຫ໌, ຂ້າພະເຈົ້າມີເລືອດເສຍໄຫຼອອກມາຢ່າງຫຼວງຫຼາຍ ແລະ ຮຸນແຮງ, ທ່ານມີຄວາມເຫັນແນວໃດໃນເລື່ອງນີ້? ເຊິ່ງມັນໄດ້ກີດກັນຂ້ອຍຈາກການລະຫມາດ ແລະ ການຖືສິນອົດ, ດັ່ງນັ້ນ ທ່ານນະບີ ຊ໋ລລັລລໍຮ ອະໄລຮິ ອະຊ໋ລລໍາ ຈຶ່ງໄດ້ກ່າວວ່າ:

«أَنْعَتُ لَكِ (أَصِفُ لَكِ اسْتِعْمَال) الْكُرْسُفَ (وهُوَ القُطْنُ) تَضَعِينَهُ عَلَى الْفَرْجِ، فَإِنَّهُ يُذْهِبُ الدَّمَ».

«ຂ້ອຍຈະອະທິບາຍໃຫ້ເຈົ້າກ່ຽວກັບ ອັລກຸລຸຟ (ເຊິ່ງກໍ່ຄື ສໍາລີ), ໂດຍໃຫ້ເຈົ້າເອົາມັນວາງໄວ້ເທິງອະໄວຍະວະເພດ, ເພາະແທ້ຈິງແລ້ວມັນຈະຊ່ວຍຊັບເລືອດ», ນາງໄດ້ກ່າວວ່າ: ມັນມີຫຼາຍໂປກວ່ານັ້ນ. ແລະໃນເລື່ອງດັ່ງກ່າວ ທ່ານກ່າວວ່າ:

«إِنَّمَا هَذَا رَكْضَةٌ مِنْ رَكَضَاتِ الشَّيْطَانِ، فَتَحَيَّضِي سِتَّةَ أَيَّامٍ أَوْ سَبْعَةً فِي عِلْمِ اللَّهِ تَعَالَى، ثُمَّ اغْتَسِلِي حَتَّى إِذَا رَأَيْتِ أَنَّكِ قَدْ طَهُرْتِ وَاسْتَنْقَيْتِ فَصَلِّي أَرْبَعًا وَعِشْرِينَ أَوْ ثَلَاثًا وَعِشْرِينَ لَيْلَةً وَأَيَّامَهَا وَصُومِي».

"ແທ້ຈິງແລ້ວ ນີ້ເປັນພຽງການກະທົບທະທັງຈາກໄຊຕອນ, ດັ່ງນັ້ນເຈົ້າຈົ່ງຖືວ່າຕົນເອງມີປະຈໍາເດືອນເປັນເວລາຫ້າ ຫຼື ເຈັດວັນ ຕາມຄວາມຮອບຮູ້ຂອງອົງອັລລໍຫ໌ ຜູ້ຊົງສູງສົ່ງ, ຈາກນັ້ນຈົ່ງອາບນ້ໍາຍົກຫະດັຊ, ເມື່ອເຈົ້າເຫັນວ່າຕົນເອງສະອາດບໍລິສຸດແລ້ວ ກໍ່ຈົ່ງລະຫມາດຕະຫຼອດຊາວສີ່ ຫຼື ຊາວສາມ ທັງກາງເວັນ ແລະ ກາງຄືນຂອງມັນ, ແລະ ຈົ່ງຖືສິນອົດ. [ບັນທຶກໂດຍ ອ

ະຫ໌ມັດ, ອາບູ ດາວູດ ແລະ ອັດ-ຕັຣມີຊີ ແລະ ທ່ານໄດ້ຕັດສິນວ່າມັນຮຸ່ຮີຫ໌[1],

ແລະ ມີລາຍງານຈາກທ່ານອະຫ໌ມັດວ່າ ທ່ານກໍ່ໄດ້ຕັດສິນວ່າມັນຮຸ່ຮີຫ໌ເຊັ່ນກັນ, ແລະ ຈາກທ່ານອັລບຸກຄ໌ຣີວ່າ ທ່ານໄດ້ຕັດສິນວ່າມັນເປັນຫະດີຊ ຫະສັນ][2].

ແລະ ຄຳກ່າວຂອງທ່ານນະບີ ຊຸລັວລ໌ຮ ອະໄລຮິ ອະສັວລ໌ມ ທີ່ວ່າ: «ຫ້າມ ຫຼື ເຈ້ດມື້» ບໍ່ແມ່ນການໃຫ້ເລືອກ, ແຕ່ຫາກເປັນການໃຊ້ການພິຈາລະນາ, ໂດຍໃຫ້ນາງພິຈາລະນາເຖິງສິ່ງທີ່ໃກ້ຄຽງກັບສະພາບຂອງນາງທີ່ສຸດ ຈາກຜູ້ທີ່ມີຮູບຮ່າງລັກສະນະ, ອາຍຸ ແລະ ຍາດຕິພີ່ນ້ອງທີ່ໃກ້ຄຽງກັບນາງ, ແລະ ພິຈາລະນາເຖິງເລືອດຂອງນາງວ່າອັນໃດໃກ້ຄຽງກັບເລືອດປະຈຳເດືອນຫຼາຍກວ່າ, ແລະ ການພິຈາລະນາອື່ນໆ ໃນທຳນອງດຽວກັນນີ້. ສະນັ້ນ, ຖ້າຫາກວ່າໃກ້ຄຽງທີ່ຈະເປັນຫ້າ ກໍ່ໃຫ້ຖືວ່າເປັນຫ້າ, ແລະ ຖ້າຫາກວ່າໃກ້ຄຽງທີ່ຈະເປັນເຈ້ດ ກໍ່ໃຫ້ຖືວ່າເປັນເຈ້ດ.

---

[1] ບັນທຶກໂດຍທ່ານອະຫ໌ມັດ (6/ 439), ທ່ານອາບຸດາວູດ: ໜັງສື ອັດ-ຕ໋ຮາເຮາະຫ໌, ບົດ ຜູ້ທີ່ກ່າວວ່າ ເມື່ອເລືອດປະຈຳເດືອນມາ ໃຫ້ລະເວັ້ນການລະມາດ, ເລກທີ (287),

ແລະ ທ່ານອັດ-ຕີຣມີຊີ:ເລື່ອງກ່ຽວກັບ ອັດ-ຕ໋ຮາເຮາະຫ໌, ບົດ ກ່ຽວກັບຜູ້ຍິງທີ່ມີເລືອດຜິດປົກກະຕິ (ອິສຕິຮາດາະຫ໌) ທີ່ນາງໄດ້ລວມສອງການລະຫມາດດ້ວຍການອາບນ້ຳຊຳລະຮ່າງກາຍຄັ້ງດຽວ, ເລກທີ (128),

ຈາກຮະດີຊຂອງ ທ່ານນາງ ຮ່ານະຫ໌ ບິນຕ໌ ຈະຫ໌ຊ໌ (ຂໍອັນລ໋ຮ ຊຸ່ງພໍພຣະໂທນາງ).

[2] ສຸນັນ ອັດ-ຕີຣມີຊີ: ປຶ້ມວ່າດ້ວຍການຊຳລະລ້າງ, ບົດວ່າດ້ວຍແມ່ຍິງທີ່ມີເລືອດເສຍສາມາດລວມສອງເວລາລະຫມາດດ້ວຍການອາບນ້ຳຍົກຫະດັດຄັ້ງດຽວ, ຫຼັງຈາກຫະດີດເລກທີ (128).

ສະພາບຂອງຜູ້ຍິງທີ່ຄ້າຍຄືກັບຜູ້ເປັນມຸສຕະຮາດາ ະຫ໌:

ບາງຄັ້ງແມ່ຍິງອາດມີສາເຫດທີ່ພາໃຫ້ມີເລືອດອອກຈາກອ ະໄວຍະອະເພດຂອງນາງ ເຊັ່ນ: ການຜ່າຕັດໃນມົດລູກ ຫຼື ໃນສ ວນທີ່ຢູ່ຖັດລົງມາ, ແລະ ເລືອດນີ້ແບ່ງອອກເປັນສອງປະເພດ ຄື:

ປະເພດທີໜຶ່ງ: ຄືເປັນທີ່ຮູ້ກັນວ່ານາງບໍ່ສາມາດມີປະຈຳເດືອນໄດ້ອີກພາຍຫຼັງທີ່ມີການຜ່າຕັດ ເຊັ່ນ ການຜ່າຕັດເອົາມົດລູກອອກທັງໝົດ ຫຼື ອັດມັນໄວ້ ເຊິ່ງເຮັດໃຫ້ບໍ່ມີເລືອດໄຫຼອອກມາໄດ້. ສະນັ້ນ ຜູ້ຍິງຄົນນີ້ຈຶ່ງບໍ່ຖືກນັບເຂົ້າໃນຂໍ້ກຳນົດຂອງຜູ້ຍິງທີ່ມີເລືອດເສຍ (ມຸສຕະຮາດາະ), ແຕ່ຂໍ້ກຳນົດຂອງນາງແມ່ນຄືກັບແມ່ຍິງທີ່ເຫັນມີນ້ຳສີເຫຼືອງ ຫຼື ສີຂຸ່ນ ຫຼື ຄວາມຊຸ່ມ ພາຍຫຼັງທີ່ສະອາດແລ້ວ. ສະນັ້ນ ນາງບໍ່ຕ້ອງປະ ບໍ່ຖິ້ມ ການລະຫມາດ ແລະ ການຖືສິນອົດ, ແລະ ບໍ່ຫ້າມການມີເພດສຳພັນກັບນາງ, ແລະ ບໍ່ຈຳເປັນຕ້ອງອາບນ້ຳຊຳລະຮ່າງກາຍ (ກຸສູລ) ຈາກເລືອດດັ່ງກ່າວ.

ແຕ່ສິ່ງທີ່ຈຳເປັນສຳລັບນາງກ່ອນການລະຫມາດກໍຄືການ ລ້າງເລືອດອອກ, ແລະ ໃຫ້ເອົາຜ້າມາອັດບໍລິເວນອະໄວຍະອະເພດໄວ້ ເພື່ອປ້ອງກັນບໍ່ໃຫ້ເລືອດໄຫຼອອກມາ, ຫຼັງຈາກນັ້ນກໍໃຫ້ອາບນ້ຳລະມາດເພື່ອກຽມລະຫມາດ. ແລະ ນາງຈະບໍ່ອາບນ້ຳລະມາດຈົນກວ່າຈະເຂົ້າເວລາລະຫມາດ, ຖ້າຫາກການລະຫມາດນັ້ນມີເວລາກຳນົດໄວ້ ເຊັ່ນ ການລະມາດທັງຫ້າເວລາ. ແຕ່ຖ້າບໍ່ແມ່ນ ກໍໃຫ້ອາບນ້ຳລະມາດເມື່ອຕ້ອງການຈະລະຫມາດ ເຊັ່ນ ການລະມາດລຸນນັດທ່ຽງ.

ປະເພດທີສອງ: ກໍລະນີທີ່ບໍ່ຮູ້ວ່າການມີປະຈຳເດືອນຂອງນາງຈະຢຸດລົງຫຼັງຈາກການຜ່າຕັດ, ແຕ່ຍັງມີຄວາມເປັນໄປໄດ້ທີ່ນາງຈະມີປະຈຳເດືອນຢູ່, ສະນັ້ນ ຂໍ້ກຳນົດຂອງນາງກໍເໝືອນກັບຜູ້ຍິງທີ່ມີເລືອດອອກຜິດປົກກະຕິ, ແລະ ຫຼັກຖານຢືນຢັນໃນເລື່ອງນີ້ກໍຄືຄຳກ່າວຂອງທ່ານນະບີ ﷺ ທີ່ວ່າ:

«إِنَّمَا ذَلِكَ عِرْقٌ وَلَيْسَ بِالْحَيْضَةِ، فَإِذَا أَقْبَلَتِ الْحَيْضَةُ فَاتْرُكِي الصَّلَاةَ».

"ນັ້ນເປັນພຽງເລືອດຈາກເສັ້ນເລືອດ ແລະ ບໍ່ແມ່ນເລືອດປະຈຳເດືອນ, ດັ່ງນັ້ນ ເມື່ອເລືອດປະຈຳເດືອນມາ ກໍຈົ່ງລະເວັ້ນການລະຫມາດ"[1].

ແລະ ຄຳເວົ້າຂອງທ່ານຕິມິອ່າ :

«فَإِذَا أَقْبَلَتِ الْحَيْضَةُ»

«ເມື່ອເລືອດປະຈຳເດືອນມາ» ຊີ້ໃຫ້ເຫັນວ່າ: ຂໍ້ກຳນົດຂອງຜູ້ຍິງທີ່ມີເລືອດອອກຜິດປົກກະຕິ (ອິສຕິຮາດໂອະ) ນັ້ນ ແມ່ນສຳລັບຜູ້ທີ່ມີຮອບເດືອນທີ່ສາມາດຈຳແນກໄດ້ຢ່າງຊັດເຈນ.

ສ່ວນຜູ້ທີ່ບໍ່ສາມາດຈຳແນກຮອບເດືອນຂອງຕົນໄດ້, ເລືອດຂອງນາງກໍ່ຄືເປັນພຽງເລືອດຈາກເສັ້ນເລືອດໃນທຸກໆ ກໍລະນີ.

---

[1] ບັນທຶກໂດຍອັລບຸກອ໌ຣີ: ປຶ້ມວ່າດ້ວຍການເຮັດນ້ຳລະຫມາດ, ບົດວ່າດ້ວຍການລ້າງເລືອດ, ຂໍ້ທີ (228),
ແລະ ມຸສລິມ: ປຶ້ມວ່າດ້ວຍເລືອດປະຈຳເດືອນ, ບົດວ່າດ້ວຍຜູ້ຍິງທີ່ມີເລືອດອິສຕິຮາດໂອະ ແລະ ການອາບນ້ຳ ແລະ ການລະຫມາດຂອງນາງ, ຂໍ້ທີ (333),
ຈາກວາຍງານຂອງທ່ານຍິງອາອິຊະ ຣ.ດ.ຍ.ລ.ອ.ຮ. ອັນຮາ.

ຂໍ້ກຳນົດຕ່າງໆ ກ່ຽວກັບເລືອດອິສຕິຮາເດາະຫ໌ ມີດັ່ງນີ້:

ຈາກທີ່ໄດ້ກ່າວມາກ່ອນໜ້ານີ້ ພວກເຮົາກໍໄດ້ຮູ້ແລ້ວວ່າ ເ ລືອດທີ່ຈະເປັນເລືອດປະຈຳເດືອນນັ້ນຖືກນັບເມື່ອໃດ ແລະ ຈະ ເປັນເລືອດທີ່ຜິດປົກກະຕິ (ອິສຕິຮາເດາະ) ເມື່ອໃດ. ດັ່ງນັ້ນ, ເ ມື່ອໃດທີ່ເປັນເລືອດປະຈຳເດືອນ, ມັນກໍຈະຕົກຢູ່ພາຍໃຕ້ຂໍ້ກຳ ໜົດຂອງເລືອດປະຈຳເດືອນ, ແລະ ເມື່ອໃດທີ່ເປັນເລືອດທີ່ຜິ ດປົກກະຕິ (ອິສຕິຮາເດາະ), ມັນກໍຈະຕົກຢູ່ພາຍໃຕ້ຂໍ້ກຳໜົດ ຂອງເລືອດທີ່ຜິດປົກກະຕິ (ອິສຕິຮາເດາະ).

ແລະ ຂໍ້ກຳໜົດທີ່ສຳຄັນກ່ຽວກັບເລືອດປະຈຳເດືອນກໍໄດ້ ກ່າວຜ່ານມາແລ້ວ.

ສ່ວນຂໍ້ກຳນົດຂອງສະພາວະອິສຕິຮາເດາະຫ໌ ແມ່ນຄືກັນກັ ບຂໍ້ກຳນົດຂອງສະພາວະທີ່ສະອາດ, ດັ່ງນັ້ນຈຶ່ງບໍ່ມີຄວາມແຕກ ຕ່າງລະຫວ່າງແມ່ຍິງທີ່ເປັນອິສຕິຮາເດາະຫ໌ ແລະ ບັນດາແມ່ຍິ ງທີ່ຢູ່ໃນສະພາວະທີ່ສະອາດ, ຍົກເວັ້ນໃນກໍລະນີດັ່ງຕໍ່ໄປນີ້:

ຂໍ້ທີໜຶ່ງ: ອາຈິບ ທີ່ນາງຈະຕ້ອງອາບນ້ຳລະມາດສຳລັບທຸກ ໆ ການລະມາດ, ຈາກຄຳກ່າວຂອງທ່ານນະບີ ຊຸລລັລລໍຮ ອະໄລ ຮິ ອະຊັລລຳ ແກ່ ຟາຕິມະຫ໌ ບິນຕ ອະບີ ຫຸໄບຊ໌ ວ່າ:

«ثُمَّ تَوَضَّئِي لِكُلِّ صَلَاةٍ».

«ແລ້ວຈົ່ງອາບນ້ຳລະຫມາດສຳລັບການລະຫມາດທຸກຄັ້ງ» ບັນທຶກໂດຍ ອັລ-ບຸກຄ໌ຣີ ໃນບົດການລ້າງເລືອດ, ຄວາມໝາຍ ກໍຄື ນາງຈະບໍ່ເຮັດການອາບນ້ຳລະຫມາດສຳລັບການລະຫມາ ດທີ່ມີເວລາກຳນົດ ເວັ້ນເສຍແຕ່ຫຼັງຈາກທີ່ເຂົ້າເວລາຂອງມັນ

ແລ້ວ. ສຳລັບການລະຫມາດທີ່ບໍ່ໄດ້ກຳນົດເວລາ, ນາງກໍ່ຈະຕ້ອງອາບນ້ຳລະຫມາດ ເມື່ອຕັ້ງໃຈທີ່ຈະປະຕິບັດມັນ.

ປະການທີສອງ: ຫາກນາງຕ້ອງການທີ່ຈະອາບນ້ຳລະຫມາດ, ໃຫ້ນາງລ້າງຄາບເລືອດອອກ, ແລະ ໃຊ້ສຳລີອັດໄວ້ທີ່ອະໄວຍະອະເພດ ແລ້ວໃຊ້ຜ້າພັນທັບໄວ້ ເພື່ອປ້ອງກັນບໍ່ໃຫ້ເລືອດໄຫລອອກມາ; ດັ່ງທີ່ທ່ານນະບີ ສັລລັລລ໋ຮຸ ອາໄລຮິ ອະສັລລັມ ໄດ້ກ່າວແກ່ນາງຫໍານະຫ໌ວ່າ:

«أَنْعَتُ لَكِ الْكُرْسُفَ فَإِنَّهُ يُذْهِبُ الدَّمَ». قَالَتْ: فَإِنَّهُ أَكْثَرُ مِنْ ذَلِكَ. قَالَ: «فَاتَّخِذِي ثَوْبًا». قَالَتْ: هُوَ أَكْثَرُ مِنْ ذَلِكَ. قَالَ: «فَتَلَجَّمِي».

"ຂ້ອຍຂໍແນະນຳໃຫ້ເຈົ້າໃຊ້ສຳລີ ເພາະມັນຊ່ວຍຊັບເລືອດໄດ້." ນາງກ່າວວ່າ: ເລືອດມັນອອກຫຼາຍກວ່ານັ້ນ. ທ່ານຈຶ່ງກ່າວວ່າ: "ຖ້າຢ່າງນັ້ນກໍ່ໃຫ້ໃຊ້ຜ້າ." ນາງກ່າວວ່າ: ມັນຍັງອອກຫຼາຍກວ່ານັ້ນອີກ. ທ່ານຈຶ່ງກ່າວວ່າ: "ຖ້າຢ່າງນັ້ນກໍ່ໃຫ້ເຈົ້າເອົາຜ້າມັດໄວ້ໃຫ້ແໜ້ນ. ອັລ-ຫະດີຊ, ແລະ ສິ່ງທີ່ອອກມາຫຼັງຈາກນັ້ນກໍ່ບໍ່ເປັນອັນຕະລາຍແກ່ນາງ, ເນື່ອງຈາກທ່ານນະບີ ຊ໋ລລັລລ໋ຮຸ ອະລັຍຮິ ອະຊັລລໍາ ໄດ້ກ່າວແກ່ນາງຟາຕິມະຫ໌ ບິນຕ໌ ອະບີ ຫຸບັຍຊ໋ ວ່າ:

«اجْتَنِبِي الصَّلَاةَ أَيَّامَ حَيْضِكِ، ثُمَّ اغْتَسِلِي وَتَوَضَّئِي لِكُلِّ صَلَاةٍ، ثُمَّ صَلِّي، وَإِنْ قَطَرَ الدَّمُ عَلَى الْحَصِيرِ».

«ຈົ່ງລະເວັ້ນຈາກການລະຫມາດໃນຊ່ວງທີ່ມີປະຈຳເດືອນ, ພໍເມື່ອຫມົດແລ້ວ ກໍ່ຈົ່ງອາບນ້ຳຊຳລະຮ່າງກາຍ ແລະ ອາບນ້ຳລະຫມາດສຳລັບທຸກໆ ການລະຫມາດ, ແລ້ວຈົ່ງລະຫມາດ, ເຖິ

ໆແມ່ນວ່າຈະມີເລືອດໄຫຼຢົດລົງໃສ່ເສື່ອກໍ່ຕາມ»[1] ບັນທຶກໂດຍ ອະຫມັດ ແລະ ທ່ານອິບນຸມາຈະຫ໌.

ປະການທີສາມ: ການມີເພດສຳພັນ, ບັນດານັກວິຊາການ ມີຄວາມຄິດເຫັນທີ່ແຕກຕ່າງກັນກ່ຽວກັບການອະນຸຍາດໃນ ກໍລະນີທີ່ບໍ່ມີຄວາມຢ້ານກົວຕໍ່ຄວາມລຳບາກໃນການລະເວັ້ນ ຈາກມັນ, ແລະ ທັດສະນະທີ່ຖືກຕ້ອງຄື ອະນຸຍາດໂດຍບໍ່ມີເງື່ອ ນໄຂ; ເພາະວ່າມີແມ່ຍິງຈຳນວນຫຼາຍທີ່ປະສົບບັນຫາເລືອດອ ອກຜິດປົກກະຕິ (ອິສຕິຮາເດາະຫ໌) ເປັນເວລາສິບມື້ ຫຼື ຫຼາຍກ ວ່ານັ້ນ ໃນສະໄໝຂອງທ່ານນະບີ ຊ່ວລ້ວລ່ຽ ອະໄລຮິ ວະສັລລ໋ຳ, ແລະ ພຣະອົງອັລລ໋ອ ແລະ ສາສະນາທູດຂອງພຣະອົງ ກໍ່ບໍ່ ດ້ຫ້າມການມີເພດສຳພັນກັບພວກນາງ, ຫາກແຕ່ໃນຄຳດຳລັ ດຂອງອັລລ໋ອ:

﴿...فَٱعۡتَزِلُواْ ٱلنِّسَاءَ فِي ٱلۡمَحِيضِ...﴾

ຄວາມວ່າ : (...ດັ່ງນັ້ນ ຈົ່ງຫຼີກຫ່າງຈາກແມ່ຍິງ ໃນເວລາທີ່ ມີປະຈຳເດືອນ...) [ສູເຣາະຫ໌ ອັລ-ບາກ໊ເຣາະຫ໌: 222] ເປັນຫຼັກ ຖານທີ່ຊີ້ບອກຊັດວ່າ ບໍ່ຈຳເປັນຕ້ອງແຍກຕົວອອກຈາກພວ ກນາງໃນເລື່ອງອື່ນໆ; ແລະ ເນື່ອງຈາກວ່າການລະຫມາດເປັນ ທີ່ອະນຸຍາດສຳລັບນາງ, ດັ່ງນັ້ນການມີເພດສຳພັນຈຶ່ງເປັນເລື່ ອງທີ່ເບົາກວ່າ, ແລະ ການປຽບທຽບການມີເພດສຳພັນກັບນາ ງໃສ່ກັບການມີເພດສຳພັນກັບຍິງທີ່ມີປະຈຳເດືອນນັ້ນແມ່ນ

[1] ບັນທຶກໂດຍທ່ານອະຫ໌ມັດ (6/ 204), ແລະ ທ່ານອິບນຸມາຈະຫ໌, ໃນໜັງສື ອັດ-ເຕາະຫາເຣາ ະ ອະ ລຸນານີຣາ, ບົດທີ່ວ່າດ້ວຍແມ່ຍິງທີ່ມີເລືອດເສຍ (ອັລ-ມຸສຕະຮາເດາະ) ທີ່ໄດ້ນັບມື້ປະ ຈຳເດືອນຂອງນາງ ກ່ອນທີ່ເລືອດຈະໄຫຼຕໍ່ເນື່ອງ, ເລກທີ (624), ຈາກຮະດີຊຂອງທ່ານນາງອາອີຊະຫ໌ ຂໍອັລລ໋ອຊົງພໍພຣະໄທຕໍ່ນາງ.

ບໍ່ຖືກຕ້ອງ; ເພາະວ່າທັງສອງກໍລະນີບໍ່ເທົ່າທຽມກັນ ແມ້ແຕ່ໃນທັດສະນະຂອງຜູ້ທີ່ກ່າວວ່າເປັນສິ່ງຕ້ອງຫ້າມກໍຕາມ, ແລະ ການປຽບທຽບນັ້ນຈະບໍ່ຖືກຕ້ອງ ຫາກມີຄວາມແຕກຕ່າງກັນ.

ພາກທີ່ຫົກ: ເລື່ອງກ່ຽວກັບເລືອດນິຟາສ ແລະ ບົດບັນຍັດຂອງມັນ

ເລືອດຫລັງການເກີດລູກ (ນິຟາສ): ແມ່ນເລືອດທີ່ມົດລູກຂັບອອກມາເນື່ອງຈາກການເກີດລູກ, ອາດຈະອອກມາພ້ອມກັບການເກີດລູກ, ຫຼື ຫຼັງຈາກນັ້ນ, ຫຼື ກ່ອນໜ້າສອງ ຫຼື ສາມມື້ ພ້ອມກັບອາການເຈັບທ້ອງຄອດລູກ.

ທ່ານ ໄລຄຸລ ອິສລາມ ອິບນິ ໄຕມິຍະຫ໌ ໄດ້ກ່າວວ່າ: «ສິ່ງທີ່ນາງເຫັນໃນເວລາທີ່ເລີ່ມເຈັບທ້ອງຄອດລູກ ນັ້ນຄືເລືອດນິຟາສ». ແລະ ບໍ່ໄດ້ກຳນົດໄລຍະເວລາໄວ້ວ່າສອງ ຫຼື ສາມມື້, ແລະ ຄວາມໝາຍຂອງມັນຄື: ການເຈັບທ້ອງທີ່ຈະມີການຄອດລູກຕາມມາ, ຖ້າບໍ່ດັ່ງນັ້ນ ກໍ່ບໍ່ແມ່ນເລືອດນິຟາສ. ແລະ ບັນດາອຸລະມາອຸມີຄວາມເຫັນທີ່ແຕກຕ່າງກັນວ່າ: ມັນມີກຳນົດໄລຍະເວລາຂັ້ນຕ່ຳສຸດ ແລະ ສູງສຸດ ຫຼື ບໍ່? ທ່ານໄລຄ໌ ຕະກີຢຸດດີນ ໄດ້ກ່າວໃນບົດວິໄຈຂອງເພິ່ນກ່ຽວກັບຄຳສັບຕ່າງໆ ທີ່ກົດບັນຫຍັດໄດ້ຜູກພັນຂໍ້ຕັດສິນໄວ້ (ໜ້າ: 37) ວ່າ: “ເລືອດຫລັງການເກີດລູກນັ້ນ ບໍ່ມີການກຳນົດໄລຍະເວລາຂັ້ນຕ່ຳສຸດ ແລະ ຂັ້ນສູງສຸດຂອງມັນ, ສະນັ້ນ ຖ້າສົມມຸດວ່າແມ່ຍິງຄົນຫນຶ່ງມີເລືອດອອກເກີນກວ່າສີ່ສິບ, ຫົກສິບ ຫຼື ເຈັດສິບວັນ ແລ້ວມັນກໍ່ຢຸດ, ເລືອດນັ້ນກໍ່ຍັງຖືວ່າເປັນເລືອດຫລັງການເກີດລູກ, ແຕ່ຖ້າຫາກວ່າມັນຍັງຄົງໄຫລຕໍ່ເນື່ອງ ມັນກໍ່ຈະກາຍເປັນເລືອດທີ່ຜິດປົກກະຕິ

(ດຳມຸນ ຟະສາດ), ແລະໃນກໍລະນີນັ້ນ ຂອບເຂດກຳນົດແມ່ນ ສີ່ສິບອັນ ເພາະມັນເປັນໄລຍະເວລາສູງສຸດໂດຍສ່ວນໃຫຍ່ ດັ່ງ ທີ່ໄດ້ມີລາຍງານຕ່າງໆລະບຸໄວ້”.

ຈົບຄຳເວົ້າ.

ຕາມນີ້ແລ້ວ, ຫາກເລືອດຂອງນາງໄຫຼເກີນ 40 ອັນ, ແລະ ໂ ດຍປົກກະຕິແລ້ວເລືອດຂອງນາງຈະຢຸດຫຼັງຈາກນັ້ນ, ຫຼື ມີສັນ ຍານບົ່ງບອກວ່າເລືອດໃກ້ຈະຢຸດໄຫຼ, ນາງຈະຕ້ອງລໍຖ້າຈົນກວ່າ ເລືອດຈະຢຸດ. ຖ້າບໍ່ດັ່ງນັ້ນ, ນາງຈະຕ້ອງອາບນ້ຳຊຳລະຮ່າງກາ ຍເມື່ອຄົບ 40 ອັນ; ເພາະນັ້ນຄືກໍລະນີສ່ວນໃຫຍ່. ຍົກເວັ້ນແຕ່ ມັນຈະກົງກັບຊ່ວງເວລາຂອງການມີປະຈຳເດືອນຂອງນາງ, ນ າງກໍຈະຕ້ອງຢຸດ (ການລະຫມາດ) ຈົນກວ່າໄລຍະເວລາຂອງກ ານມີປະຈຳເດືອນຈະສິ້ນສຸດລົງ.

ຫາກເລືອດຢຸດໄຫຼຫຼັງຈາກນັ້ນ, ມັນກໍຈະຖືກນັບເປັນຮອບ ວຽນປົກກະຕິຂອງນາງ, ແລະນາງຈະຕ້ອງປະຕິບັດຕາມນັ້ນໃ ນອະນາຄົດ. ແລະຫາກເລືອດຍັງຄົງໄຫຼຕໍ່ໄປ, ນາງກໍຈະຖືກຖືວ່ າເປັນ ຜູ້ຍິງທີ່ມີເລືອດເສຍ (ອິສຕິຮາເດາະ), ແລະນາງຈະຕ້ອງ ກັບໄປປະຕິບັດຕາມຂໍ້ກຳນົດຕ່າງໆຂອງຜູ້ຍິງທີ່ມີເລືອດເສຍ (ອິສຕິຮາເດາະ) ທີ່ໄດ້ກ່າວມາຂ້າງເທິງ. ແລະ ຫາກວ່າເລືອດ (ຫຼັ່ງເກີດລູກ) ຂອງນາງຢຸດໄຫຼ, ນາງກໍຖືວ່າສະອາດແລ້ວ ເຖິງ ແມ່ນວ່າຈະກ່ອນ 40 ອັນກໍຕາມ. ສະນັ້ນ, ນາງຕ້ອງອາບນ້ຳຊຳ ລະຮ່າງກາຍ, ລະຫມາດ, ຖືສິນອົດ ແລະ ສາມີຂອງນາງກໍສາມາ ດຮ່ວມຫຼັບນອນກັບນາງໄດ້.

ຍົກເວັ້ນແຕ່ວ່າການຢຸດໄຫຼຂອງເລືອດນັ້ນຈະນ້ອຍກວ່າຫນຶ່ງມື້, ກໍບໍ່ຖືວ່າເປັນການສະອາດຕາມບົດບັນຍັດ. ດັ່ງທີ່ກ່າວໄວ້ໃນຫນັງສື ອັນ-ນຸຄນີ[1].

ການມີເລືອດນິຟາສຈະບໍ່ຖືກຢືນຢັນ ນອກຈາກວ່ານາງຈະຄອດສິ່ງທີ່ປາກົດໃຫ້ເຫັນເປັນຮູບຮ່າງຂອງມະນຸດ. ດັ່ງນັ້ນ ຖ້າຫາກນາງຫຼຸລູກ (ແທ້ງ) ທີ່ຍັງບໍ່ປາກົດໃຫ້ເຫັນເປັນຮູບຮ່າງຂອງມະນຸດ, ເລືອດຂອງນາງກໍບໍ່ແມ່ນເລືອດນິຟາສ, ແຕ່ມັນເປັນເລືອດເສຍ, ດັ່ງນັ້ນ ຂໍ້ກໍານົດຂອງນາງກໍຈະເປັນຂໍ້ກໍານົດຂອງຜູ້ຍິງທີ່ເປັນອິສຕິຮາເດາະຫ໌. ໄລຍະເວລາທີ່ຫນ້ອຍທີ່ສຸດທີ່ຮູບຮ່າງຂອງມະນຸດຈະປາກົດໃຫ້ເຫັນແມ່ນແປດສິບມື້ ນັບຈາກການເລີ່ມຕົ້ນຂອງການຖືພາ, ແລະ ສ່ວນຫຼາຍແມ່ນເກົ້າສິບມື້.

ອັລ-ມັຈດຸ ອິບນຸໄຕມິຍະຫ໌ ກ່າວວ່າ: ຫາກນາງເຫັນເລືອດອອກໃນຂະນະທີ່ເຈັບທ້ອງກ່ອນການເກີດລູກ, ນາງບໍ່ຕ້ອງສົນໃຈເລືອດນັ້ນ, ແລະ ຫຼັງຈາກການເກີດລູກແລ້ວ ໃຫ້ນາງງົດການລະຫມາດ ແລະ ການຖືສິນອົດ.

ຈາກນັ້ນ, ຫາກປາກົດວ່າຫຼັງຈາກການເກີດລູກແລ້ວສະຖານະການຂັດກັບສິ່ງທີ່ປາກົດໃນເບື້ອງຕົ້ນ, ໃຫ້ນາງກັບໄປຊົດໃຊ້ຄືນ. ແລະ ຫາກສະຖານະການຍັງບໍ່ຊັດເຈນ, ກໍ່ໃຫ້ຍຶດຖືຕາມສະຖານະການທີ່ປາກົດໃນເບື້ອງຕົ້ນຕໍ່ໄປ ແລະ ບໍ່ຈໍາເປັນຕ້ອງຊົດໃຊ້ຄືນ.

[1] ອັລ-ມຸຄນີ (252/1-253).

ໄດ້ມີການອ້າງອີງຄຳເວົ້ານີ້ຂອງເພິ່ນໃນຫນັງສື ຊາເຣາະຫ໌ ອັລ-ອີກນາອ[1].

ບັນດາຂໍ້ກຳນົດກ່ຽວກັບເລືອດຫລັງການເກີດລູກ:

ຂໍ້ກຳນົດຂອງເລືອດຫລັງການເກີດລູກ ແມ່ນຄືກັນກັບຂໍ້ກຳນົດຂອງເລືອດປະຈຳເດືອນທຸກປະການ, ຍົກເວັ້ນໃນກໍລະນີດັ່ງຕໍ່ໄປນີ້:

ຂໍ້ທີ 1: ການນັບໄລຍະເວລາອິດດະຫ໌ ຈະເລີ່ມຈາກການຢ່າຮ້າງ ບໍ່ແມ່ນຈາກການມີເລືອດນິຟາສ; ເພາະວ່າ ຖ້າການຢ່າຮ້າງເກີດຂຶ້ນກ່ອນການເກີດລູກ, ໄລຍະເວລາອິດດະຫ໌ກໍຈະສິ້ນສຸດລົງດ້ວຍການເກີດລູກ, ບໍ່ແມ່ນດ້ວຍເລືອດນິຟາສ.

ແລະ ຖ້າການຢ່າຮ້າງເກີດຂຶ້ນຫຼັງຈາກການເກີດລູກ, ນາງຈະຕ້ອງລໍຖ້າການກັບມາຂອງປະຈຳເດືອນ ດັ່ງທີ່ໄດ້ກ່າວມາກ່ອນແລ້ວ.

ຂໍ້ທີ 2: ລະຍະເວລາຂອງການສາບານ (ອີລາອ໌) ໃຫ້ນັບລວມເຂົ້າລະຍະເວລາຂອງເລືອດປະຈຳເດືອນ ແລະ ບໍ່ໃຫ້ນັບລວມເຂົ້າລະຍະເວລາຂອງເລືອດຫລັງການເກີດລູກ.

ອັລ-ອີລາອ໌ (الإيلاء): ແມ່ນການທີ່ຜູ້ຊາຍສາບານວ່າຈະລະເວັ້ນການມີເພດສຳພັນກັບພັນລະຍາຂອງລາວຕະຫຼອດໄປ ຫຼື ເປັນໄລຍະເວລາທີ່ຫຼາຍກວ່າສີ່ເດືອນ, ຖ້າຫາກລາວໄດ້ສາບານ ແລະ ພັນລະຍາໄດ້ຮຽກຮ້ອງໃຫ້ມີເພດສຳພັນ, ຈະມີການກຳນົດໄລຍະເວລາໃຫ້ລາວສີ່ເດືອນນັບຈາກມື້ທີ່ລາວໄດ້ສາບານ, ເມື່ອຄົບກຳນົດແລ້ວ ລາວຈະຖືກບັງຄັບໃຫ້ມີເພດສຳພັນ ຫຼື ໃຫ້ຢ່າຮ້າງ ຕາມການຮຽກຮ້ອງຂອງຜູ້ເປັນພັນລະຍາ, ໃນໄລຍະເວ

[1] ກັຊຊາຟ ອັລກີນາອ (219/1)

ລານີ້ ຖ້າຫາກແມ່ຍິງມີເລືອດຫຼັງຄອດລູກ (ນິຟາສ) ມັນຈະບໍ່ຖືກນັບເຂົ້າໃນໄລຍະເວລາຂອງສາມີ, ແລະ ຈະຖືກເພີ່ມໃສ່ໄລຍະເວລາສີ່ເດືອນນັ້ນຕາມໄລຍະເວລາຂອງມັນ, ເຊິ່ງແຕກຕ່າງຈາກການມີປະຈຳເດືອນ (ເຮດ) ເພາະໄລຍະເວລາຂອງມັນຈະຖືກນັບເຂົ້າໃນໄລຍະເວລາຂອງສາມີ.

ຂໍ້ທີ 3: ການບັນລຸສາສະນາພາວະແມ່ນເກີດຂຶ້ນຈາກການມີເລືອດປະຈຳເດືອນ, ບໍ່ແມ່ນຈາກເລືອດຫລັງການເກີດລູກ; ເພາະວ່າຜູ້ຍິງບໍ່ສາມາດຖືພາໄດ້ຈົນກວ່າຈະມີປະຈຳເດືອນ, ດັ່ງນັ້ນ ການບັນລຸສາສະນາສະພາວະຈຶ່ງແມ່ນການມີປະຈຳເດືອນທີ່ເກີດຂຶ້ນກ່ອນການຖືພານັ້ນເອງ.

ຂໍ້ທີ 4: ເລືອດປະຈຳເດືອນ ຖ້າຫາກມັນຢຸດໄຫຼ ແລ້ວກັບມາໄຫຼອີກໃນຊ່ວງເວລາປົກກະຕິຂອງຮອບເດືອນ, ມັນກໍ່ຖືວ່າເປັນເລືອດປະຈຳເດືອນຢ່າງແນ່ນອນ, ຕົວຢ່າງເຊັ່ນ: ຖ້າຫາກຮອບເດືອນປົກກະຕິຂອງນາງແມ່ນແປດມື້, ໂດຍນາງຈະມີປະຈຳເດືອນເປັນເວລາສີ່ມື້, ຫຼັງຈາກນັ້ນກໍ່ຢຸດໄປສອງມື້, ແລ້ວກັບມາໄຫຼອີກໃນມື້ທີເຈັດ ແລະ ມື້ທີແປດ, ດັ່ງນັ້ນ ເລືອດທີ່ກັບມາໄຫຼນີ້ຖືວ່າເປັນເລືອດປະຈຳເດືອນຢ່າງແນ່ນອນ ເຊິ່ງຈະມີຂໍ້ກຳນົດຕ່າງໆ ຄືກັນກັບເລືອດປະຈຳເດືອນ. ສ່ວນເລືອດຫຼັງການເກີດລູກ (ນິຟາສ), ຫາກມັນຢຸດໄຫຼກ່ອນຄົບກຳຫນົດສີ່ສິບວັນ ແລ້ວກັບມາໄຫຼອີກພາຍໃນສີ່ສິບວັນນັ້ນ, ຖືວ່າເປັນເລືອດທີ່ຫນ້າສົງໄສ. ສະນັ້ນ, ຈຳເປັນ (ວາຈິບ) ສຳລັບນາງທີ່ຈະຕ້ອງລະຫມາດ ແລະ ຖືສິນອົດທີ່ເປັນຟັຣດູຕາມເວລາທີ່ກຳຫນົດໄວ້, ແລະ ສິ່ງທີ່ຕ້ອງຫ້າມສຳລັບນາງກໍຄືສິ່ງທີ່ຕ້ອງຫ້າມສຳລັບຜູ້ຍິງທີ່ມີ

ປະຈຳເດືອນ, ຍົກເວັ້ນສິ່ງທີ່ເປັນອາຈິບ (ສິ່ງທີ່ຈຳເປັນຕ້ອງປະຕິບັດ).

ແລະ ຫຼັງຈາກທີ່ນາງສະອາດແລ້ວ, ນາງຈະຕ້ອງຊົດໃຊ້ (ກ່ຳ) ສິ່ງທີ່ນາງໄດ້ປະຕິບັດໄປໃນຊ່ວງທີ່ມີເລືອດທີ່ຫນ້າສົງໄສນັ້ນ, ໃນສິ່ງທີ່ຜູ້ຍິງມີປະຈຳເດືອນຈຳເປັນຕ້ອງຊົດໃຊ້.

ນີ້ຄືທັດສະນະທີ່ເປັນທີ່ຮູ້ຈັກກັນດີໃນຫມູ່ນັກວິຊາການຟິກ ຮ໌ ສັງກັດມັດຊັບຮັມບາວີ[1].

ແລະ ສິ່ງທີ່ຖືກຕ້ອງແມ່ນ: ຫາກເລືອດກັບມາໄຫລອີກຄັ້ງໃນຊ່ວງເວລາທີ່ອາດຈະເປັນໄລຍະຂອງເລືອດຫລັງການເກີດລູກ, ກໍໃຫ້ຖືວ່າເປັນເລືອດຫລັງການເກີດລູກ. ຖ້າບໍ່ດັ່ງນັ້ນ, ກໍໃຫ້ຖືວ່າເປັນເລືອດປະຈຳເດືອນ, ຍົກເວັ້ນແຕ່ມັນຈະໄຫລຕໍ່ເນື່ອງ, ກໍຈະກາຍເປັນເລືອດທີ່ຜິດປົກກະຕິ (ອິສຕິຮາເດາະ).

ແລະ ນີ້ກໍໃກ້ຄຽງກັບສິ່ງທີ່ໄດ້ຖືກອ້າງອີງໄວ້ໃນຕຳລາ ອັລມຸຄນີ[2]

ຈາກທ່ານອີຫມ່ຳມາລິກ ຂໍອັລລ໋ຫ໌ເມດຕາຕໍ່ທ່ານ ທີ່ກ່າວວ່າ: ແລະ ທ່ານມາລິກໄດ້ກ່າວວ່າ: "ຖ້ານາງເຫັນເລືອດຫຼັງຈາກສອງ ຫຼື ສາມມື້ -ຫມາຍເຖິງ: ຈາກການຢຸດໄຫຼຂອງມັນ- ມັນກໍຄື ເລືອດຫລັງການເກີດລູກ, ແລະ ຖ້າບໍ່ດັ່ງນັ້ນ ມັນກໍຄື ເລືອດປະຈຳເດືອນ. ເຊິ່ງເປັນທັດສະນະທີ່ຖືກຄັດເລືອກຂອງ ທ່ານເຊຄ ອິດສະລາມ ອິບນຸໄຕມິຍະຫ໌

ໃນເລື່ອງຂອງເລືອດນັ້ນ ຕາມຄວາມເປັນຈິງແລ້ວບໍ່ມີສິ່ງໃດທີ່ຫນ້າສົງໄສ, ແຕ່ທະວ່າຄວາມສົງໄສນັ້ນເປັນເລື່ອງທຽບຖາ

[1] ອັລມຸຄນີ (253/1).

[2] ອັລ-ມຸຄນີ (253/1).

ນ ຊຶ່ງມະນຸດຈະມີຄວາມເຫັນແຕກຕ່າງກັນໄປຕາມຄວາມຮູ້ ແລະ ຄວາມເຂົ້າໃຈຂອງພວກເຂົາ, ແລະໃນຄຳພີອັນກຸຣອານ ແລະ ແບບຢ່າງຂອງທ່ານສາດສະດານັ້ນ ມີການຊີ້ແຈງໃນທຸກ ໆ ຢ່າງ. ອັລລ໋ຮ ຜູ້ຊົງສູງສົ່ງ ບໍ່ໄດ້ຊົງກຳນົດເປັນຂໍ້ບັງຄັບໃຫ້ຜູ້ໃດຕ້ອງຖືສິນອົດສອງຄັ້ງ ຫຼື ເດີນວຽນສອງຄັ້ງ, ເວັ້ນເສຍແຕ່ວ່າໃນຄັ້ງທຳອິດນັ້ນມີຂໍ້ບົກພ່ອງທີ່ບໍ່ສາມາດແກ້ໄຂໄດ້ ນອກຈາກດ້ວຍການຊົດໃຊ້ເທົ່ານັ້ນ, ສ່ວນກໍລະນີທີ່ບ່າວໄດ້ປະຕິບັດສິ່ງທີ່ຖືກບັນຍັດຕາມຄວາມສາມາດທີ່ຕົນຈະເຮັດໄດ້ແລ້ວນັ້ນ, ລາວກໍ່ພົ້ນຈາກພັນທະ. ດັ່ງທີ່ພຣະອົງຜູ້ຊົງສູງສົ່ງໄດ້ຊົງກ່າວໄວ້ວ່າ:

﴿لَا يُكَلِّفُ ٱللَّهُ نَفۡسًا إِلَّا وُسۡعَهَاۚ...﴾

(ອັລລ໋ຮ໋ຈະບໍ່ຊົງບັງຄັບຊີວິດໜຶ່ງຊີວິດໃດ ນອກຈາກຕາມຄວາມສາມາດຂອງຊີວິດນັ້ນເທົ່ານັ້ນ...) [ສູເຣາະ໋ ອັລ-ບາກ໋ເຣາະ໋: 286]. ແລະ ພຣະອົງຕຣັດວ່າ

﴿فَٱتَّقُواْ ٱللَّهَ مَا ٱسۡتَطَعۡتُمۡ...﴾

(ດັ່ງນັ້ນ ຈົ່ງຢຳເກຮງອັລລ໋ຮ໋ເຖິດ ເທົ່າທີ່ພວກເຈົ້າມີຄວາມສາມາດ....) [ອຼເຣາະ໋ ອັດຕະກ໋ບຸນ : 16].

ຄວາມແຕກຕ່າງທີ 5 ລະຫວ່າງເລືອດປະຈຳເດືອນ ແລະ ເລືອດຫຼັງການເກີດລູກ: ໃນກໍລະນີຂອງເລືອດປະຈຳເດືອນ, ຫາກນາງຫມົດໄລຍະກ່ອນເວລາປົກກະຕິ, ອະນຸຍາດໃຫ້ສາມີຂອງນາງມີເພດສຳພັນກັບນາງໄດ້ໂດຍບໍ່ເປັນທີ່ໜ້າລັງກຽດ. ສ່ວນໃນກໍລະນີຂອງເລືອດຫຼັງການເກີດລູກ, ຫາກນາງຫມົດໄລຍະກ່

ອນຄົບສີ່ສິບວັນ, ຖືເປັນທີ່ໜ້າລັງກຽດທີ່ສາມີຂອງນາງຈະມີເ
ພດສຳພັນກັບນາງ ຕາມທັດສະນະທີ່ຮູ້ຈັກກັນດີໃນມັຊຮັບ.

ແລະ ທັດສະນະທີ່ຖືກຕ້ອງກໍຄື ບໍ່ເປັນທີ່ໜ້າລັງກຽດທີ່ລາວ
ຈະມີເພດສຳພັນກັບນາງ. ແລະ ນີ້ແມ່ນຄຳກ່າວຂອງນັກວິຊາ
ການສ່ວນໃຫຍ່; ເພາະວ່າຄວາມໜ້າລັງກຽດແມ່ນຄຳຕັດສິນ
ທາງກົດໝາຍທີ່ຕ້ອງການຫຼັກຖານທາງກົດໝາຍ, ແລະ ໃນປ
ະຕິບັນນີ້ ມີພຽງສິ່ງທີ່ທ່ານອິມາມອະຫ໌ມັດໄດ້ກ່າວໄວ້ ຈາກທ່ານ
ອຸສມານ ບິນ ອະບີ ອັລ-ອາສ ວ່ານາງໄດ້ມາຫາເພື່ນກ່ອນຄົບສີ່
ສິບວັນ, ເພື່ນຈຶ່ງກ່າວວ່າ: ເຈົ້າຢ່າເຂົ້າໃກ້ຂ້ອຍ[1].

ແລະ ການກະທຳນີ້ບໍ່ໄດ້ບົ່ງບອກເຖິງຄວາມໜ້າລັງກຽດ
(ມັກຣູຫ໌); ເພາະວ່າການກະທຳດັ່ງກ່າວອາດຈະເປັນໄປເພື່ອຄ
ວາມລະມັດລະວັງ ຍ້ອນຢ້ານວ່ານາງຍັງບໍ່ແນ່ໃຈໃນຄວາມສະອ
າດຂອງຕົນເອງ, ຫຼື ຢ້ານວ່າເລືອດອາດຈະໄຫຼອອກມາອີກຍ້ອ
ນການມີເພດສຳພັນ, ຫຼື ຍ້ອນເຫດຜົນອື່ນ ໆ. ແລະ ພຣະອົງອັ
ລລໍຮ໌ຊົງຮູ້ດີທີ່ສຸດ.

---

[1] ອັນ-ມຸຄນີ (2/ 252), ແລະ ລາຍງານຂອງ ທ່ານອຸສມານ ບິນ ອະບີ ອັນ-ອາສ ບັນທຶກໂດຍ
ທ່ານອັບດຸລຣ໊ຊຊາກ ໃນໜັງສື ອັນ-ມຸຊັນນັຟ (1202),
ທ່ານອິບນຸ ອະບີ ໄຊບະຫ໌ ໃນໜັງສື ອັນ-ມຸຊັນນັຟ (17450), ທ່ານອັດ-ດາຣິມີ ໃນໜັງສື ອັດ-
ສຸນັນ (990), ແລະ ທ່ານອິບນຸ ອັນ-ຈາຣູດ ໃນໜັງສື ອັນ-ມຸນຕະກໍ (118).

ພາກທີ່ເຈັດ:
ວ່າດ້ວຍການນຳໃຊ້ສິ່ງທີ່ປ້ອງກັນການມີປະຈຳເດືອນ ຫຼື ເລັ່ງໃຫ້ມັນມາ, ແລະ ສິ່ງທີ່ປ້ອງກັນການຖືພາ ຫລື ເຮັດໃຫ້ແທ້ງລູກ.

ການໃຊ້ສິ່ງທີ່ປ້ອງກັນການມີປະຈຳເດືອນຂອງແມ່ຍິງ ເປັນທີ່ອະນຸຍາດ ດ້ວຍສອງເງື່ອນໄຂຕໍ່ໄປນີ້:

ປະການທຳອິດ: ບໍ່ມີຄວາມຢ້ານກົວວ່າຈະເກີດຄວາມເສຍຫາຍແກ່ນາງ, ຫາກມີຄວາມຢ້ານກົວຕໍ່ຄວາມເສຍຫາຍດັ່ງກ່າວ ກໍ່ຫ້າມບໍ່ອະນຸຍາດ; ເນື່ອງຈາກດຳລັດຂອງພະອົງອັລລໍ ທີ່ກ່າວວ່າ:

﴿...وَلَا تُلۡقُواْ بِأَيۡدِيكُمۡ إِلَى ٱلتَّهۡلُكَةِ...﴾

(...ແລະ ພວກເຈົ້າຢ່າໄດ້ຖິ້ມຕົວຂອງພວກເຈົ້າເອງລົງສູ່ຄວາມພິນາດ...) [ສູເຣາະ ອັລ-ບາກໍເຣາະ:195].

﴿...وَلَا تَقۡتُلُوٓاْ أَنفُسَكُمۡۚ إِنَّ ٱللَّهَ كَانَ بِكُمۡ رَحِيمٗا﴾

(...ແລະພວກເຈົ້າຢ່າໄດ້ຂ້າໂຕຂອງພວກເຈົ້າເອງ ແທ້ຈິງ ອັລລໍ ເປັນຜູ້ຊົງເມດຕາປານີຕໍ່ພວກເຈົ້າສະເໝີ) [ສູເຣາະ ອັນນິຊາ : 29].

ປະການທີ່ສອງ: ຕ້ອງໄດ້ຮັບອະນຸຍາດຈາກສາມີ ຖ້າຫາກວ່າການກະທຳນັ້ນມີສ່ວນກ່ຽວຂ້ອງກັບສິດທິຂອງລາວ. ຕົວຢ່າງ ເຊັ່ນ: ຜູ້ຍິງທີ່ຢູ່ໃນຊ່ວງເວລາອິດດະຮ໌ ເຊິ່ງສາມີຍັງມີໜ້າທີ່ຮັບຜິດຊອບຄ່າລ້ຽງດູຂອງນາງຢູ່, ຫາກນາງໃຊ້ສິ່ງທີ່ຍັບຍັ້ງການມີປະຈຳເດືອນ ເພື່ອເຮັດໃຫ້ໄລຍະເວລາດັ່ງກ່າວຢາວອອກໄປ ແລະ ເຮັດໃຫ້ຄ່າລ້ຽງດູທີ່ສາມີຕ້ອງຈ່າຍນັ້ນເພີ່ມຂຶ້ນ, ໃນກໍລະນີ

ຊົ່ນນີ້ ບ່ອະນຸຍາດໃຫ້ນາງກະທຳໄດ້ ເວັ້ນເສຍແຕ່ຈະໄດ້ຮັບອະນຸຍາດຈາກສາມີຂອງນາງເສຍກ່ອນ. ໃນທຳນອງດຽວກັນ, ຖ້າຫາກໄດ້ຮັບການຢັ້ງຢືນວ່າການກັນປະຈຳເດືອນເປັນການປ້ອງກັນການຖືພາ ກໍ່ຈຳເປັນຕ້ອງໄດ້ຮັບອະນຸຍາດຈາກສາມີ. ແລະ ໃນກໍລະນີທີ່ເປັນທີ່ອະນຸຍາດ ສິ່ງທີ່ດີກວ່ານັ້ນກໍຄືການບ່ນຳໃຊ້ມັນ ເວັ້ນເສຍແຕ່ມີຄວາມຈຳເປັນ; ເນື່ອງຈາກວ່າການປ່ອຍໃຫ້ເປັນໄປຕາມທຳມະຊາດ ຍ່ອມໃກ້ຄຽງກັບການມີສຸຂະພາບທີ່ສົມດຸນ ແລະ ຄວາມປອດໄພ.

ສ່ວນວ່າການນຳໃຊ້ສິ່ງທີ່ເຮັດໃຫ້ມີເລືອດປະຈຳເດືອນ ກໍ່ເປັນທີ່ອະນຸຍາດດ້ວຍກັບສອງເງື່ອນໄຂຊົ່ນດຽວກັນ:

ປະການທຳອິດ: ບ່ໃຫ້ໃຊ້ເລ່ກົນເພື່ອລະຖິ້ມສິ່ງທີ່ເປັນອາຍຶບ, ເຊັ່ນການນຳໃຊ້ມັນໃນຊ່ວງໃກ້ເດືອນຮໍມະດອນ ເພື່ອທີ່ຈະໄດ້ແກ້ສິນອົດ ຫຼື ເພື່ອລະຖິ້ມການລະຫມາດ ແລະ ທຳນອງດຽວກັນນັ້ນ.

ປະການທີ່ສອງ: ການກະທຳດັ່ງກ່າວຕ້ອງໄດ້ຮັບອະນຸຍາດຈາກສາມີ; ເພາະການມີປະຈຳເດືອນຈະເປັນການຂັດຂວາງສິດທິຂອງສາມີໃນການມີຄວາມສຸກສົມບູນໃນການຢູ່ຮ່ວມກັນ, ດັ່ງນັ້ນ ຈຶ່ງບ່ອະນຸຍາດໃຫ້ນຳໃຊ້ສິ່ງທີ່ຈະມາຂັດຂວາງສິດທິຂອງເຂົາ ເວັ້ນແຕ່ຈະໄດ້ຮັບຄວາມຍິນຍອມຈາກເຂົາກ່ອນ. ສ່ວນໃນກໍລະນີທີ່ນາງເປັນຜູ້ຍິງທີ່ຖືກຢ່າຮ້າງ, ການກະທຳດັ່ງກ່າວກໍ່ຖືເປັນການເວົ້າລັດໃນການຍົກເວີກສິດທິຂອງສາມີໃນການຂໍຄືນດີ ຖ້າຫາກເຂົາຍັງມີສິດທິດັ່ງກ່າວຢູ່.

ສ່ວນການໃຊ້ສິ່ງທີ່ປ້ອງກັນການຕັ້ງຄັນ ແບ່ງອອກເປັນສອງປະເພດຄື:

ປະການທຳອິດ: ຫ້າມບໍ່ອະນຸຍາດໃຫ້ປ້ອງກັນການມີລູກຢ່າງຕໍ່ເນື່ອງ; ເພາະມັນເປັນການຢຸດການຖືພາ ແລະ ເຮັດໃຫ້ເຊື້ອສາຍຫຼຸດລົງ, ເຊິ່ງມັນຂັດກັບຈຸດປະສົງຂອງສາສະໜາບັນຍັດໃນການເພີ່ມຈຳນວນປະຊາຊາດອິດສະລາມ; ແລະ ເພາະບໍ່ມີສິ່ງໃດຮັບປະກັນໄດ້ວ່າລູກໆ ຂອງນາງທີ່ມີຢູ່ນັ້ນຈະບໍ່ເສຍຊີວິດໄປ, ແລ້ວນາງກໍຈະກາຍເປັນແມ່ໝ້າຍທີ່ບໍ່ມີລູກ.

ປະການທີສອງ: ການຄຸມກຳເນີດແບບຊົ່ວຄາວ, ເຊັ່ນວ່າ ແມ່ຍິງທີ່ຖືພາບ່ອຍ ແລະ ການຖືພາກໍເຮັດໃຫ້ນາງອ່ອນເພຍ, ດັ່ງນັ້ນນາງຈຶ່ງຕ້ອງການວາງແຜນການຖືພາຂອງນາງໃຫ້ມີທຸກໆ ສອງປີຕໍ່ຄັ້ງ ຫຼື ປະມານນັ້ນ, ກໍລະນີນີ້ແມ່ນເປັນທີ່ອະນຸຍາດ, ໂດຍມີເງື່ອນໄຂວ່າສາມີຂອງນາງຕ້ອງອະນຸຍາດ ແລະ ຈະຕ້ອງບໍ່ກ່ໃຫ້ເກີດອັນຕະລາຍຕໍ່ນາງ. ຫຼັກຖານໃນເລື່ອງນີ້ກໍຄື ບັນດາສະຫາບະຮ໌ເຄີຍປະຕິບັດການຫຼັ່ງນອກກັບພັນລະຍາຂອງພວກເຂົາ ໃນສະໄໝຂອງທ່ານນະບີ ຈໍລລັລລ່ຮ ອະໄລຮິ ອະຊັລລ່ຳ ເພື່ອບໍ່ໃຫ້ພັນລະຍາຂອງພວກເຂົາຖືພາ, ແລະພວກເຂົາກໍບໍ່ໄດ້ຖືກຫ້າມຈາກການກະທຳດັ່ງກ່າວ.

ແລະການຫຼັ່ງນອກນັ້ນໝາຍເຖິງ ການທີ່ຜູ້ຊາຍມີເພດສຳພັນກັບພັນລະຍາຂອງລາວ ແລະ ຖອນອະໄວຍະວະເພດອອກເມື່ອໃກ້ຈະຫຼັ່ງນ້ຳອະສຸຈິ ເພື່ອຫຼັ່ງນ້ຳອະສຸຈິອອກທາງນອກຊ່ອງຄອດ.[1]

[1] ບັນທຶກໂດຍອັລບຸກ່ອ: ບຶ້ມ ນິກາ, ບົດ ການອະຊັລ, ເລກທີ (5209), ແລະ ທ່ານມຸສລິມ: ບຶ້ມ ນິກາ, ບົດ ຫຸກົ່ມ ການອະຊັລ, ເລກທີ (1440), ຈາກຫະດິດຂອງ ຢາບິຣ (ຂໍອັລລ່ຫ ຊົງພໍພຣະໄທຕໍ່ເພິ່ນ).

ສ່ວນອ່ານການໃຊ້ສິ່ງທີ່ເຮັດໃຫ້ແທ້ງລູກນັ້ນ ແມ່ນມີສອງປະເພດຄື:

ປະການທຳອິດ: ການເອົາລູກອອກໂດຍມີເຈດຕະນາເພື່ອທຳລາຍຊີວິດ, ຫາກການກະທຳດັ່ງກ່າວເກີດຂຶ້ນຫຼັງຈາກທີ່ວິນຍານໄດ້ຖືກເປົ່າເຂົ້າໄປແລ້ວ ຖືເປັນສິ່ງທີ່ຕ້ອງຫ້າມຢ່າງບໍ່ຕ້ອງສົງໄສ; ເພາະມັນຄືການຂ້າຊີວິດທີ່ຖືກປົກປ້ອງໂດຍບໍ່ຊອບທຳ, ແລະ ການຂ້າຊີວິດທີ່ຖືກປົກປ້ອງນັ້ນເປັນສິ່ງທີ່ຕ້ອງຫ້າມຕາມຫຼັກການໃນຄຳພີອັລກຸຣອານ, ແບບຢ່າງຂອງທ່ານສາດ ສະດາ ແລະ ມະຕິເອກະສັນຂອງຊາວມຸສລິມ. ສ່ວນກໍລະນີທີ່ເກີດຂຶ້ນກ່ອນການເປົ່າວິນຍານ, ບັນດານັກວິຊາການມີຄວາມເຫັນທີ່ແຕກຕ່າງກັນໃນການອະນຸຍາດ, ໂດຍມີບາງສ່ວນທີ່ອະນຸຍາດ ແລະ ບາງສ່ວນທີ່ຫ້າມ.

ແລະ ບາງທ່ານກ່າວວ່າ: ອະນຸຍາດຕາບໃດທີ່ຍັງບໍ່ທັນເປັນກ້ອນເລືອດ, ຄື: ຕາບໃດທີ່ອາຍຸຄັນຍັງບໍ່ຜ່ານພົ້ນ 40 ມື້. ແລະ ບາງທ່ານກ່າວວ່າ: ອະນຸຍາດຕາບໃດທີ່ຍັງບໍ່ປາກົດໃຫ້ເຫັນເປັນຮູບຮ່າງຂອງມະນຸດ.

ແລະ ເພື່ອເປັນການລະມັດລະວັງທີ່ສຸດ ຄືການຫ້າມບໍ່ໃຫ້ເອົາລູກອອກ, ເວັ້ນເສຍແຕ່ໃນກໍລະນີທີ່ມີຄວາມຈຳເປັນ ເຊັ່ນ ຜູ້ເປັນແມ່ເຈັບປ່ວຍຈົນບໍ່ສາມາດທົນຕໍ່ການຖືພາໄດ້ ຫຼື ກໍລະນີອື່ນໆ ທີ່ຄ້າຍຄືກັນ, ໃນສະຖານະການເຊັ່ນນັ້ນຈຶ່ງອະນຸຍາດໃຫ້ເອົາລູກອອກໄດ້, ເວັ້ນເສຍແຕ່ວ່າເວລາໄດ້ຜ່ານໄປຈົນເຖິງຂັ້ນທີ່ສາມາດເຫັນເປັນຮູບຮ່າງຂອງມະນຸດໄດ້ຢ່າງຊັດເຈນແລ້ວ, ເຊິ່ງໃນກໍລະນີນັ້ນແມ່ນເປັນທີ່ຕ້ອງຫ້າມ. ແລະ ອົງອັລລ໋ອ ຊົງຮູ້ດີທີ່ສຸດ.

ປະການທີ່ສອງ: ບໍ່ໃຫ້ມີເຈດຕະນາເອົາລູກອອກເພື່ອທຳລາຍຊີວິດ, ໂດຍທີ່ການພະຍາຍາມເອົາລູກອອກເມື່ອການຖືພາຄົບກຳນົດ ແລະ ໃກ້ຈະເກີດນັ້ນເປັນສິ່ງທີ່ອະນຸຍາດ, ໂດຍມີເງື່ອນໄຂວ່າຈະຕ້ອງບໍ່ເປັນອັນຕະລາຍຕໍ່ແມ່ ແລະ ລູກ, ແລະ ບໍ່ຈຳເປັນຕ້ອງຜ່າຕັດ. ແຕ່ຖ້າຫາກຈຳເປັນຕ້ອງຜ່າຕັດ, ກໍຈະມີຢູ່ 4 ກໍລະນີຄື:

1: ໃນກໍລະນີທີ່ແມ່ ແລະ ລູກໃນທ້ອງຍັງມີຊີວິດຢູ່, ຫ້າມບໍ່ອະນຸຍາດໃຫ້ທຳການຜ່າຕັດ ເອົ້ນເສຍແຕ່ໃນກໍລະນີຈຳເປັນທີ່ສຸດ, ເຊັ່ນ: ການຄອດລູກເປັນໄປດ້ວຍຄວາມຍາກລຳບາກ ຈຶ່ງຈຳເປັນຕ້ອງໄດ້ຜ່າຕັດ. ທັງນີ້ກໍເພາະວ່າຮ່າງກາຍເປັນສິ່ງທີ່ອັລລໍຫ໌ໄດ້ມອບໝາຍໃຫ້ບ່າວຂອງພຣະອົງດູແລຮັກສາ, ດັ່ງນັ້ນ ຈະກະທຳການໃດໆ ຕໍ່ຮ່າງກາຍທີ່ອາດກໍ່ໃຫ້ເກີດອັນຕະລາຍບໍ່ໄດ້ ເວັ້ນເສຍແຕ່ເພື່ອຜົນປະໂຫຍດທີ່ໃຫຍ່ຫຼວງກວ່າ; ແລະ ເພາະວ່າບາງຄັ້ງອາດຈະຄິດວ່າການຜ່າຕັດນັ້ນບໍ່ມີອັນຕະລາຍ ແຕ່ໃນຄວາມເປັນຈິງແລ້ວອາດເກີດອັນຕະລາຍຂຶ້ນໄດ້.

2: ໃນກໍລະນີທີ່ແມ່ ແລະ ລູກໃນທ້ອງເສຍຊີວິດທັງສອງ, ບໍ່ອະນຸຍາດໃຫ້ທຳການຜ່າຕັດເພື່ອເອົາອອກ ເພາະບໍ່ມີປະໂຫຍດ.

3: ກໍລະນີທີ່ແມ່ມີຊີວິດຢູ່ ແລະ ລູກໃນທ້ອງຕາຍ, ອະນຸຍາດໃຫ້ທຳການຜ່າຕັດເພື່ອເອົາລູກອອກໄດ້, ນອກຈາກວ່າຈະມີຄວາມກັງວົນວ່າຈະເປັນອັນຕະລາຍຕໍ່ຜູ້ເປັນແມ່; ເພາະສິ່ງທີ່ປາກົດຊັດເຈນນັ້ນ - ແລະ ອັລລໍຮ໌ຊ໌ຮູ້ດີທີ່ສຸດ -

ຄືເມື່ອລູກໃນທ້ອງຕາຍແລ້ວ ມັນຍາກລຳບາກທີ່ຈະອອກມາເອງໄດ້ໂດຍບໍ່ຜ່າຕັດ. ສະນັ້ນ ການທີ່ລູກຍັງຄ້າງຢູ່ໃນທ້ອງຂ

ອານາງຕໍ່ໄປ ຈະກິດຂວາງການຖືພາໃນອະນາຄົດຂອງນາງ ແ
ລະ ສ້າງຄວາມລຳບາກໃຫ້ແກ່ນາງ, ແລະ ບາງທີອາດເຮັດໃຫ້ນ
າງຕ້ອງຢູ່ໃນສະຖານະແມ່ໝ້າຍຕ່ໄປ ຖ້ານາງກຳລັງຢູ່ໃນຊ ່ອງ
ອິດເອຫ໌ຈາກສາມຄົນກ່ອນ.

4: ກໍລະນີທີ່ແມ່ເສຍຊີວິດ ແລະ ລູກໃນທ ້ອງຍັງມີຊີວິດຢ ู่, ຖ
 າຫາກວ ່າບ ່ມີຄວາມຫ ວັງວ ່າລ ูກຈະລອດຊ ີວ ິດ ກ ໍບ ່ອະນ ຸຍາດໃ
ຫ້ທ ຳການຜ່າຕັດ.

ແລະ ຖ້າຫາກວ ່າທາລ ກນ ັ້ນຍ ັງມ ີໂອກາດລອດຊ ີວ ິດ, ຖ້າວ ່າ
ບາງສ ່ວນຂ ອງລ າວໄດ້ອ ອກມ າແ ລ້ວ ກ ່ໃຫ້ຜ ່າທ ້ອງຂ ອງຜ ູ້ເ ປ
ນແມ່ ເພ ື່ອເ ອົາສ ່ວນທ ີ່ເ ຫ ຼ ືອອ ອກມ າ. ແ ລ ະ ຖ້າຫ າກ ວ ່າບ ່ມ ີສ ່ອ
ນໃດອອກມ າເ ລ ີຍ ບ ັນດ ານ ັກອ ິຊ າກ ານຂ ອງພ ອກເ ຮ ົາ (ຂ ໍອ ັລ
ລ ໍຫ ์ຊ ີງເ ມ ດຕ າພ ອກທ ່ານ) ໄ ດ້ກ ່າວ ອ ່າ: ບ ່ອ ະນ ຸຍ າດໃ ຫ້ຜ ່າທ ້ອ
ງຂ ອງຜ ູ້ເ ປ ັນແ ມ່ເ ພ ື່ອເ ອ ົາທ າລ ກອ ອ ກມ າ; ເ ພ າະກ ານກ ະທ ຳດ
ັ
ງກ ່າວເ ປ ັນກ ານທ ຳລ າຍສ ົບ. ແ ຕ່ທ ັດສ ະນ ະທ ີ່ຖ ກຕ ້ອງແ ມ່ນ ໃ
ຫ້ຜ ່າທ ້ອງໄ ດ້ ຖ້າຫ າກ ບ ່ສ າມ າດເ ອ ົາເ ດ ັກອ ອ ກມ າໄ ດ້ດ ້ວ ຍວ ິທ
ີ
ອ
ື
ນ
. ແ
ລ
ະ
ນ
ີ
້
ແ
ມ
່
ນ
ທ
ັ
ດ
ສ
ະ
ນ
ະ
ທ
ີ
່
ຖ
ກ
ເ
ລ
ອ
ກ
ຂ
ອ
ງ ອ
ິ
ບ
ນ
ຸ ຮ
ຸ
ໂ
ບ
ເ
ອ
າ
ະ
ຫ
໌
, ທ
ານ
ໄ
ດ
ກ
 າ
ວ
ໃ
ນ
ຫ
ນ
ັ
ງ
ສ
ື ອ
ັ
ລ
-
ອ
ິ
ນ
ຊ
ັ
ອ
ຟ
[1] ວ
ົ
ານ
ໄ
ດ
ກ
 າ
ວ
ອ

ອາມຕາຍນັ້ນເປັນສິ່ງທີ່ບັງຄັບ, ແລະ ເດັກໃນທ້ອງກໍ່ແມ່ນຊີວິດທີ່ຖືກປົກປ້ອງ, ດັ່ງນັ້ນການຊ່ອຍຊີວິດລາວຈຶ່ງເປັນສິ່ງທີ່ບັງຄັບ. ອັລລໍ່ຫ໌ເປັນຜູ້ຊົງຮອບຮູ້ຍິ່ງ.

ຂໍ້ຕັກເຕືອນ: ໃນບັນດາກໍລະນີທີ່ອະນຸຍາດໃຫ້ຍຸຕິການຖືພາໄດ້ ດັ່ງທີ່ກ່າວມາຂ້າງເທິງນັ້ນ, ຈຳເປັນຕ້ອງໄດ້ຮັບການອະນຸຍາດຈາກຜູ້ທີ່ມີສິດໃນການຖືພານັ້ນ ເຊັ່ນ: ສາມີ.

ມາຮອດນີ້ກໍ່ສິ້ນສຸດສິ່ງທີ່ພວກເຮົາຕ້ອງການອະທິບາຍໃນປະເດັນທີ່ສຳຄັນນີ້, ເຊິ່ງພວກເຮົາໄດ້ກ່າວເຖິງໂດຍຫຍໍ້ສະເພາະຫຼັກການພື້ນຖານ ແລະ ຫຼັກເກນຂອງບັນຫາຕ່າງໆ. ເພາະຖ້າຈະລົງເລິກໃນລາຍລະອຽດປີກຍ່ອຍ ແລະ ບັນຫາຕ່າງໆ ທີ່ເກີດຂຶ້ນກັບແມ່ຍິງນັ້ນ ມັນກໍ່ເປັນເລື່ອງທີ່ກວ້າງຂວາງດົ່ງທະເລທີ່ໄຮ້ຊາຍຝັ່ງ. ແຕ່ວ່າຜູ້ທີ່ມີຄວາມເຂົ້າໃຈຢ່າງເລິກເຊິ່ງ ສາມາດເຊື່ອມໂຍງບັນຫາຍ່ອຍກັບຄືນສູ່ຫຼັກການພື້ນຖານ ແລະ ລາຍລະອຽດໄປສູ່ຫຼັກການລວມ ແລະ ຂໍ້ກຳນົດຂອງມັນ ແລະ ປຽບທຽບສິ່ງຕ່າງໆ ກັບສິ່ງທີ່ຄ້າຍຄືກັນ.

ແລະ ມຸຟຕີ (ຜູ້ຊີ້ຂາດບັນຫາສາສະໜາ) ຕ້ອງຮູ້ວ່າ ຕົນເອງເປັນສື່ກາງລະຫວ່າງອັລລໍ່ຫ໌ ແລະ ປວງບ່າວຂອງພຣະອົງ ໃນການເຜີຍແຜ່ສິ່ງທີ່ບັນດາສາສະດາທູດຂອງພຣະອົງໄດ້ນຳມາ ແລະ ອະທິບາຍມັນໃຫ້ແກ່ປວງບ່າວ, ແລະ ລາວຕ້ອງຮັບຜິດຊອບຕໍ່ສິ່ງທີ່ມີຢູ່ໃນຄຳພີອັລກຸຣອານ ແລະ ແບບຢ່າງຂອງສາສະນະທູດ (ອັລ-ຊຸນນະຫ໌), ເພາະທັງສອງນັ້ນຄື ສອງແຫຼ່ງທີ່ມາຫຼັກ ທີ່ບ່າວໄດ້ຖືກບັນຊາໃຫ້ເຮັດຄວາມເຂົ້າໃຈ ແລະ ປະຕິບັດຕາມ. ທຸກສິ່ງທີ່ຂັດກັບພຣະຄຳພີ (ອັລກຸຣອານ) ແລະ ແບບຢ່າງ (ອັລ-ຊຸນນະ) ຍ່ອມເປັນສິ່ງທີ່ຜິດພາດ, ຈຳເປັນຕ້ອງຖືກປະຕິ

ເສດ ແລະ ບໍ່ອະນຸຍາດໃຫ້ປະຕິບັດຕາມ, ເຖິງແມ່ນວ່າຜູ້ທີ່ກ່າວມັນອາດຈະໄດ້ຮັບການອະໄພ ເພາະເປັນຜູ້ທີ່ພາກພຽນໃນການສະແຫວງຫາຄຳຕອບ (ມຸຈຕະຮິດ) ແລະ ຈະໄດ້ຮັບຜົນບຸນຕອບແທນໃນຄວາມພະຍາຍາມຂອງລາວ, ແຕ່ສຳລັບຜູ້ອື່ນທີ່ຮູ້ເຖິງຄວາມຜິດພາດນັ້ນ, ບໍ່ອະນຸຍາດໃຫ້ລາວຍອມຮັບມັນ.

ຈຳເປັນສຳລັບຜູ້ຊີ້ຂາດບັນຫາສາສະໜາ (ມຸຟຕີ) ທີ່ຈະຕ້ອງມີເຈດຕະນາອັນບໍລິສຸດໃຈຕໍ່ອັລລໍຮ໌, ຂໍຄວາມຊ່ວຍເຫຼືອຈາກພຣະອົງໃນທຸກໆ ເຫດການທີ່ປະສົບ, ແລະ ວິງວອນຂໍຕໍ່ພຣະອົງໃຫ້ຊີ້ນຳທາງຄວາມໜັກແໜ້ນ ແລະ ການຊີ້ນຳພາໄປສູ່ສິ່ງທີ່ຖືກຕ້ອງ.

ແລະ ລາວຈຳເປັນຕ້ອງຍຶດຖືເອົາສິ່ງທີ່ໄດ້ກ່າວໄວ້ໃນ ພຣະຄຳພີອັລ-ກຸຣອານ ແລະ ຊຸນນະຮ໌ຂອງທ່ານນະບີ ເປັນຫຼັກໃນການພິຈາລະນາ, ໂດຍການພິຈາລະນາ ແລະ ຄົ້ນຄວ້າໃນເລື່ອງດັ່ງກ່າວ ຫຼື ຈາກຄຳເວົ້າຂອງບັນດານັກວິຊາການ ເພື່ອຊ່ວຍໃນການເຮັດຄວາມເຂົ້າໃຈທັງສອງແຫຼ່ງທີ່ມານັ້ນ.

ແລະ ຫຼາຍໆຄັ້ງທີ່ເກີດມີບັນຫາໃດໜຶ່ງຂຶ້ນ, ມະນຸດກໍຈະຄົ້ນຄວ້າກ່ຽວກັບມັນຈາກຄຳເວົ້າຂອງບັນດາຜູ້ຮູ້ເທົ່າທີ່ລາວສາມາດເຮັດໄດ້, ແຕ່ກໍບໍ່ພົບສິ່ງທີ່ເຮັດໃຫ້ລາວໝັ້ນໃຈໃນຄຳຕັດສິນນັ້ນ, ແລະ ບາງທີກໍບໍ່ພົບວ່າມີການກ່າວເຖິງສິ່ງນັ້ນເລີຍ, ເມື່ອໄດ້ກັບໄປຫາອັລກຸຣອານ ແລະ ຊຸນນະຫ໌ຂອງທ່ານນະບີ, ຂໍ້ຕັດສິນຂອງທັງສອງກໍຈະເປັນທີ່ປະຈັກແຈ້ງ ແລະ ເຂົ້າໃຈງ່າຍ, ທັງນີ້ກໍຂຶ້ນຢູ່ກັບຄວາມບໍລິສຸດໃຈ, ຄວາມຮູ້ ແລະ ຄວາມເຂົ້າໃຈ.

ຜູ້ຊົງຄຸນນະວຸດທີ່ອອກຄຳຕັດສິນບັນຫາສາສະໜາ (ມຸຟ ຕີ) ຈຳເປັນຕ້ອງໄຕ່ຕອງຢ່າງຮອບຄອບໃນການອອກຄຳຕັດ ສິນ ເມື່ອປະສົບບັນຫາທີ່ສັບສົນ, ແລະ ບໍ່ໃຫ້ຮີບຮ້ອນ. ເພາະມີ ຄຳຕັດສິນຈຳນວນຫຼວງຫຼາຍທີ່ລາວໄດ້ຮີບຮ້ອນຕັດສິນໄປ, ຫຼັ ງຈາກນັ້ນບໍ່ດົນ ເມື່ອໄດ້ກັບມາພິຈາລະນາໃໝ່ ກໍປາກົດແຈ້ງ ແກ່ລາວວ່າ ຕົນເອງໄດ້ຕັດສິນຜິດພາດໄປ. ແລ້ວລາວກໍຈະຮູ້ ສຶກເສຍໃຈກັບສິ່ງນັ້ນ, ແລະ ບາງທີລາວກໍອາດຈະບໍ່ສາມາດແ ກ້ໄຂສິ່ງທີ່ຕົນໄດ້ອອກຄຳຕັດສິນ (ຟັດວາ) ໄປແລ້ວນັ້ນໄດ້ເລີ ຍ!.

ສຳລັບຜູ້ໃຫ້ຄຳຕັດສິນ, ຫາກຜູ້ຄົນຮັບຮູ້ວ່າລາວເປັນຄົນທີ່ ມີຄວາມຮອບຄອບ ແລະ ໄຕ່ຕອງຢ່າງລະອຽດ, ພວກເຂົາກໍ່ຈະ ໄວ້ວາງໃຈ ແລະ ຍຶດຖືຄຳເວົ້າຂອງລາວ. ແຕ່ຫາກພວກເຂົາເຫັ ນວ່າລາວເປັນຄົນຟ້າວຟັ່ງ, ແລະ ຄົນທີ່ຟ້າວຟັ່ງນັ້ນມັກຈະຜິດ ພາດ, ພວກເຂົາກໍ່ຈະບໍ່ມີຄວາມເຊື່ອໝັ້ນໃນຄຳຕັດສິນຂອງ ລາວ.

ດັ່ງນັ້ນ ດ້ວຍຄວາມຟ້າວຟັ່ງ ແລະ ຄວາມຜິດພາດຂອງລາ ວ, ລາວຈຶ່ງເຮັດໃຫ້ຕົນເອງ ແລະ ຜູ້ອື່ນພາດໂອກາດທີ່ຈະໄດ້ຮັ ບປະໂຫຍດຈາກຄວາມຮູ້ ແລະ ຄວາມຖືກຕ້ອງທີ່ລາວມີຢູ່.

ເຮົາຂໍຈາກອັລລໍ ຜູ້ຊົງສູງສົ່ງ ໃຫ້ພຣະອົງໄດ້ໂປດຊົງຊີ້ນຳ ພວກເຮົາ ແລະ ບັນດາອ້າຍນ້ອງມຸສລິມຂອງພວກເຮົາ ສູ່ແນ ວທາງຂອງພຣະອົງທີ່ທ່ຽງຕົງ, ຊົງຄຸ້ມຄອງພວກເຮົາດ້ວຍກາ ນເອົາໃຈໃສ່ຂອງພຣະອົງ, ແລະ ຊົງປົກປ້ອງດູແລພວກເຮົາຈາ ກຄວາມຜິດພາດບໍ່ໄດ້ຕັ້ງໃຈ , ແທ້ຈິງພຣະອົງຊົງເປັນຜູ້ໂອບອ້ ອມອາລີ, ຜູ້ຊົງເມດຕາຍິ່ງ; ຂໍສໍລະອາດ ແລະ ສະລາມຈາກອັລ

ລ໋ຫ໌ຈົ່ງປະສົບແດ່ທ່ານນະບີຂອງເຮົາ ມຸຮຳມັດ, ພ້ອມດ້ວຍວົງ
ວານ ແລະ ບັນດາສາວົກຂອງທ່ານທັ້ງໝົດ. ແລະ ມອບການສັ
ນລະເສີນເປັນຂອງອັລລ໋ຫ໌ ຜູ້ເຊິ່ງດ້ວຍຄວາມໂປດປານຂອງ
ພຣະອົງ ການງານອັນດີງາມທັ້ງຫຼາຍຈຶ່ງສົມບູນ.

ສິ້ນສຸດ ນາມປາກກາດ້ວຍບ່າວຄົນຈົນຜູ້ໜຶ່ງ ນະ ທີ່ອັລລ໋ຫ໌
ມຸຮຳມັດ ອັສ ລໍແລະຫ໌ ອັລອຸໄຊມິນ
ໃນຍາມສາຍຂອງວັນສຸກ
14 ຊະອ໌ບານ ປີ 1392 ຮ.ສ.

***

الفهرس

ບົດຄວາມອ່າດ້ວຍເລື່ອງ ເລືອດປະຈຳເດືອນຂອງແມ່ຍິງ.....2

ບົດທີ່ໜຶ່ງ: ຄວາມຫມາຍ ແລະ ວິທະຍາປັນຍາຂອງການມີປະຈຳເດືອນ 5

ບົດທີສອງ : ເວລາ ແລະ ໄລຍະຂອງເລືອດປະຈຳເດືອນ.....6

ບົດທີສາມ : ອ່າດ້ວຍສະພາບທີ່ຜິດປົກກະຕິຂອງເລືອດປະຈຳເດືອນ 19

ບົດທີ່ສີ່ : ອ່າດ້ວຍຂໍ້ກ່ຳໜົດຂອງເລືອດປະຈຳເດືອນ.....26

ພາກທີຫ້າ: ອ່າດ້ວຍເລື່ອງອິສຕິຮາເດາະຫ໌ (ເລືອດທີ່ຜິດປົກກະຕິຂອງແມ່ຍິງ) ແລະ ຂໍ້ກ່ຳໜົດຕ່າງໆ ຂອງມັນ.....52

ກ໋ລະນີຕ່າງໆ ຂອງອິສຕິຮາເດາະຫ໌:.....53

ສະພາບຂອງຜູ້ຍິງທີ່ຄ້າຍຄືກັບຜູ້ເປັນມຸສຕະຮາເດາະຫ໌: 60

ຂໍ້ກ່ຳນົດຕ່າງໆ ກ່ຽວກັບເລືອດອິສຕິຮາເດາະຫ໌ ມີດັ່ງນີ້: 62

ພາກທີ່ຫົກ: ເລື່ອງກ່ຽວກັບເລືອດນິຟາສ ແລະ ບົດບັນຍັດຂອງມັນ 65

ບັນດາຂໍ້ກ່ຳນົດກ່ຽວກັບເລືອດຫລັງການເກີດລູກ: 68

ພາກທີ່ເຈັດ: ອ່າດ້ວຍການນ່າໃຊ້ສິ່ງທີ່ປ້ອງກັນການມີປະຈຳເດືອນ ຫຼື ເລັ່ງໃຫ້ມັນມາ, ແລະ ສິ່ງທີ່ປ້ອງກັນການຖືພາ ຫລື ເຮັດໃຫ້ແທ້ງລູກ..... 73

❋❋❋

lo130v3.0 - 10/08/2026

حرمين

رئاسة الشؤون الدينية
بالمسجد الحرام والمسجد النبوي

رسالة الحرمين

ສານຈາກສອງສະຖານທີ່ ແຫ່ງຄວາມສັກສິດ

ເນື້ອຫາຄຳແນະນຳທາງສາສະໜາ
ສຳຫຼັບຜູ້ທີ່ເດີນທາງສູ່ມັສຍິດອັລຫະຣອມ
ແລະ ມັສຍິດອັນນະບະວີ ໃນພາສາຕ່າງໆ

978-603-8534-63-2